# ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-7
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 8-10, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10, Easter Lesson
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ລູກໜີ້ສອງຄົນ: ສະແດງຄວາມຮູ້ບຸນຄຸນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 7: 36-50

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 7:36-50

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຄົນຮັບໃຊ້ ແລະ ຮັກພຣະເຈົ້າ ກໍແມ່ນເພື່ອຢາກລະລຶກເຖິງພຣະຄຸນອັນຍິ່ງໃຫຍ່ໃນການໃຫ້ອະພັຍໂທດ ແລະກໍໄດ້ຮັບການຊົງໄຖ່ນັ້ນ.

**ຄຳຖາມເພື່ອສຳຣວດ:** ທ່ານມີສິ່ງໃດທີ່ຈະລະນຶກເຖິງພຣະຄຸນຂອງພຣະອົງທີ່ໄດ້ໃຫ້ອະພັຍໂທດແກ່ເຮົາ ທ່ານຈະສະແດງອອກຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະສອນໃຫ້ພວກເຮົາຮູ້ວ່າ ຄຸນຄ່າທີ່ພວກເຮົາຄວນສະແດງອອກໃນການຮູ້ບຸນຄຸນໃນການໃຫ້ອະພັຍຄືແນວໃດ ແລະ ຈະເຮັດຢ່າງໃດ?

## ຄຳນຳ

ມີປີນຶ່ງ ຂ້າພະເຈົ້າໄດ້ໄປຮ່ວມສຳມະນາຜູ້ນຳ ທີ່ ແຄ້ມ ແຫ່ງນຶ່ງ ຊຶ່ງຫົວຂໍ້ນັ້ນບອກວ່າ "ສແວງຫາຄວາມຮັກຂອງພຣະເຈົ້າ" ເມື່ອສຳມະນາຜ່ານໄປນຶ່ງວັນແລ້ວ ຂ້າພະເຈົ້າຈຶ່ງຖາມຕົວເອງວ່າ ແມ່ນໃຜເປັນຜູ້ທີ່ຮັກເຮົາກ່ອນ. ຂ້າພະເຈົ້າມຶນງົງ. ຂ້າພະເຈົ້າຖາມຜູ້ນັ້ນຜູ້ນີ້ ຖາມຄຳຖາມໃນກອງປະຊຸມ. ຂ້າພະເຈົ້າຮູ້ວ່າ ຂ້າພະເຈົ້າເຮັດວຽກໃຫ້ພຣະເຈົ້າຫລາຍ, ແຕ່ສິ່ງນຶ່ງທີ່ຂ້າພະເຈົ້າຈຳໄດ້ກໍຄືວ່າ ຂ້າພະເຈົ້າບໍ່ໄດ້ ທຳງານຝ່າຍຈິດວິນຍານ.

ພວກເຮົາຮັບໃຊ້ເພື່ອຢາກໃຫ້ພຣະເຈົ້າຮັກເຮົາ ຫລືວ່າ ພຣະເຈົ້າຊົງຮັກເຮົາກ່ອນແລ້ວ. ບາງທ່ານກໍໄດ້ແບ່ງປັນຂອງປະທານທີ່ພຣະເຈົ້າໄດ້ປະທານໃຫ້ແລ້ວ, ບາງທ່ານ ເມື່ອໄດ້ຮັບຈາກພຣະເຈົ້າແລ້ວ ກໍໄດ້ຖວາຍໃຫ້ພຣະອົງຄືນ ແລະ ແບ່ງປັນຄົນອື່ນໆນຳ. ພວກເຮົາແມ່ນຜູ້ນຶ່ງໃນຕົວຢ່າງທີ່ເຮົາຈະໄດ້ຮຽນນຳກັນໃນວັນນີ້ ເມື່ອຮຽນຫມົດແລ້ວເຮົາຈະຮູ້ຕົວພວກເຮົາເອງວ່າເຮົາແມ່ນຜູ້ໃດ?

## ໃຫ້ເພື່ອຈະໄດ້ຮັບຄືນ (7:36-43)

ພຣະເຢຊູຊົງມີຄວາມຫຍຸ້ງຍາກຫລາຍ ໃນເຂດແຄວ້ນຄາລີເລ, ທີ່ຕັ້ງຢູ່ຈ້າຍພູ ພາກເຫນືອ ຂອງອິສຣາເອນ. ເປັນດິນແດນ ທີ່ອຸດົມສົມບູນໄປດ້ວຍປຸຍທັມຊາດ. ຖ້າຈະເວົ້າແລ້ວ ກໍແມ່ນເປັນດິນແດນບ້ານເກີດຂອງພຣະເຢຊູ. ປະຊາຊົນໃນແຖບນີ້ ໄດ້ເຫັນພຣະເຢຊູ ເຕີບໃຫຍ່ ແຕ່ວ່າມີໜ້ອຍຄົນທີ່ຈະຮູ້ຈັກແທ້ວ່າພຣະອົງແມ່ນໃຜ. ພຣະເຢຊູເລີ້ມຕົ້ນປ່າວປະກາດໃນແຖບນີ້ ແລະກິດຕິສັບຂອງພຣະອົງກໍຊ່າລືໄປ (ລູກາ 4:14-15)

ຖ້າຢ່າງນັ້ນ ພຣະເຢຊູຜູ້ນີ້ແມ່ນໃຜ? ບາງຄົນກໍວ່າພຣະອົງແມ່ນຜູ້ທຳນວາຍ(7:16) ສາວົກຂອງໂຢຮັນເຫັນພຣະອົງເຫມືອນກັບໂຢຮັນ (7:18) ໃນບົດຮຽນຂອງອາທິດນີ້ ພວກເຮົາຈະໄດ້ຮຽນຄວາມຈິງເຣື່ອງພຣະເຈົ້າ ວ່າພຣະອົງເປັນຜູ້ໃດ.

ທຳອິດພວກເຮົາຈະມາພົບຜູ້ທີ່ເຊື້ອເຊີນພຣະເຢຊູ. ຊີໂມນເປັນຄົນຟາຣີຊາຍ. ຟາຣີຊາຍແມ່ນຄົນກຸ່ມນຶ່ງທີ່ຢູ່ໃນປະເທດອິສຣາເອນສມັຍເກົ່າແກ່, ພວກນີ້ບໍ່ເຄີຍມີຫລາຍເກີນກວ່າ 6,000 ຄົນຈັກເທື່ອ. ຊື່ຂອງພວກ

ນີ້ມີຄວາມໝາຍວ່າ "ກຸ່ມແບ່ງແຍກ" ເພາະພວກເຂົາໄດ້ແບ່ງແຍກຕົວເຂົາເອງອອກຈາກຝູງຊົນທັມດາ ເພື່ອສັງເກດການ ກົດບັນຍັດຂອງພວກຍິວ. ພວກເຂົາພາກັນຕໍ່ຕ້ານພຣະເຢຊູ ແລະກໍໄດ້ອາຍັດພຣະອົງຈົນເຖິງແກ່ຄວາມຕາຍ.

ຕໍ່ໄປພວກເຮົາມາເບິ່ງການຮ່ວມໂຕະອາຫານກັບພຣະເຢຊູ, ການຮ່ວມໂຕະນີ້ແມ່ນຢູ່ໃນເມືອງກາເປນາອູມ, ເຂດນີ້ພຣະເຢຊູຮູ້ດີ. ຍິງຄົນນີ້ ກໍຮູ້ວ່າພຣະເຢຊູຈະມາທີ່ນັ້ນ ທີ່ເຮືອນຂອງຊີໂມນ.

ໃນພຣະທັມລັມພີກ່າວວ່າ ເມື່ອພຣະອົງໄດ້ຖືກເຊື້ອເຊີນໃຫ້ເຂົ້າໄປໃນເຮືອນແລ້ວ ພຣະອົງກໍຊົງປະທັບລົງ. (7:36) ທັມນຽມຂອງຄົນຍິວ ເວລານັ່ງກິນເຂົ້າແມ່ນນັ່ງເທົ່ງໄປທາງຊ້າຍ. ຖ້າແມ່ນເຮົາຈະເວົ້າແລ້ວ ແມ່ນ ນັ່ງເທົ້າຊ້າຍ, ໃຊ້ມືຂວາກິນເຂົ້າ ຕີນຈະເດ່ອອກໄປຂ້າງຫລັງ. ນັ້ນຄືທັມນຽມ ທີ່ເຄີຍປະຕິບັດກັບຄົນແຂກ ແປກໜ້າ. ໃນຂະນະ ທີ່ພຣະອົງກໍາລັງສເວີຍອາຫານຢູ່ນັ້ນ, ກໍມີຍິງຊົ່ວຄົນນຶ່ງ ເຂົ້າມາແບບບໍ່ບອກ ໃຫ້ຜູ້ໃດຮູ້.

ໃນຂະນະນີ້ພວກເຮົາມາສຶກສາ ເບິ່ງຂອງຂວັນແລະຄວາມຮັກທີ່ຍິງຄົນນີ້ນຳມາ. ແຕ່ມາເບິ່ງຄຳເວົ້າຂອງຊີໂມນກ່ອນ. ຊີໂມນ ນຶກໃນໃຈວ່າ: "ຖ້າຜູ້ນີ້ແມ່ນຜູ້ປະກາດພຣະທັມ ເພິ່ນຄົງຈະໄດ້ຮູ້ວ່າ ຍິງຜູ້ຖືກຕ້ອງກາຍຂອງເພິ່ນເປັນຜູ້ໃດ ເພາະມັນເປັນຄົນຊົ່ວ." (7:39) ຊີໂມນໃຊ້ຄຳວ່າ "ຜູ້ນີ້" ໝາຍເຖິງພຣະເຢຊູຜູ້ຊົງເປັນຜູ້ທຳນວາຍ ລາວເອງກໍຕ້ອງຮູ້ວ່າຍິງຄົນນີ້ແມ່ນໃຜ. ແຕ່ພຣະເຢຊູບໍ່ແມ່ນຜູ້ທຳນວາຍທັມດາ ພຣະອົງຊົງເປັນພຣະເຈົ້າ ພຣະອົງຊົງຮອບຮູ້ດວງຈິດວິນຍານແຕ່ລະດວງ. ພຣະເຢຊູຮູ້ດວງຈິດວິນຍານຂອງນາງ, ຮູ້ທັງຄວາມຄິດຂອງຊີໂມນ, ຮູ້ທັງຄວາມຄິດຂອງທ່ານທັງຫລາຍ ແລະຂ້າພະເຈົ້າດ້ວຍ ແຕ່ຄົນ ຟາຣີຊາຍຄົນນີ້ຕາບອດ ບອດແມ້ກະທັ້ງຈິດວິນຍານຂອງເຂົາ.

ພຣະເຢຊູຈຶ່ງກ່າວວ່າ: ຊີໂມນເອີຍ ເຮົາມີສິ່ງນຶ່ງຈະເວົ້າກັບທ່ານ. (7:40) ແລ້ວພຣະເຢຊູກໍຍົກຄຳອຸປມາຂຶ້ນມາທັນທີ. ຄຳອຸປມາແມ່ນເລີ້ມຕົ້ນດ້ວຍການຢືມເງິນ. ໃນສມັຍຂອງພຣະເຢຊູ ຜູ້ມີເງິນມັກຈະເອົາເງິນໃຫ້ຄົນຢືມເພື່ອເອົາດອກເບັ້ຽ. ເຈົ້າໜີ້ຜູ້ນີ້ກໍຢູ່ໄດ້ດ້ວຍການເອົາເງິນໃຫ້ຄົນຢືມ.

ພວກເຮົາເລີຍມາຫາບ່ອນທີ່ສຳຄັນຂອງເຣື່ອງໂລດ ຄືເຈົ້າໜີ້ໄດ້ຊຳຣະໜີ້ໂດຍການບໍ່ໃຫ້ຈ່າຍຄືນ. ທ່ານຈະບໍ່ດີໃຈບໍ ຖ້າເຈົ້າໜີ້ບ້ານ ຫລືເຈົ້າໜີ້ຣົດຂອງພວກເຮົາ ຫາກບອກວ່າບໍ່ຕ້ອງຈ່າຍອີກຕໍ່ໄປແລ້ວຂ້ອຍຍົກໃຫ້ພວກເຈົ້າແລ້ວ.

ພຣະເຢຊູຍົກຕົວຢ່າງແບບນີ້ກໍແມ່ນເພື່ອຢາກຈະສອນຝ່າຍຈິດວິນຍານ. ເມື່ອເຂົາບໍ່ມີອັນໃດຈະໃຊ້ໜີ້ແລ້ວ ເຈົ້າໜີ້ຈຶ່ງໂຜດຍົກໜີ້ໃຫ້ເຂົາທັງສອງ ໃນສອງຄົນນັ້ນ ຄົນໃດຈະຮັກເຈົ້າໜີ້ຫລາຍກວ່າກັນ. (7:42) ຊີໂມນບໍ່ຮູ້ວ່າພຣະເຢຊູຫວັງຄຳຕອບປະເພດໃດ? ເຂົາຈຶ່ງກ່າວອອກໄປວ່າ: ຂ້ານ້ອຍຄິດວ່າ ຜູ້ທີ່ມີໜີ້ຫລາຍນັ້ນແລ້ວທ່ານເອີຍ. ຄຳວ່າ "ຄິດວ່າ" ໝາຍຄວາມວ່າລາວບໍ່ຮູ້ຄຳຕອບ ແລະຄຳຕອບກໍບໍ່ໄດ້ອອກມາຈາກໃຈ. ນາງຄົນນີ້ຢູ່ໃນຄວາມບາບຕລອດຊີວິດ (7:37) ລາວມີຄວາມກະຕັນຍູຕໍ່ພຣະເຢຊູ ທີ່ພຣະອົງຊົງຍົກໜີ້ຄວາມຜິດບາບໃຫ້ລາວ. ຊີໂມນຄົນຟາຣີຊາຍຄົນນີ້ກໍຕິດໜີ້ຝ່າຍຈິດວິນຍານເໝືອນກັນ ຊຶ່ງພວກເຮົາໄດ້ເຫັນພຣະເຢຊູກ່າວ ໃນຂໍ້ 44-46.

ຊີໂມນເປັນຄົນນັບຖືສາສນາຜູ້ທີ່ເຮັດເພື່ອຫວັງຢາກໄດ້ຄືນ, ລາວກະທຳສາສນາກິດເພື່ອອວດ, ລາວເຮັດເພື່ອ

ຢາກໄດ້ຄວາມຮັ່ງມີຂອງພຣະເຈົ້າ. ລາວເຊື່ອວ່າ ພຣະເຈົ້າຈະຕອບຄຳອະທິຖານຂອງລາວ ເພາະລາວຖວາຍຫລາຍ.

ບາງຄັ້ງພວກເຮົາກໍຄິດເຫມືອນກັນ. ນີ້ຄືຄຳຖາມ: ພວກທ່ານເປັນລູກຫນີ້ຄົນໃດ? ຜູ້ຍິງຊົ່ວ ຫລື ຊີໂມນຄົນຟາຣີຊາຍ.

## ໄດ້ມາເພື່ອຖວາຍ (7:44-50)

ຮູບທີ່ສະແດງໃນວັນນີ້ຄືຜູ້ຍິງຊົ່ວ "ຜູ້ຍິງຊົ່ວ, ຜູ້ຍິງທີ່ມີຄວາມຜິດບາບ" (7:37) ໃນພຣະຄັມພີກ່າວວ່ານາງໄດ້ເຮັດບາບໂດຍເຈຕນາ, ບໍ່ແມ່ນເຮັດບຶດນຶ່ງຄາວດຽວ ແຕ່ເຮັດເປັນປະຈຳ. ຄົນທັງເມື່ອຮູ້ວ່າລາວບໍ່ດີ.

ພວກເຮົາບໍ່ຮູ້ວ່າລາວເຮັດບາບນັ້ນມີຫຍັງແດ່. ແຕ່ການກະທຳຂອງລາວທີ່ຮ້ອງໄຫ້ແລະເອົາຜົມເຊັດພຣະບາດພຣະເຢຊູ ແມ່ນສະແດງວ່າ ລາວເຄີຍເປັນໂສເພນີມາແລ້ວ. ແລະເຮົາຍັງຮູ້ອີກວ່າລາວບໍ່ແມ່ນ ມາຣີອາມັກດາລາຫລື ມາຣີອາ ຊາວ ເບັດທານີ ເຖິງຈະເປັນຜູ້ໃດກໍແລ້ວແຕ່, ນາງກໍເປັນຜູ້ທີ່ມີຄວາມຮູ້ບຸນຄຸນ ຕໍ່ອົງພຣະເຢຊູ.

ການສະແດງຄວາມຮູ້ບຸນຄຸນຂອງລາວກໍຄືວ່າ ລາວໄດ້ຍົກກະອອມຫີນທີ່ເຕັມດ້ວຍ ນ້ຳຫອມ ມາທາພຣະບາດພຣະເຢຊູ. (7:37) ແລະນາງຍັງໄດ້ຈູບພຣະບາດຂອງພຣະອົງ (7:38) ສິ່ງທີ່ນາງເຮັດທັງຫມົດນີ້ຊີໂມນບໍ່ໄດ້ກະທຳຈັກຢ່າງເລີຍ. ເຮົາຈະເຫັນໄດ້ຢ່າງຄັກແນ່ແລ້ວວ່າ ແມ້ແຕ່ຍິງຄົນບາບຍັງຮູ້ຈັກການຮູ້ບຸນຄຸນຕໍ່ພຣະເຈົ້າ ຫລາຍກວ່າຟາຣີຊາຍ.

ບັດນີ້ກັບມາຫາພຣະຄຳອີກ, "ຄວາມຜິດບາບຂອງເຈົ້າຖືກຍົກເສັຽແລ້ວ." ເພາະລາວຮັກຫລາຍ ລາວກໍຄວນໄດ້ຮັບການອະພັຍຫລາຍ. ສຳລັບຜູ້ທີ່ໄດ້ຮັບການອະພັຍນ້ອຍ ກໍຮັກນ້ອຍ (7:47) ດັ່ງນັ້ນຈະເຫັນໄດ້ວ່າ ຄວາມຮັກເປັນຜົນໃນການໃຫ້ອະພັຍ. ພຣະເຢຊູຍັງໄດ້ກ່າວຍ້ຳອີກໃນຂໍ້ 48 ເຖິງການອະພັຍໂທດ.

ການກະທຳຢ່າງນີ້ ລູກາ ສະແດງໃຫ້ເຫັນວ່າ ພຣະເຢຊູບໍ່ແມ່ນ ຜູ້ປະກາດພຣະທັມເທົ່ານັ້ນແຕ່ພຣະອົງຍັງຊົງເປັນພຣະເຈົ້າດ້ວຍ. ເພາະໃນປວັດສາດຜ່ານມາ ບໍ່ມີຜູ້ປະກາດພຣະທັມຄົນໃດ ທີ່ຈະສາມາດ ອະພັຍບາບໄດ້. ການສະແດງທ່າທີອອກຂອງຜູ້ຮ່ວມພາເຂົ້າ (7:49) ແຂກຄົນອື່ນທີ່ຖືກເຊີນມາກໍເຫັນ. ກ່ອນຫນ້ານີ້ ພວກນັກທັມແລະພວກຟາຣີຊາຍກໍກ່າວໄປແລ້ວ (5:21) ພຣະອົງກໍຍັງໄດ້ກ່າວເຖິງຝ່າຍພຣະວິນຍານ ກ່ອນທີ່ເຂົາຈະນຳພຣະອົງໄປສູ່ການປະຫານ. (22:66-71)
ພຣະເຢຊູຊົງກ່າວຕໍ່ຍິງນັ້ນວ່າ "ຄວາມເຊື່ອຂອງເຈົ້າເຮັດໃຫ້ເຈົ້າພົ້ນ ຈົ່ງໄປເປັນສຸກເຖີ້ນ" (7:50) ຄວາມເຊື່ອຂອງລາວ ໄດ້ເຮັດໃຫ້ລາວໄດ້ຮັບຄວາມລອດພົ້ນ. ປັດຈຸບັນນີ້ ລາວລອດພົ້ນແລ້ວ ລາວໄດ້ກ້າວອອກໄປເປັນສຸກແລ້ວ. ດັ່ງນັ້ນໃນຫມູ່ພວກເຮົາອາດຈະມີບາງຄົນທີ່ເປັນດັ່ງນັ້ນດ້ວຍ.

## ບົດຮຽນສຳລັບພວກເຮົາ

ລູກາບໍ່ໃສ່ຊື່ຍິງຄົນນີ້ ບາງທີ່ລາວອາດຈະຈົ່ງຫວ່າງໄວ້ ເພື່ອເຮົາຈະໄດ້ເອົາຊື່ເຮົາເອງໃສ່. ຄວາມບາບຂອງເຮົາໄດ້ຖືກຊຳຣະແລ້ວຫລື? ທ່ານແນ່ໃຈບໍວ່າຈະໄດ້ໄປໃຊ້ຊີວິດຕລອດໄປທີ່ສວັນ ບໍ່ແມ່ນຫມົ້ນະຣົກ? ຈະຢູ່ກັບພຣະເຈົ້າຫລືຢູ່ກັບຊາຕານ? ເວລາໃດເປັນເທື່ອຫລ້າສຸດທີ່ທ່ານຂອບພຣະຄຸນພຣະເຈົ້າ?

ທ່ານມີປະຕິກິຣິຍາຢ່າງໃດໃນການທີ່ຮຽນການຮູ້ບຸນຄຸນຂອງພຣະເຈົ້າ? ທ່ານເປັນຜູ້ທີ່ໄດ້ຮັບພຣະພອນແລ້ວຫລືຍັງ? ທ່ານຈະສາມາດຖອກຂັນນ້ຳຫອມອັນມີຣາຄາແພງຂອງທ່ານ ຊະໂລມພຣະບາດຂອງພຣະເຢຊູໄດ້ບໍ່? ທ່ານສາມາດຖວາຍຊີວິດຕອບແທນພຣະອົງໄດ້ບໍ່?

ຊີໂມນຟາຣີຊາຍແມ່ນຊື່ຂອງທ່ານບໍ່? ຫລືທ່ານເປັນຄົນນັ້ນບໍ່? ຫລືທ່ານເປັນຄົນທີສາມ?

## <u>ຄຳຖາມ</u>

1. ລູກາ ໄດ້ສອດຄຳອຸປມານີ້ໃສ່ໃນພຣະກິດຕິຄຸນຂອງທ່ານກໍເພາະວ່າ ຢາກໃຫ້ພວກເຮົາເຫັນວ່າ ພຣະເຢຊູບໍ່ແມ່ນຜູ້ປະກາດພຣະທັມ ທັມດາ ແຕ່ພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ. ຖ້າແມ່ນໃນສມັຍນີ້ ພວກເຮົາຈະທຽບໃສ່ສິ່ງໃດ?

2. ເປັນຫຍັງທ່ານຈຶ່ງປຽບຕົວຂອງທ່ານເອງໃສ່ກັບຊີໂມນ ທີ່ເຊີນພຣະເຢຊູເຂົ້າມາໃນບ້ານ? ປັດຈຸບັນນີ້ຍັງຈະມີຄົນທີ່ກະທຳເຫມືອນຊີໂມນຢູ່ບໍ່? ເປັນຫຍັງຈຶ່ງວ່າດັ່ງນັ້ນ?

3. ຄວາມກ້າຫານແລະການເສັຽສະລະຂອງຍິງນັ້ນແມ່ນສະແດງເຖິງຫຍັງ?

4. ຄວາມບາບທີ່ທ່ານຢາກໃຫ້ພຣະເຢຊູຊຳຣະທີ່ສຸດໃນຕົວທ່ານແມ່ນບາບປະເພດໃດ?

5. ທ່ານຮູ້ບໍ່ວ່າ ອາທິດນີ້ ຊີໂມນຟາຣີຊາຍຈະຢູ່ບ້ານຫລັງໃດໃນອາທິດນີ້?

## ບົດຮຽນທີ 2
## ຈົ່ງອອກໄປກະທຳດ້ວຍຄວາມຮັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 10:25-37
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 10:25-37
**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ທີ່ມີຄວາມເຊື່ອຢ່າງແທ້ຈິງ ຈະນຳຄົນມາເຖິງພຣະເຈົ້າດ້ວຍຄວາມຮັກ ຫ່ວງໃຍໃນຄວາມຕ້ອງການຂອງຄົນອື່ນ.
**ຄຳຖາມເພື່ອສຳຣວດ:** ແມ່ນໃຜຄືເພື່ອນບ້ານຂອງທ່ານ, ທ່ານກອມລອມໄປເຖິງໃສ?
**ຈຸດປະສົງຂອງບົດຮຽນ:** ເພື່ອຈະສັ່ງຊາຕິລາຄາວ່າ ການເປັນຊາວຊາມາເຣັຽຜູ້ໃຈດີຂອງຂ້ອຍ ເປັນແວ່ນແຍງໃນຊີວິດຂ້ອຍບໍ່?

### ຄຳນຳ

ຍຸກໄມໂຄຣເວບ (Microwave). ໄມໂຄຣເວບ ປ່ຽນແປງຊີວິດພວກເຮົາຫລາຍ, ນັກສັງຄົມສາດທ່ານນຶ່ງ ກ່າວວ່າ " ເຮັດເຂົ້າຕອກແຕກ ຫລື ປ໊ອບຄອນຕ້ອງໃຊ້ເວລາ 5 ຫາ 10 ນາທີ ຊົ່ວໜໍ້ຊີຮ້ອນຊົ່ວມັນຈະແຕກ ໂພງຂຶ້ນມາ, ແຕ່ທຸກມື້ນີ້ 2 ນາທີ ໄດ້ກິນໂລດ."

ຮ້ານອາຫານບາງຮ້ານ ມີບ່ອນພິເສດເພື່ອຈະໄດ້ໃຊ້ ໂທຣະສັບມືຖື, ເພື່ອເວລາກິນເຂົ້າຈະໄດ້ຄຸຍກັນທາງໂທ ຣະສັບດ້ວຍ. ບາງຄັ້ງກໍກິນອາຫານຢູ່ຂ້າງໆອ່າງລ້າງຖ້ວຍ. ທັງໝົດນີ້ແມ່ນຄຸນຄ່າຂອງເວລາ ຫລືອີກຢ່າງ ນຶ່ງວ່າເວລາເປັນເງິນເປັນທອງ. ບົດຮຽນທີ່ຈະຮຽນໃນວັນນີ້ກໍຄືວ່າ ເຮົາຈະສູ້ກັບເວລາຢ່າງໃດ ຫລືວ່າ ອັນ ໃດເປັນອັນກ່ອນ ອັນລຸນ ແລະອັນໃດມີຄຸນຄ່າຫລາຍກວ່າກັນ: ມະນຸດຫລືສິ່ງຂອງ? ສາຍພົວພັນ ຫລື ຄວາມ ຮັບຜິດຊອບ? ຈິດວິນຍານຫລືຄວາມສຳເຣັດ?

### ຊອກສແວງຫາຊີວິດ

ສາຣະຄະດີເກົ່າໆຂອງຊາວຢິວ, ທີ່ມີຄຳຖາມເລື້ອຍໆວ່າ: ຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຊີວິດອັນຕລອດໄປ ເປັນນິດ. ລູກາ 10:25. ເມື່ອເຮົາຫາກອ່ານອີກຕໍ່ໄປ ຈະເຫັນໄດ້ວ່າ ຜູ້ຖາມຄຳຖາມນີ້ ແລະຜູ້ຕອບແມ່ນຄົນໆ ດຽວກັນ.

ເວລານັ້ນ ເປັນເວລານຶ່ງເດືອນ ກ່ອນທີ່ພຣະເຢຊູຈະຖືກປະຫານຊີວິດເທິງໄມ້ກາງແຂນ. ອາທິດຜ່ານມາພວກ ເຮົາ ໄດ້ສຶກສາກ່ຽວກັບຄຳອຸປມາຂອງພຣະເຢຊູ ລູກາ 7:36-50, ພຣະອົງໄດ້ສອນສາວົກຂອງພຣະອົງ ເຣື່ອງຫວ່ານເມັດພືດຂອງພຣະກິດຕິຄຸນ ແລະ ເປັນແສງສວ່າງ ເໝືອນດັ່ງໂຄມໄຟ ແລະ ກ່າວເຖິງຍາດພີ່ ນ້ອງຂອງພຣະອົງດ້ວຍ. ລູກາ 8:1-21; ພຣະອົງໄດ້ຫ້າມລົມພະຍຸ ແລະປິ່ນປົວຄົນຜີສິງ, ປິ່ນປົວລູກສາວ ເຈົ້ານາຍ ແລະຜູ້ຍິງເລືອດຕົກ. ລູກາ 8:22:56. ພຣະອົງສົ່ງສາວົກອອກໄປ, ພຣະອົງລ້ຽງຄົນ 5,000 ຄົນ ຮັບຄຳກ່າວຂອງເປໂຕວ່າ ພຣະອົງຊົງເປັນພຣະຄຣິດ, ພຣະອົງຊົງປ່ຽນພຣະລັກສະນະ, ຊົງປິ່ນປົວເດັກນ້ອຍ, ແລະຊົງຮຽກເອີ້ນເອົາສາວົກຜູ້ທີ່ສມັກໃຈຕິດຕາມພຣະອົງໄປ.

ເມື່ອມາເຖິງບົດທີ 10:25 ເຮົາຈະເຫັນຄຳວ່າ "ທັມບັນດິດ" ທັມບັນດິດນີ້ ແປວ່ານັກປາດ ຮູ້ທຸກຢ່າງກ່ຽວ

ກັບສາສນາ, ເປັນອາຈານສອນສາສນາຂອງຊາວຢິວ.

ໃນທີ່ນີ້ອາດຈະເປັນເວລາທີ່ນັ່ງສົນທະນາກັນເຖິງເຣື່ອງພຣະຄຳຂອງພຣະເຈົ້າ ໃນພຣະວິຫານ. ທັນບັນດິດຄົນນຶ່ງລຸກຢືນຂຶ້ນ ວາງຄຳຖາມເພື່ອຈະທົດລອງພຣະເຢຊູ. ພຣະອົງພຣະຊົງປຣີຊາສາມາດ ພຣະອົງຊົງເອົາຊະນະມານຊາຕານ ໂດຍໃຊ້ພຣະຄຳຂອງພຣະອົງ. ເຂົາຖາມພຣະອົງວ່າ: ຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ຊີວິດອັນຕລອດໄປເປັນນິດ? "ຈະຕ້ອງເຮັດ" ເປັນຄຳກິຣິຍາ ໝາຍຄວາມວ່າຈະຕ້ອງເຮັດສິ່ງໃດສິ່ງນຶ່ງເພື່ອຈະຂຶ້ນໄປສວັນ.

ຄົນຢິວໃນສມັຍຂອງພຣະເຢຊູນັ້ນ ແມ່ນຕ້ອງຮັກສາພຣະບັນຍັດ ຈຶ່ງຈະໄດ້ໄປສວັນ. ຄົນລາວກໍເຫັນພ້ອມດ້ວຍ, ຄົນໄທກໍເຫັນພ້ອມດ້ວຍ, ຄົນອະເມຣິກາກໍເຫັນພ້ອມເໝືອນກັນ. ຖ້າພວກເຮົາຫາກເຊື່ອພຣະເຈົ້າແລ້ວກະທຳດີກໍໄປສວັນໄດ້ໂລດ. ຜິດ, ຜິດ. ພຣະເຢຊູຖາມເຈາະໃຈຄົນໆນັ້ນອີກວ່າ (10:26) ໃນພຣະບັນຍັດມີຄຳຂຽນໄວ້ວ່າຢ່າງໃດ? ຊາຍຄົນນັ້ນກໍຍົກເອົາ ພຣະທັມ ພຣະບັນຍັດສອງ 6:5 ຈົ່ງຮັກພຣະເຈົ້າດ້ວຍສຸດຈິດສຸດໃຈ ແລະສິ້ນສຸດກຳລັງຂອງເຈົ້າ ລະບຽບພວກເລວີ 19:18 ແຕ່ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ. ພຣະເຢຊູຕອບວ່າ ແມ່ນແລ້ວຈົ່ງໄປເຮັດແລ້ວຈະໄດ້ຊີວິດ ລູກາ 10:28. ເບິ່ງເໝືອນວ່າເປັນຂອງງ່າຍ ແຕ່ພວກເຮົາເຮັດບໍ່ໄດ້. ຜິດພາດໜ້ອຍດຽວກໍໝາຍຄວາມວ່າພາດທັງໝົດ.

ຊາຍຄົນນີ້ລາວຮູ້ວ່າ ລາວບໍ່ສາມາດຮັກພຣະເຈົ້າຢ່າງສຸດໃຈໄດ້. ແຕ່ລາວຫັນໄປຖາມອີກວ່າ ແມ່ນໃຜເປັນເພື່ອນບ້ານຂອງຂ້ານ້ອຍ. (10:29)

## ຮັກສາຊີວິດ

ຄົນຢິວຖືວ່າຖ້າໃຜຕິດຕາມເຊື່ອຟັງ ເຮັດເໝືອນພວກເຂົາ, ພວກເຂົາກໍຖືວ່າຜູ້ນັ້ນແມ່ນເພື່ອນບ້ານຂອງເຂົາ. ພວກຢິວບໍ່ມັກພວກຕ່າງຊາດ, ການຊ່ວຍເຫລືອໃນການອອກລູກຂອງຄົນຕ່າງຊາດແມ່ນຜິດກົດໝາຍເພາະຕ້ອງນຳສັດຕຣູເຂົ້າມາສູ່ໂລກອີກຜູ້ນຶ່ງ. ບໍ່ຕ້ອງສົງສັຍ ເພາະທັນບັນດິດຄົນນີ້ກໍຈະຕ້ອງຊອກຫາຮັກແຕ່ຄົນຢິວເທົ່ານັ້ນ. ພຣະເຢຊູຊົງເລີ້ມຕົ້ນສອນເຂົາໃຫ້ຮູ້ຈັກຮັກເພື່ອນບ້ານທັງໝົດ.

ຊາຍຄົນນຶ່ງລົງຈາກກຸງເຢຣູຊາເລັມ ໄປເມືອງເຢຣີໂກ, ພຣະເຢຊູບໍ່ໄດ້ເຈາະຈົງວ່າຊາຍຄົນນັ້ນເປັນຢິວ. ລາວລົງໄປກໍເຫັນໄດ້ແລ້ວວ່າ ເຢຣູຊາເລັມຢູ່ສູງກວ່າປະມານ 3,300 ຟີດ ຫົນທາງມີພຽງ 18 ໄມເທົ່ານັ້ນ. ໝາຍຄວາມວ່າຫົນທາງຊັນຫລາຍ. ໃນໄລຍະຫົນທາງກໍມີພວກປຸ້ນດັກສະກັດລັດທາງ ຍາດແຍ່ງເອົາທຸກຢ່າງ ແລະ ກໍທຳຮ້າຍຮ່າງກາຍດ້ວຍ.

ເມື່ອປະໂລຫິດມາເຫັນແລ້ວກໍເວັ້ນໄປທາງອື່ນ, ຄົນເລວີມາເຫັນກໍເຮັດເໝືອນກັນ. ເປັນຫຍັງພວກເຂົາຈຶ່ງພາກັນເຮັດຢ່າງນັ້ນ. ອາດຈະເປັນເພາະສາສນາ. ໃນພຣະທັມຈົດບັນຊີ 19:11 ໄດ້ບອກໄວ້ວ່າ: "ຜູ້ທີ່ແຕະຕ້ອງສົບຂອງຜູ້ໃດກໍຕາມຕ້ອງເປັນມົນທິນຢູ່ເຈັດວັນ" (ພາສາໄທ ກັນດານວິຖີ) ຖ້າປະໂລຫິດ ຫາກເດີນທາງໄປທຳພິທີທີ່ວິຫານ ແລະໄປແຕະຕ້ອງສົບກ່ອນຜູ້ນັ້ນຈະທຳພິທີບໍ່ໄດ້. ພວກເຂົາຢາກພາກັນຢູ່ບໍຣິສຸດ. ຈຶ່ງເປັນເຫດໃຫ້ນັກປຸ້ນມີໂອກາດໃນແຖບນັ້ນ. ເພາະຖ້າຜູ້ໃດຂືນເຂົ້າໄປຊ່ວຍ ນັກປຸ້ນກໍຈະສວຍໂອກາດປຸ້ນອີກ.

ທ່ານເຄີຍຢຸດແລະຊ່ວຍເຫລືອຄົນທີ່ຕ້ອງການຊ່ວຍເຫລືອບໍ່, ແມ່ນວ່າຈະສິ້ນເປືອງໃຫ້ແກ່ທ່ານແດ່?
ທ່ານເຫັນຄວາມແຕກຕ່າງບໍ່?

## ແບ່ງປັນຊີວິດ

ພຣະເອກກ້າວເຂົ້າມາ, ໄທຊາມາເຣັຽຜູ້ໃຈດີ, ຂ້າພະເຈົ້າກໍບໍ່ນຶກບໍ່ຝັນວ່າຄົນຕ່າງຊາດ, ບໍ່ໄດ້ຢູ່ໃຕ້ກົດໝາຍຂອງຢິວ, ບໍ່ໄດ້ເປັນພີ່ນ້ອງກັບພວກຢິວ ຈະມາຊ່ວຍຄົນເຈັບຜູ້ນີ້. ທັງໆທີ່ຄົນຢິວກໍບໍ່ສະມາຄົມກັບຄົນຊະມາເຣັຽເລີຍ. ໂຢຮັນ 4:9

ໃນເສັ້ນທາງນີ້ ຖ້າໃຜຜູ້ນຶ່ງຫາກຖືກປຸ້ນແລ້ວ ກໍໝາຍຄວາມວ່າ ຊວຍທີ່ສຸດ ເພາະບໍ່ມີໃຜຈະຊ່ວຍເຫລືອ. ແຕ່ຊາຍຄົນນີ້ ສ່ຽງຕໍ່ພັຍອັນຕລາຍທີ່ຈະຊ່ວຍເຫລືອ, ລາວຕ້ອງໄດ້ປົວບາດແຜ, ລາວຕ້ອງເອົາຜ້າຂອງລາວຄຽນບາດແຜໃຫ້, ລາວຕ້ອງໃຫ້ຂີ່ສັດຂອງລາວ ແລະ ລາວຕ້ອງໄດ້ເສັຽຄ່າໂຮງແຮມໃຫ້ດ້ວຍ. (10:34) ວັນຕໍ່ມາລາວຍັງກັບມາຈ່າຍຄ່າໂຮງແຮມໃຫ້ອີກ ເປັນຈຳນວນ ສອງເດນາຣີໂອນ. ເງິນຈຳນວນນີ້ແມ່ນເປັນຈຳນວນເງິນຄ່າແຮງງານສອງວັນ. (10:35)

ບັດນີ້ມາຫາຄຳຖາມທີ່ວ່າ: ໃນສາມຄົນນີ້ ແມ່ນຜູ້ໃດເປັນເພື່ອນບ້ານຂອງຜູ້ທີ່ຖືກປຸ້ນ? ໃນສາມຄົນນີ້ ແມ່ນໃຜເປັນຜູ້ທີ່ຮັກເພື່ອນບ້ານເໝືອນຮັກຕົນເອງ? ທັມບັນດິດຄົນນີ້ ບໍ່ຢາກບອກວ່າ ກໍແມ່ນໄທຊາມາເຣັຽ ແຕ່ເຂົາກັບເວົ້າວ່າ ກໍແມ່ນຄົນທີ່ສະແດງຄວາມເມດຕາຕໍ່ຜູ້ນັ້ນແຫລະ. (10:37)

ພຣະເຢຊູກໍຕອບຮັບທັນທີ: ທ່ານຈົ່ງໄປເຮັດຢ່າງນັ້ນເໝືອນກັນ. (10:37) ຈົ່ງໄປ--ຢ່າລໍຖ້າໃຫ້ເຂົາຊອກຫາທ່ານ . ເຮັດຢ່າງນັ້ນ-- ເບິ່ງແຍງເຂົາຊ່ວຍເຫລືອເຂົາ. ສະແດງຄວາມເຊື່ອດ້ວຍການກະທຳ. ສະແດງຄວາມຮັກໃຫ້ເພື່ອນບ້ານໃກ້ຄຽງເຫັນ. ທ່ານຕ້ອງກະທຳສິ່ງນີ້ເທົ່ານັ້ນ ທ່ານຈຶ່ງຈະມີຊີວິດ.

ບໍ່ມີໃຜເຮັດໄດ້ທຸກຢ່າງ, ແມ່ນແລ້ວ, ໂຣມ 3:20 ເພາະວ່າໃນສາຍພຣະເນດຂອງພຣະເຈົ້າ ບໍ່ມີຜູ້ໃດຜູ້ນຶ່ງເປັນຄົນຊອບທັມ ໂດຍການປະພຶດຕາມທັມບັນຍັດໄດ້ ເພາະວ່າທັມບັນຍັດນັ້ນເຮັດໃຫ້ເຮົາຮູ້ຈັກບາບໄດ້. ພວກເຮົາບໍ່ສາມາດຊ່ວຍເຫລືອທຸກສິ່ງທຸກຢ່າງທັງໝົດໄດ້ ແຕ່ພວກເຮົາກໍຕ້ອງເຮັດ ເພື່ອແບ່ງປັນຊີວິດອັນຕລອດໄປ ຕໍ່ຜູ້ທີ່ບໍ່ເຄີຍຮູ້ຈັກ ເພື່ອໃຫ້ເຂົາເຈົ້າໄດ້ຮັບເໝືອນກັນ.

ມາເບິ່ງຄຳເວົ້າທີ່ແຕກຕ່າງລະຫວ່າງ ພຣະບັນຍັດ ແລະ ພຣະຄຸນ. ພຣະບັນຍັດກ່າວວ່າ: ຈົ່ງເຮັດດີແລ້ວຈະມີຊີວິດ ແຕ່ພຣະຄຸນຊຶ່ງກ່າວວ່າ: ຈົ່ງມີຊີວິດ ແລ້ວກະທຳຄວາມດີ.

ຮູ້ບໍ່ວ່າ ທ່ານບໍ່ສາມາດໄປສວັນໄດ້ດ້ວຍການຊ່ວຍເຫລືອຄົນ, ແຕ່ຖ້າທ່ານຈະໄປແທ້ຈິງນັ້ນ ທ່ານຕ້ອງມີອີກສິ່ງນຶ່ງປະກອບໃສ່ດ້ວຍ. ສິ່ງນັ້ນກໍຄື ທ່ານຕ້ອງຮັກພຣະເຢຊູ: ເວລາພວກເຮົາຮັກຊຶ່ງກັນແລະກັນ (ໂຢຮັນ 13:35) ເວລາເຮົາຮັກເພື່ອນບ້ານເຮົາຮັກພຣະເຈົ້ານຳບໍ່. ຖ້າເຮົາຮັກພຣະເຈົ້າ ເຮົາຮັກເພື່ອນບ້ານນຳບໍ່.

ຜ່ານມາຂ້າພະເຈົ້າມັກໄດ້ຍິນເຖິງຄຣິສຕຽນກ່າວວ່າ ຂ້ານ້ອຍຮັກພຣະເຈົ້າຫລາຍ ແຕ່ຂ້ານ້ອຍບໍ່ມັກຜູ້ນັ້ນ ຂ້ານ້ອຍບໍ່ມັກຜູ້ນີ້. ເສັ້ນທາງໄປເຢຣີໂກສຳລັບວັນນີ້ຂອງທ່ານ, ທ່ານຈະພົບໃຜຜູ້ນຶ່ງທີ່ນັ້ນ ເຂົາຖືກປຸ້ນເອົາຊີວິດ, ເອົາຊັບສິ່ງຂອງ, ຊີວິດໂສກເສົ້າງ່ວມເຫງົາ, ທ່ານກໍມີຫລາຍເງື່ອນໄຂທີ່ຈະຫລີກລ້ຽງໄດ້. ແລະກໍມີເຫດຜົນທີ່ຈະຢຸດເບິ່ງເຂົາ. ທ່ານຈົ່ງເປັນຄົນສລາດ ພວກປຸ້ນມັນກໍເບິ່ງທ່ານດ້ວຍ.

## <u>ຄຳຖາມ</u>

1. ແມ່ນຫຍັງຄືສິ່ງທີ່ລົບກວນພວກເຮົາ ບໍ່ໃຫ້ເຮົາຢາກຊ່ວຍເຫລືອຄົນ? ດ້ານສັງຄົມ, ດ້ານສາສນາ?

2. ແມ່ນຫຍັງຄືສິ່ງລົບກວນພວກເຮົາ ບໍ່ໃຫ້ເຮົາຮັກເພື່ອນບ້ານຂອງເຮົາ ເຫມືອນຮັກຕົນເອງ?

3. ແມ່ນໃຜເປັນຊາວຊາມາເຣັຽ ໃນຄຣິສຕະຈັກຂອງທ່ານ? ທ່ານຮັບຮູ້ຄົນທີ່ຊ່ວຍເຫລືອນັ້ນຫລືບໍ່? ເປັນຫຍັງຈຶ່ງຮັບຮູ້ ແລະເປັນຫຍັງຈຶ່ງບໍ່ຮັບຮູ້?

4. ທ່ານຮັກພຣະເຈົ້າດ້ວຍສຸດຈິດສຸດໃຈແລ້ວຫລືຍັງ? ຖ້າທ່ານຮັກທ່ານຈະກະທຳຢ່າງໃດ?

5. ທ່ານຊ່ວຍເຫລືອຄົນຄັ້ງຫລ້າສຸດຢູ່ທີ່ໃດ?

## ບົດຮຽນທີ 3
## ອ້ອນວອນຕໍ່ພຣະເຈົ້າຜູ້ຊົງສັບພັນຍູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 11:5-23

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 11:1-13

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາສາມາດອ້ອນວອນດ້ວຍຄວາມໝັ້ນໃຈຕໍ່ພຣະເຈົ້າຜູ້ຊົງສາມາດ ໃຫ້ຄຳຕອບແລະຊົງໃຫ້ພຣະພອນແກ່ພວກເຮົາ.

**ຄຳຖາມເພື່ອສຳຣວດ:** ພວກເຮົາເຊື່ອໄດ້ບໍ່ວ່າພຣະເຈົ້າຈະຕອບຄຳອ້ອນວອນຂອງເຮົາ?

**ຈຸດປະສົງຂອງບົດຮຽນ:** ເພື່ອຢາກຈະອະທິບາຍໃຫ້ເຂົ້າໃຈໃນການອ້ອນວອນ ແລະນ້ຳພຣະທັຍຂອງ ພຣະເຈົ້າທີ່ອົງພຣະເຢຊູໄດ້ຊົງສິດສອນໄວ້ນັ້ນ.

### ຄຳນຳ

ທ່ານເຄີຍເຮັດຂໍກະແຈເສັຽບໍ່? ຂ້າພະເຈົ້າເຮັດເສັຽເລື້ອຍ, ແຕ່ວ່າ ຍັງໂຊກດີທີ່ເມັຽຂອງຂ້າພະເຈົ້າກໍມີອີກ ຊຸດນຶ່ງ, ແລ້ວລາວກໍໄດ້ສັ່ງສອນຂ້າພະເຈົ້າໃນວິທີການຮັກສາຂໍກະແຈ. ຂໍກະແຈເຮືອນນີ້ ຈະໄປຢືມຄົນອື່ນ ກໍບໍ່ໄດ້ເພາະມັນບໍ່ຖືກກັນ. ມີແຕ່ໄປຊື້ໃໝ່ມາປ່ຽນ. ຖ້າມີລູກກະແຈແລ້ວກໍເປີດປະຕູງ່າຍ, ແຕ່ຖ້າບໍ່ມີແລ້ວ ແມ່ນບໍ່ມີທາງ.

ໃນການຮຽນມື້ນີ້ພວກເຮົາຈະເປີດເຜີຍສິ່ງນຶ່ງ ຊຶ່ງເປັນເໝືອນກະແຈດອກສຳຄັນ ທີ່ຈະນຳພາພວກເຮົາເຂົ້າ ໄປເຖິງບັນລັງຂອງພຣະເຈົ້າໄດ້. ສາວົກຂອງພຣະເຢຊູ ໄດ້ຖາມອອກມາເປັນສຽງດຽວກັນວ່າ ຂໍສອນພວກ ຂ້ານ້ອຍໃຫ້ອ້ອນວອນ (11:1) ຫລັງຈາກທີ່ພຣະອົງສອນຕົວຢ່າງ (11:2-4) ທີ່ຈະສົນທະນາກັບພຣະເຈົ້າ ແລ້ວ ພຣະອົງກໍໄດ້ເນັ້ນວ່າ ຖ້າຈິດໃຈຂອງທ່ານຫາກບໍ່ສັດຊື່, ຄຳເວົ້າຂອງເຮົາກໍຈະບໍ່ໄດ້ຮັບຜົນປໂຍດ ຫຍັງ. ຖ້າຈິດວິນຍານຂອງພວກເຮົາຫາກບໍ່ບໍຣິສຸດ ການສົນທະກັບພຣະວິນຍານ ກໍຈະບໍ່ສາມາດຕິດຕໍ່ ກັນໄດ້.

ໃນປະສົບການ ການເປັນສິດຍາພິບານຂອງຂ້າພະເຈົ້າ, ເຫັນວ່າການອ້ອນວອນນີ້ ເປັນພາກສ່ວນສຳຄັນ ຫລາຍທີ່ສຸດ. ພວກເຮົາມາເບິ່ງນຳກັນວ່າ ສິ່ງໃດທີ່ຈະເປັນທີ່ພໍພຣະທັຍຂອງພຣະເຈົ້າ. ບໍ່ມີສິ່ງໃດດອກທີ່ປະ ເສີດໄປກວ່າຊີວິດທີ່ມີຄວາມອຸດົມສົມບູນທີ່ອົງພຣະເຢຊູຢິບຍື່ນໃຫ້.

**ສຽງເຄາະປະຕູຕອນທ່ຽງຄືນ** (11:5-8)

ພຣະເຢຊູໄດ້ຍົກເຖິງການມີບັນຫາ. ຊາຍຄົນນຶ່ງ ທີ່ມີເພື່ອນມາເຄາະປະຕູໃນຍາມທ່ຽງຄືນ ພ້ອມດ້ວຍບັນຫາ: ສະຫາຍເອີຍ ຂໍໃຫ້ເຮົາຢືມເຂົ້າຈີ່ຈັກສາມກ້ອນແດ່. ເພາະມີເພື່ອນມາແວ່ ແລະຂ້ອຍບໍ່ມີຫຍັງສູ່ເພິ່ນກິນ. 11:5-6. ມີດສະຫາຍມາແວ່ຍາມກາງຄືນ, ກໍເພາະວ່າ ຜູ້ຄົນມັກເດີນທາງຍາມກາງຄືນ ມັນຈຶ່ງບໍ່ຮ້ອນ, ແລະການເຮັດອາຫານກໍເຮັດພຽງພໍແຕ່ຄອບຄົວຕົນກໍພໍແລ້ວ ບໍ່ມີຫຍັງເຫລືອ. ການຮັບແຂກເປັນສິ່ງທີ່ຈຳ ເປັນທີ່ສຸດສຳລັບທະວີບເອເຊັຽ. ບໍ່ວ່າຈະເປັນຄ່ຳຄືນກໍຕາມ ຕ້ອງໄດ້ຕ້ອນຮັບຕາມສົມຄວນ. ລາວຂໍຢືມເຂົ້າ ຈີ່ພຽງສາມກ້ອນທໍ່ນັ້ນ, ບາງທີ່ຮ້ານຄ້າອາດປິດໄປແລ້ວ ຫລືວ່າເປັນບ້ານນ້ອຍບໍ່ມີຕລາດກໍອາດເປັນໄດ້. ການຢືມນີ້ພວກເຮົາກໍຮູ້ແລ້ວວ່າຢືມບໍ່ມີຊື້ດອກ ຢູ່ແຖວບ້ານເຮົາກໍປະຕິບັດກັນຫລາຍເໝືອນກັນ. ຜູ້ເປັນຫົວ ໜ້າຄອບຄົວຄົງບໍ່ໃຈດີປານໃດ ເລີຍຕອບອອກມາວ່າຢ່າລົບກວນພວກເຮົາເທາະ, ປະຕູກໍອັດແລ້ວ ແລະ

ລູກໆ ກໍນອນຫລັບຫມົດທຸກຄົນແລ້ວ. ຕາມປະເພນີແລ້ວ ຖ້າແມ່ນເຂົ້າບ່ອນນອນແລ້ວແມ່ນບໍ່ຢາກເປີດປະຕູ ຫລືວ່າບໍ່ຢາກເຫນັງຕີງເພາະຢ້ານລູກຕື່ນ ເພາະການຕື້ນຂຶ້ນມານັ້ນແມ່ນຕ້ອງຕື່ນຫມົດບ້ານ ແລ້ວເຂົາຈະກັບໄປນອນອີກຍາກ. (11:7)

ເມື່ອເບິ່ງແມ່ນການເປັນເພື່ອນບ້ານທີ່ດີນັ້ນຜິດຫມົດ, ຢ່າງໃດກໍຕາມ ໃນຄໍາອຸປມານີ້ບໍ່ໄດ້ເນັ້ນເຖິງບ່ອນນັ້ນ, ແຕ່ເນັ້ນເຖິງການຂໍ. ສະຫາຍຄົນນັ້ນບໍ່ໄດ້ລຸກຂຶ້ນມາເພາະແມ່ນເພື່ອນບ້ານກັນ, ແລະກໍບໍ່ແມ່ນເປັນມິດສະຫາຍກັນ ແຕ່ຍ້ອນການດື້ຂໍ, ຂໍຢ່າງບໍ່ເຊົາ. ລາວຈື່ງລຸກຂຶ້ນມາເອົາໃຫ້ຕາມຄວາມຕ້ອງການ. (11:8) ໃນພຣະຄັມພີໃຊ້ຄໍາວ່າ "ດື້ຂໍ" ຫມາຍຄວາມວ່າຊູຊີ ບໍ່ຮູ້ອາຍ ລາວຈື່ງໄດ້.

ນີ້ແຫລະຄືວິທີນຶ່ງທີ່ພຣະເຈົ້າຟັງຄໍາອ້ອນວອນຂອງພວກເຮົາ, ຂໍຢູ່ເລື້ອຍ ຂໍບໍ່ເຊົາ ພຣະອົງຊົງຟັງເຮົາ. ເຄາະປະຕູໃນເວລາທ່ຽງຄືນຍິ່ງດີ.

## <u>ເຄາະປະຕູຂອງພຣະເຈົ້າ</u>

ຜ່ານມາພວກເຮົາເຫັນໄດ້ແລ້ວວ່າ ຖ້າເຮົາຂໍຢ່າງບໍ່ເຊົາ ດື້ຂໍແມ່ນພຣະເຈົ້າຈະໃຫ້. ແຕ່ວ່າເຮົາຕ້ອງຈໍາໄວ້ສເມີວ່າການຂໍຂອງເຮົາຕ້ອງມີຄວາມເຊື່ອດ້ວຍ. ຖ້າພວກເຮົາຫາກຂໍຢ່າງຖືກຕ້ອງ, ຂໍດ້ວຍຄວາມເຊື່ອ ແລະຂໍໃຫ້ຖືກຕາມຄວາມເຊື່ອຂອງຕົວເອງແລ້ວແນ່ນອນຕ້ອງໄດ້. ພຣະເຈົ້າຕ້ອງສະດັບຮັບຟັງ ແລະຕອບສນອງຄວາມຈໍາເປັນຂອງພວກເຮົາ.

ມາເບິ່ງຂອບເຂດຂອງຄໍາເວົ້າທີ່ພຣະເຈົ້າຊົງສອນ
ພຣະເຢຊູມອບກຸນແຈໃຫ້ແກ່ເຮົາ ໂດຍຜ່ານຄໍາອຸປມານີ້ ຄື: (1) ບໍ່ມີພໍ່ຄົນໃດດອກຖ້າລູກຂໍປາຈະເອົາງູໃຫ້; (2) ບໍ່ມີພໍ່ຄົນໃດດອກ ຖ້າລູກຂໍໄຂ່ຈະເອົາແມງງອດໃຫ້. ແຕ່ເຖິງແມ່ນວ່າເຮົາຈະເປັນຄົນຊົ່ວເຮົາກໍຍັງບໍ່ເຄີຍເອົາງູໃຫ້ລູກ, ຫລືເອົາແມງງອດໃຫ້ລູກ. ພວກເຮົາຍັງໄປຊື້ຂອງດີໆມາເປັນຂອງຂວັນໃຫ້ລູກ. (11:13)

11:13 ຕອນທ້າຍກ່າວວ່າ: ພຣະບິດາຜູ້ຊົງສະຖິດໃນສວັນ ຈະຊົງປະທານພຣະວິນຍານບໍຣິສຸດໃຫ້ແກ່ຜູ້ທີ່ຂໍຈາກພຣະອົງ. ພຣະເຢຊູໄດ້ສອນວິທີການໃນການໄຂຂໍກະແຈໃຫ້ພວກເຮົາ ແລ້ວວ່າຈະເຮັດຢ່າງໃດ. ຂໍເລື້ອຍໆເຫມື່ອນຄົນທີ່ໄປຂໍຢືມເຂົ້າຈີ່ຈາກເພື່ອນບ້ານ. ອີກອັນນຶ່ງກໍຄືວ່າຂໍໃຫ້ພຣະເຈົ້າຊ່ວຍແລະຢ່າລືມວ່າບໍ່ແມ່ນຍ້ອນຄວາມດີ, ບໍ່ແມ່ນຍ້ອນຄວາມກ້າ ແຕ່ແມ່ນຍ້ອນພຣະຄຸນ.

ພຣະເຢຊູສອນພວກເຮົາອີກວ່າ: ເຮົາຈະໃຫ້ທ່ານ ຫາກທ່ານຂໍໃນນາມຂອງເຮົາ, ນາມຂອງເຮົານັ້ນກໍຄືພຣະບຸດ, ແລ້ວພຣະບຸດກໍຈະນໍາສະງ່າຣາສີມາສູ່ພຣະບິດາ. ໂຢຮັນ 14:13-14. ຖ້າອະທິຖານໃນນາມພຣະເຢຊູ ກໍແມ່ນຖອນເງິນຈາກບັນຊີຂອງພຣະເຢຊູ ພຣະເຢຊູຈໍາເປັນຕ້ອງເປັນຜູ້ເຊັນເຊັກເສັຽກ່ອນ. ຖ້າເຮົາເຮັດຢ່າງນັ້ນພຣະເຈົ້າກໍຈະຟັງພວກເຮົາ. ໃນສມັຍທີ່ຂ້າພະເຈົ້າເປັນສິດຍາພິບານ ທີ່ຣັດ ຄາລີຟໍເນັຽ, ມີເຖົ້າແກ່ຄົນນຶ່ງເຂົ້າມາຫາຂ້າພະເຈົ້າແລ້ວຖາມວ່າ: ອາຈານ ເວລາຂ້ານ້ອຍອະທິຖານ ເປັນຫຍັງພຣະເຈົ້າຈື່ງບໍ່ຕອບຈັກເທື່ອ? ແລະປັດຈຸບັນພຣະອົງກໍຍັງບໍ່ທັນຕອບ. ຂ້າພະເຈົ້າຖາມລາວຄືນໄປວ່າ: ລຸງອະທິຖານຢ່າງໃດ? ລາວຕອບວ່າ: ໂຢ້, ຂ້ານ້ອຍກະວ່າ ພຣະເຈົ້າເອີຍຊ່ວຍແດ່ເດີ້ ! ໄປໃສຂ້ານ້ອຍກໍເອີ້ນຈົນຕິດປາກ.

ຂ້າພະເຈົ້າກໍໄດ້ເອົາຂໍ້ພຣະຄັມພີທີ່ພຣະເຢຊູຊົງສອນນີ້ໃຫ້. ລູກາ 11:2-4; ແລະອີກຂໍ້ນຶ່ງ ຄືໃນໂຢຮັນນີ້ລະໃຫ້ໄປ ໂຢຮັນ 14:13-14.

**<u>ຫວັງຄໍາຕອບຈາກພຣະເຈົ້າ</u>**

ພວກເຮົາສາມາດເຮັດຕາມຄໍາສອນຂອງພຣະເຢຊູໄດ້. "ຈົ່ງຫມັ່ນຂໍ ແລ້ວຈະຊົງປະທານໃຫ້ ຈົ່ງຫມັ່ນຊອກ ແລ້ວຈະພົບ ຈົ່ງຫມັ່ນເຄາະແລ້ວຈະຊົງໄຂໃຫ້." (11:9-10) "ຂໍ, ຊອກ, ເຄາະ" ແມ່ນຄໍາກິຣິຍາທີ່ກໍາລັງເຮັດ ແລະກໍເຮັດໄປເລື້ອຍໆ. ຈົ່ງສືບຕໍ່ຂໍໄປແລ້ວຈະໄດ້. ຊອກ ຖ້າທ່ານຫາກຊອກສແວງຫາດ້ວຍຄວາມອົດທົນພຣະອົງກໍຈະໃຫ້ເຮົາ ພຣະອົງຢາກເຫັນຄວາມອົດທົນໃນຕົວເຮົາ, ເຄາະແລ້ວຈະເປີດໃຫ້ ຖ້າພີ່ນ້ອງຫາກບໍ່ນີ້ງນອນເສີຍ ໄປເຄາະປະຕູ, ເຄາະໄປເລື້ອຍໆ ພຣະອົງກໍຈະເປີດປະຕູໃຫ້ແກ່ເຮົາ.

ພວກເຮົາເປັນລູກພຣະເຈົ້າ ພວກເຮົາໄດ້ຮັບຍ້ອນພຣະຄຸນ ແລະພວກເຮົາກໍໄດ້ຮັບຕາມຄວາມຈໍາເປັນຂອງເຮົາ ແລະຕາມພຣະປະສົງຂອງພຣະເຈົ້າ.

ເຖົ້າແກ່ຄົນນັ້ນເມື່ອໄດ້ຂໍ້ພຣະຄັມພີແລ້ວກໍນໍາໄປປະຕິບັດ ສາມເດືອນຕໍ່ມາ ລາວກັບມາຫາຂ້າພະເຈົ້າດ້ວຍໃບຫນ້າຍິ້ມແຍ້ມແຈ່ມໃສ ແລະເວົ້າວ່າ: ຂອບຄຸນພຣະເຈົ້າ ພຣະເຈົ້າຕອບຄໍາອ້ອນວອນຂອງຂ້ານ້ອຍແລ້ວ. ຈັ່ງໃດຈຶ່ງວ່າຢ່າງນັ້ນ, ແມ່ຂອງຂ້ານ້ອຍບໍ່ສະບາຍຢູ່ລາວພຸ້ນ, ຫມໍບອກວ່າລາວເປັນໂຣກມະເຮັງ ຫມໍບໍ່ສາມາດປົວໄດ້ແລ້ວ, ຂ້ານ້ອຍແລະຄອບຄົວກໍໄດ້ພາກັນອະທິຖານ, ອະທິຖານໃນນາມພຣະເຢຊູ. ດຽວນີ້ພີ່ນ້ອງໂທຣະສັບມາບອກວ່າລາວລຸກຍ່າງໄປມາໄດ້ແລ້ວ ອາການກໍດີຂື້ນແດ່ຍ້ອນຫຍັງກໍບໍ່ຮູ້. ພວກເຂົາຢູ່ເມືອງລາວເຂົາບໍ່ຮູ້ແຕ່ຂ້ານ້ອຍຮູ້.

ອີກເຣື່ອງນຶ່ງ: ມີຄອບຄົວນຶ່ງເປັນຄອບຄົວທີ່ມີຖານະດີ, ມີລູກຊາຍຄົນດຽວຮັກສຸດຫົວໃຈ. ພໍເວລາມີສົງຄາມລູກກໍຖືກເອີ້ນເຂົ້າຮັບໃຊ້ຣາຊການ. ຖ້າຈະບໍ່ໃຫ້ໄປຊໍ້າພັດເຫັນແກ່ຊາດ ທັງສອງຈຶ່ງຕັດສິນໃຈໃຫ້ລູກໄປເວລາລູກໄປນັ້ນຈົດຫມາຍກໍສົ່ງໃຫ້ພໍ່ແມ່ເປັນປະຈໍາ ແຕ່ຕົກມາໃນວັນນຶ່ງຈົດຫມາຍທີ່ເຄີຍມາກໍບໍ່ມາຈົນກາຍເປັນເດືອນ ພໍ່ແມ່ກໍໄດ້ຕິດຕາມຂ່າວຄາວເລື້ອຍມາ. ຂ່າວກໍໄດ້ກະຈາຍອອກໄປວ່າມີການສູ້ຮົບຄັ້ງຍິ່ງໃຫຍ່ທະຫານອະເມຣິກາກໍເສັຽຫາຍຫລາຍໃນນັ້ນກໍມີລູກຊາຍຂອງລາວຄົນນຶ່ງ.

ຄວາມມືດໄດ້ປົກຄຸມຄອບຄົວຂອງລາວ, ຄວາມສຸກທີ່ເຄີຍມີກໍກັບກາຍເປັນທຸກ. ວັນກາຍເປັນອາທິດ, ອາທິດກາຍເປັນເດືອນ, ເດືອນກາຍເປັນປີ, ສົງຄາມສິ້ນສຸດລົງ.

ເຊົ້າວັນນຶ່ງ ເມື່ອສອງຜົວເມັຽກໍາລັງຄຸຍກັນພ້ອມດ້ວຍອາຫານເຊົ້າທີ່ດີແຊບຊ້ອຍຢູ່ນັ້ນ. ຄົນໃຊ້ກໍແລ່ນເຂົ້າມາຫາແລະບອກວ່າ ຊາຍຂີ້ທຸກຄົນນຶ່ງມາຢູ່ທີ່ຫນ້າປະຕູແລະຢາກຂໍເວົ້າກັບທ່ານ, ຂ້ານ້ອຍຮູ້ຢູ່ວ່າທ່ານຄົງບໍ່ຢາກເວົ້າກັບຄົນແບບນີ້ດອກ, ລາວຈຶ່ງຍື່ນຈົດຫມາຍນີ້ໃຫ້ຂ້ານ້ອຍແລະສັ່ງຂ້ານ້ອຍວ່າໃຫ້ເອົາປ່ອນໃສ່ມືເພິ່ນໃຫ້ແດ່ເດີ້. ນາງຄົນໃຊ້ກໍປ່ອນຈົດຫມາຍທີ່ເກົ່າໆ ເປີເປື້ອນໄປດ້ວຍຂີ້ຕົມທັງຍໍ່ ແລະເກືອບຈະບໍ່ເຫັນຕົວຫນັງສືໃສ່ມືຂອງເພິ່ນ. ເພິ່ນກໍຮັບຫນັງສືຈາກຄົນໃຊ້ແລ້ວກໍອ່ານທຸກຖ້ອຍຄໍາ ເພາະເປັນຈົດຫມາຍຂອງລູກລາວແລະລາວກໍຈໍາລາຍມືນັ້ນໄດ້ດີ.

ໃນຈົດຫມາຍນັ້ນຂຽນວ່າ: ພໍ່ແມ່ທີ່ຮັກແລະໂຄຣົບ, ລູກໄດ້ຖືກຍິງແລະກໍມີເວລາສັ້ນເຕັມທີທີ່ຈະມີຊີວິດຢູ່. ລູກຈຶ່ງໄດ້ຂຽນຈົດຫມາຍມາສັ່ງລາພໍ່ແມ່. ໃນຂະນະທີ່ຂຽນຈົດຫມາຍນີ້ແມ່ນຫມູ່ທີ່ດີທີ່ສຸດຂອງລູກກໍາລັງຄຸເຂົ່າປະຄອງລູກຢູ່ ຖ້າສົງຄາມຫາກສິ້ນສຸດລົງແລ້ວລາວຈະນໍາຈົດຫມາຍນີ້ມາໃຫ້ພໍ່ແມ່ ແລະເວລາລາວມາ

ເຖິງແລ້ວໃຫ້ພໍ່ແມ່ເຮັດກັບລາວເໝືອນດັ່ງພໍ່ແມ່ເຮັດກັບລູກນັ້ນເດີ້. ຈາກພົນທະຫານ ສາລີ.

ບໍ່ມີຫຍັງຈະດີໃຈໃນເຮືອນຫລັງນັ້ນອີກ ແສງໄຟໄດ້ສ່ວາງຈ້າຂຶ້ນມາອີກ ພໍ່ແມ່ຜູ້ນັ້ນເຮັດຕາມທີ່ລູກຂໍຮ້ອງທຸກຢ່າງ. ໃນແຜ່ນດິນສວັນ ພຣະບິດາກໍຈະຊົງກະທຳຕາມຖ້າເຮົາຫາກຂໍໃນນາມພຣະບຸດ.

ໃຜຄືເພື່ອນຂອງທ່ານໃນຍາມທ່ຽງຄືນ? ທ່ານຕ້ອງການຫຍັງຈາກພຣະເຈົ້າ ໃນວັນນີ້? ໄປຫາພຣະເຈົ້າ. ພຣະອົງລໍຖ້າທ່ານ ຖ້າທ່ານເປັນລູກຂອງພຣະອົງແລ້ວທ່ານຈະໄດ້ຕາມປາຖນາ.

<u>ຄຳຖາມ</u>

1. ໃນຊີວິດຂອງທ່ານຍັງມີຄຳອະທິຖານໃດບໍ່ທີ່ຍັງບໍ່ທັນໄດ້ຮັບຄຳຕອບ? ໃນຄຳອຸປມາຂອງພຣະເຢຊູນັ້ນທ່ານຮູ້ວ່າມີຄວາມໝາຍຢ່າງໃດ?

2. ເປັຍຫຍັງພຣະເຢຊູຈຶ່ງບອກພວກເຮົາໃຫ້ຂໍ ແລະໃຫ້ຂໍຕໍ່ໆໄປ? ເປັນຫຍັງຈຶ່ງບໍ່ແມ່ນຂໍເທື່ອດຽວ ແລ້ວໆໂລດ?

3. ຖ້າມີນາງນ້ອຍຄົນນຶ່ງຂໍຈາກພໍ່ລາວແລະລາວຖືກປະຕິເສດ, ນາງນ້ອຍຄົນນັ້ນຈະຄິດຢ່າງໃດກັບຄຳອຸປມານີ້? ຜູ້ເປັນພໍ່ມີເຫດຜົນຫຍັງບໍ່ທີ່ປະຕິເສດລູກສາວນ້ອຍຂອງລາວ?

4. ຖ້າທ່ານອະທິຖານໃນນາມຂອງຕົວທ່ານໆຈະໄດ້ຮັບຫລືບໍ່? ພຣະເຢຊູສອນໃຫ້ອະທິຖານໃນນາມຂອງໃຜ?

## ບົດຮຽນທີ 4
## ການຄາດຄິດແມ່ນໜຍັງສຳຄັນທີ່ສຸດໃນຊີວິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 12:13-21
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 12:13-34
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອເຫັນວ່າວັດຖຸສິ່ງຂອງສຳຄັນກວ່າພຣະເຈົ້າຈະເຮັດໃຫ້ຄົນຜູ້ນັ້ນຂາດການຕຽມພ້ອມໃນວັນຕັດສິນຂອງພຣະອົງ.
**ຄຳຖາມເພື່ອການສຳຫລວດ:** ເມື່ອເນັ້ນໜັກໃສ່ວັດຖຸສິ່ງຂອງແລ້ວມັນຈະມີຜົນສະທ້ອນຕໍ່ຊີວິດຂ້າພະເຈົ້າຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ຂ້າພະເຈົ້າຊັ່ງຊາເບິ່ງການເນັ້ນໜັກໃສ່ວັດຖຸສິ່ງຂອງກັບຄຳສັ່ງສອນຂອງພຣະເຢຊູຄຣິດ.

### ບົດຮຽນ

### ຄຳນຳ

ພວກເຮົາໄດ້ຕຽມພ້ອມໃນວັນຕັດສິນຂອງອົງພຣະຜູ້ເປັນເຈົ້າ ກໍຕໍ່ເມື່ອພວກເຮົາໃຊ້ວັດຖຸສິ່ງຂອງທີ່ພວກເຮົາມີຢູ່ໃຫ້ເປັນທີ່ຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າແລະເສີມສ້າງຣາຊອານາຈັກຂອງພຣະອົງຢູ່ໃນໂລກນີ້.

### ຢ່າຍອມຈຳນົນໃຫ້ຄວາມໂລບ (12:13-15)

"ມີຄົນນຶ່ງໃນໝູ່ປະຊາຊົນໄດ້ທູນພຣະອົງວ່າ, ອາຈານເອີຍ, ຂໍທ່ານສັ່ງອ້າຍຂອງຂ້ານ້ອຍແບ່ງມໍຣະດົກໃຫ້ຂ້ານ້ອຍແດ່" (12:13). ລູກາບໍ່ໄດ້ກ່າວເຖິງຊື່ຄົນນັ້ນ. ລາວອາດຈະເປັນຄົນໃດຄົນນຶ່ງມີອາຍຸປານກາງ. ລາວຮ້ອງພຣະເຢຊູວ່າ "ອາຈານ." ຄຳນີ້ເປັນຄຳໃຊ້ທົ່ວໄປເມື່ອພວກເຂົາຮ້ອງຜູ້ນຳທາງສາສນາ. ຄົນຜູ້ນີ້ບໍ່ເຫັນພຣະເຢຊູຊົງເປັນພຣະຜູ້ເປັນເຈົ້າ. ລາວຢາກໄດ້ຄຳແນະນຳຂອງພຣະອົງ ບໍ່ແມ່ນອຳນາດຂອງພຣະອົງ. ລາວຢາກໃຫ້ພຣະເຢຊູເຫັນພ້ອມກັບລາວ ແລະໃນສິ່ງທີ່ລາວຮ້ອງຂໍ.

"ຂໍທ່ານສັ່ງອ້າຍຂອງຂ້ານ້ອຍ" ເປັນຄຳສັ່ງ. ແກ້ບັນຫາໃຫ້ຂ້ານ້ອຍແດ່. ພາສາລາວໃຊ້ຄຳວ່າ "ຂໍທ່ານສັ່ງ" ແຕ່ພາສາອັງກິດໃຊ້ຄຳວ່າ "Teacher, tell my brother" ຖ້າແປແລ້ວ "ອາຈານ ບອກອ້າຍຂອງຂ້ານ້ອຍ"
ລາວສັ່ງພຣະເຢຊູໃຫ້
ສັ່ງອ້າຍຂອງລາວ. ຄຳສັ່ງຂອງລາວເປັນການສ່ວນຕົວ: ເຮັດໃນສິ່ງທີ່ຂ້ານ້ອຍຮຽກຮ້ອງ, ເພື່ອໃຫ້ຕອບສນອງໃນສິ່ງທີ່ຂ້ານ້ອຍຕ້ອງການ.

ສັ່ງລາວ "ໃຫ້ແບ່ງມໍຣະດົກໃຫ້ຂ້ານ້ອຍແດ່." ຄຳສັ່ງຢາກໄດ້ວັດຖຸສິ່ງຂອງ: ເອົາເງິນມາໃຫ້ຂ້ານ້ອຍຊຶ່ງເປັນສິ່ງທີ່ຂ້ານ້ອຍຢາກໄດ້. ກົດໝາຍຂອງຊາວຢິວໄດ້ບົ່ງບອກໄວ້ວ່າ ລູກຊາຍກົກຈະໄດ້ສອງສ່ວນສາມມູນຂອງພໍ່ ແລະຜູ້ເປັນນ້ອງຈະໄດ້ນຶ່ງສ່ວນສາມ (ພຣະບັນຍັດທີສອງ 21:17). ໃນກໍຣະນີນີ້ ຜູ້ເປັນອ້າຍອາດຈະບໍ່ຍອມແບ່ງປັນຊັບສົມບັດນຶ່ງສ່ວນສາມໃຫ້ນ້ອງຂອງລາວ.

ພຣະເຢຊູຊົງເຜີຍໃຫ້ພວກເຂົາຮູ້ເຖິງຫລັກສາສນາຂອງພຣະອົງ (ລູກາ 12:14): "ຊາຍເອີຍ, ໃຜແຕ່ງຕັ້ງເຮົາໃຫ້ເປັນຕຸລາການຫລືຜູ້ແບ່ງມໍຣະດົກໃຫ້ທ່ານ." ຄຳວ່າ "ຊາຍເອີຍ" ເປັນຄຳເວົ້າທັກທາຍໃຊ້ທົ່ວໄປໃນສມັຍນັ້ນ. ບໍ່ແມ່ນຄຳເວົ້າທີ່ບໍ່ໃຫ້ກຽດ. ຄຳນີ້ ມີຄວາມໝາຍວ່າ <u>ທ່ານເອີຍ</u>. "ຜູ້ແບ່ງມໍຣະດົກ" ເປັນສັບຂອງກົດໝາຍຊຶ່ງໃຊ້ກັບຄົນໃດຄົນນຶ່ງທີ່

ມີໜ້າທີ່ຕັດສິນໃຫ້ສອງຝ່າຍເມື່ອມີການຟ້ອງຮ້ອງກັນ. ຈຸດສຳຄັນໃນຄຳເວົ້າຂອງພຣະອົງຕໍ່ຄົນທັງປວງນັ້ນ, ຖ້າຫາກວ່າເຮົາບໍ່ເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ, ເຮົາກໍຈະບໍ່ເປັນຕຸລາການຫລືຜູ້ແບ່ງມໍຣະດົກໃຫ້ພວກເຈົ້າ. ຖ້າເຮົາເປັນພຽງອາຈານ ເໝືອນດັ່ງພວກທ່ານທັກທາຍກັນ, ເຮົາກໍຈະບໍ່ມີອຳນາດອັນໃດໃນຊີວິດຂອງພວກເຈົ້າ. ເຮົາບໍ່ພຽງເປັນແຕ່ອາຈານຂອງພວກເຈົ້າເທົ່ານັ້ນ, ແຕ່ເຮົາເປັນອົງພຣະຜູ້ເປັນເຈົ້າຂອງພວກເຈົ້າ.

ພວກເຮົາມີຄວາມແຕກຕ່າງຫຍັງບໍ່ກັບຊາຍຄົນນັ້ນທີ່ມາຫາພຣະເຢຊູ? ພວກເຮົາເຮັດກັບພຣະອົງເໝືອນກັບວ່າພຣະອົງຕ້ອງເປັນຜູ້ແກ້ບັນຫາຂອງພວກເຮົາ ແລະພຣະອົງຕ້ອງໃຫ້ພວກເຮົາໃນສິ່ງທີ່ພວກເຮົາຢາກໄດ້ ປານວ່າເອັ້ນໃຊ້ບໍ່ວ່າຍາມໃດກໍຕາມ. ຖ້າຫາກວ່າພວກເຮົາໃຊ້ຊີວິດໃນທາງອັນຊອບທັມແລະອ້ອນວອນຢ່າງຖືກຕ້ອງ ພຣະເຈົ້າຈະອວຍພອນໃນສິ່ງທີ່ພວກເຮົາປາຖນາແລະປະທານທຸກສິ່ງທີ່ພວກເຮົາຈຳເປັນ. ທ່ານໄດ້ຮຽກຮ້ອງພຣະເຈົ້າເໝືອນດັ່ງກັບຊາຍຄົນນັ້ນບໍໃນອາທິດນີ້?

ພຣະເຢຊູຊົງເຕືອນວ່າ "ຈົ່ງລະວັງ" ຊຶ່ງເປັນຄຳເຕືອນອັນຮຸນແຮງ. "ຮັກສາຕົວໄວ້ຈາກ" ຈາກສັດຕູອັນຮ້າຍກາດຕົວນີ້ມັນຈະພະຍາຍາມປອງຮ້າຍມະນຸດຢູ່ທຸກເວລາ ຄື "ການໂລບທຸກຢ່າງ." ການໂລບເປັນການລະເມີດພຣະບັນຍັດສິບປະການ (ພຣະບັນຍັດສອງ 5:21). ການໂລບນັ້ນເປັນການໄຫວ້ພຣະທຽມໃນສາຍຕາຂອງພຣະເຈົ້າ (ໂກໂລຊາຍ 3:5).

ເປັນຫຍັງພຣະອົງຈຶ່ງເຕືອນບໍ່ໃຫ້ມີຄວາມໂລບ? ເຫດຜົນຈະເຫັນໄດ້ຈາກຫລັກຄຳສອນທີ່ພວກເຮົາຈະໄດ້ສຶກສາກັນຢູ່ນີ້ "ເພາະຊີວິດບໍ່ໄດ້ຂຶ້ນຢູ່ກັບເຂົ້າຂອງອັນບໍຣິບູນທີ່ຕົນມີນັ້ນ" (ລູກາ 12:15). ພວກເຮົາຈະຕ້ອງຕໍ່ສູ້ບໍ່ໃຫ້ເຂົ້າໃນການທົດລອງຂອງຄວາມໂລບ, ພວກເຮົາຈະຕ້ອງພໍໃຈຢູ່ໃນສິ່ງທີ່ຕົນມີ, ຣົດທີ່ເຮົາຂັບ, ເສື້ອຜ້າທີ່ເຮົາໃສ່, ຫລື ພໍໃຈໃນຕົວເຮົາເອງວ່າຈະເປັນຮູບຮ່າງຢ່າງໃດ. ພວກເຮົາມີຄຸນຄ່າກວ່າສິ່ງທີ່ຕາເຫັນ ຫລືສິ່ງຂອງທີ່ພວກເຮົາຄອບຄອງຢູ່ໃນໂລກນີ້.

ພຣະທັມຂອງພຣະເຈົ້າໄດ້ເຕືອນພວກເຮົາຢູ່ເລື້ອຍໆຈາກການໂລບ (ມາຣະໂກ 7:22; ໂຣມ 1:29; ເອເຟໂຊ 4:19; 2 ເປໂຕ 2:3). ພຣະທັມເອເຟໂຊ 5:3 ໄດ້ສລູບໄປວ່າ: "ແຕ່ການເອີ່ຍເຖິງການຫລິ້ນຊູ້, ການຊົ່ວຮ້າຍທຸກຢ່າງ, ຫລືຄວາມໂລພະຕັນຫາກໍດີ ຢ່າໃຫ້ມີຂຶ້ນໃນຖ້າມກາງທ່ານທັງຫລາຍ." ຕໍ່ໄປ 1 ຕີໂມທຽວ 6:10 ໃຫ້ຄວາມແຈ່ມແຈ້ງອີກວ່າ : "ເພາະວ່າການຮັກເງິນເປັນເຄົ້າມູນຂອງຄວາມຊົ່ວທຸກຢ່າງ ແລະເພາະເຫດຄວາມໂລບນີ້ແຫລະ, ຈຶ່ງຊັກຈູງຜູ້ລາງຄົນໃຫ້ຫລົງໄປຈາກຄວາມເຊື່ອ ແລະແທງຕົວເອງຈົນຊອດດ້ວຍຄວາມເຈັບແສບຫລາຍປະການ."

ພຣະທັມຂອງພຣະເຈົ້າບໍ່ໄດ້ກ່າວໂທດ ຫລືສາບແຊ່ງວັດຖຸສິ່ງຂອງ, ແຕ່ພຣະທັມຂອງພຣະເຈົ້າກ່າວໂທດໃສ່ໃນເຣື່ອງການຮັກວັດຖຸ. ບໍ່ແມ່ນເງິນເປັນສິ່ງໃຫ້ໂທດ, ແຕ່ວ່າ "ການຮັກເງິນ" ນັ້ນ "ເຄົ້າມູນຂອງຄວາມຊົ່ວທຸກຢ່າງ."

ມີຄົນຖາມມະຫາເສດຖີຂອງໂລກວ່າ ມີເງິນຫລາຍປານໃດຈຶ່ງວ່າພໍ? ລາວຕອບເຂົາວ່າ, "ມີຕື່ມອີກຈັກໜ່ອຍນຶ່ງ."

## ຈົ່ງຕຽມພ້ອມວັນນີ້ໃຫ້ກັບພຣະເຈົ້າ (12:16-20)

ພຣະເຢຊູຮູ້ວ່າປະຊາຊົນຟັງພຣະອົງດ້ວຍຄວາມສົງສັຍໃນຄຳເວົ້າຂອງພຣະອົງ. ວັທນະທັມແລະສັງຄົມໃດໆກໍຕາມໃນປວັດສາດມາຈົນເຖິງສມັຍນີ້ເຂົ້າໃຈວ່າຊີວິດອັນແທ້ຈິງ ແລະຄວາມສຳເຣັດນັ້ນຂຶ້ນຢູ່ກັບວັດຖຸສິ່ງຂອງເປັນເຄື່ອງວັດແທກ. ຄົນຜູ້ໃດມີຊັບສົມບັດຫລາຍຫລືກະສັດອົງໃດມີອຳນາດສູງສົ່ງຫລາຍ ຄວາມສຳເຣັດຈະເປັນຂອງຜູ້ນັ້ນ. ສະນັ້ນ ພຣະເຈົ້າຂອງພວກເຮົາຈຶ່ງໄດ້ຍົກເຣື່ອງຄຳອຸປມາໃຫ້ພວກເຂົາຟັງເປັນການອະທິບາຍໃຫ້ເຫັນກ່ຽວກັບທາດແທ້ຂອງເຣື່ອງວັດຖຸສິ່ງຂອງ.

ພຣະອົງໄດ້ເລີ່ມດ້ວຍຂໍ້ຄວາມດັ່ງນີ້ "ທີ່ດິນຂອງເສດຖີຄົນນຶ່ງໄດ້ເກີດຜົນບໍຣິບູນ" (ລູກາ 12:6). ພຣະເຢຊູໃຊ້ຄຳເວົ້າຢ່າງແຈ່ມແຈ້ງ. ເສດຖີຄົນນັ້ນບໍ່ໄດ້ເກີດຜົນ. ທີ່ເກີດຜົນນັ້ນແມ່ນດິນຊຶ່ງພຣະເຈົ້າເປັນເຈົ້າຂອງໃຫ້ເກີດຜົນ. ຊາວສວນເປັນຜູ້ໄດ້ຮັບພຣະພອນອັນນີ້, ບໍ່ແມ່ນເປັນຜູ້ກໍ່ໃຫ້ເກີດພຣະພອນ.

ແຕ່ລາວບໍ່ຮູ້ເລີຍ: "ເສດຖີຄົນນັ້ນຈຶ່ງຄຶດໃນໃຈວ່າ, ເຮົາຈະເຮັດແນວໃດໜໍ ເພາະບໍ່ມີບ່ອນຈະເກັບຜົລປູກຂອງເຮົາໄວ້" (12:17). ນີ້ເປັນຄວາມຄຶດຂອງລາວ: ຊີວິດເກີດຈາກຄວາມອຸດົມສົມບູນທີ່ຕົນເປັນເຈົ້າຂອງ, ແລະ ສະນັ້ນເຮົາຕ້ອງການໃຫ້ມີຫ້ອງຫລາຍກວ່າເກົ່າ ເພື່ອສະສົມໄວ້ຫລາຍກວ່າເກົ່າ.

ສະນັ້ນລາວຈຶ່ງມີໂຄງການຕໍ່ໄປ: "ເຮົາຈະເຮັດດັ່ງນີ້ ຄືຈະມ້າງເລົ້າທັງຫລາຍຂອງເຮົາເສັຽ ແລະຈະສ້າງຂຶ້ນໃໝ່ໃຫ້ໃຫຍ່ກວ່າເກົ່າ ແລ້ວເຮົາຈະຮວບຮວມເຂົ້າກັບສິ່ງຂອງທັງໝົດຂອງເຮົາໄວ້ທີ່ນັ້ນ" (12:18). ໃຫ້ນັບເບິ່ງຄຳວ່າ ເຮົາ ຊຶ່ງເປັນສັພນາມແລະ ຂອງເຮົາ ສັພນາມທີ່ເປັນເຈົ້າຂອງມີຈັກເທື່ອໃນພຣະທັມຂໍ້ນີ້ ແລະທ່ານຈະເຫັນປ່ອງຢ້ຽມສ່ອງເຂົ້າໄປໃນຈິດວິນຍານຂອງມະນຸດ.

ນີ້ແມ່ນຄຳສລູບຂອງເສດຖີ, "ເຮົາຈະເວົ້າແກ່ຈິດໃຈຂອງເຮົາວ່າ ຈິດໃຈເອີຍ ເຈົ້າມີເຂົ້າຂອງເກັບໄວ້ພໍຫລາຍປີ" (12: 18). "ຈົ່ງຢູ່ສະບາຍ" ພາສາກຣີກ ບົ່ງບອກເຖິງຈົ່ງຢູ່ສະບາຍຕລອດໄປ. "ກິນແລະດື່ມດ້ວຍຄວາມປິຕິຍິນດີເທາະ" ເສດຖີຄົນນີ້ໄດ້ຄຳເວົ້າມາຈາກປັນຍາຈານຊຶ່ງມີຄຳເວົ້າສາມຄຳ ຄືກິນ, ດື່ມ, ແລະປິຕິຍິນດີ (ປັນຍາຈານ 2:24; 3:13; 5:18; 8:15). ຜູ້ປະກາດພຣະທັມ ເອຊາຢາໄດ້ກ່າວຕາມຖ້ອຍຄຳຂອງອົງພຣະຜູ້ເປັນເຈົ້າ ພຣະອົງຊົງກ່າວໂທດຜູ້ທີ່ໃຊ້ຊີວິດຢ່າງນີ້ໂດຍບໍ່ຕຶກຕອງ (ເອຊາຢາ 22:13; ແລະໃຫ້ເບິ່ງ 1 ໂກຣິນໂທ 15:32 ອີກດ້ວຍ).

ຕາມແນວຄິດຄວາມນິຍົມກັນຂອງຊາວຢິວເຫັນວ່າ ຊາວສວນເສດຖີຄົນນີ້ເຮັດຖືກແລ້ວ. ຄວາມມັ່ງຄັ່ງສົມບູນເປັນສັນຍາລັກພຣະພອນຂອງພຣະເຈົ້າ; ຄວາມທຸກຍາກລຳບາກເປັນການລົງໂທດຈາກພຣະເຈົ້າ. ຜູ້ຂຽນເພງສັຣເສີນກ່າວວ່າ "ຄົນອື່ນຈະຍົກຍ້ອງທ່ານເມື່ອທ່ານຈະເຣີນຂຶ້ນ" (ເພງສັຣເສີນ 49:18). ຜູ້ຂຽນເພງສັຣເສີນຍັງກ່າວຕື່ມອີກວ່າໃນສອງຂໍ້ຕໍ່ໄປ "ມະນຸດຊຶ່ງມີຄວາມຮັ່ງມີ ແຕ່ຂາດຄວາມເຂົ້າໃຈ ເຂົາກໍເໝືອນສັດເດັຽລະສານທີ່ພິນາດ" (ເພງສັຣເສີນ 49:20). ພຣະເຢຊູຊົງກ່າວຢ່າງແຈ່ມແຈ້ງວ່າ ຄວາມຮັ່ງມີບໍ່ໄດ້ປະກັນວ່າມາຈາກພຣະເຈົ້າ.

"ແຕ່ພຣະເຈົ້າຊົງກ່າວຕໍ່ຜູ້ນັ້ນວ່າ, "ໂອ ຄົນໂງ່ເອີຍ" (12:20). ຄຳວ່າ "ຄົນໂງ່" ໃນພຣະຄັມພີມີຄວາມໝາຍວ່າ ຄົນບໍ່ຮູ້ເຫດແລະຜົນ, ຄົນບໍ່ຕຶກຕອງແລະເປັນຄົນຂາດສິນທັມ. ເປັນຫຍັງຊາວສວນເສດຖີຄົນນີ້ຈຶ່ງເປັນຢ່າງນີ້? ເພາະວ່າ "ໃນຄືນວັນນີ້ເຂົາຈະເອີ້ນເອົາຈິດໃຈຂອງເຈົ້າໄປຈາກເຈົ້າ" (12:20). ພາສາກຣີກໃຊ້ຄຳວ່າ "ເຂົາ" ຕາມຄວາມເຂົ້າໃຈຂອງຊາວຢິວແລ້ວ "ເຂົາ" ໝາຍເຖິງພຣະເຈົ້າ ເພາະວ່າພວກເຂົາບໍ່ກ້າເອີ້ນນາມຊື່ຂອງພຣະເຈົ້າ. ຄວາມໝາຍຂອງພຣະເຢຊູນັ້ນກໍຄືວ່າ ພຣະເຈົ້າຈະມາເອົາຈິດວິນຍານລາວໄປ. ພຣະອົງເລີຍຕັ້ງຄຳຖາມຕໍ່ໄປອີກວ່າ, "ແລ້ວສິ່ງທີ່ເຈົ້າຈັດແຈງໄວ້ນັ້ນຈະຕົກເປັນຂອງໃຜ"

ຄວາມຕາຍມາເຖິງພວກເຮົາທຸກໆຄົນ, ແມ່ນແຕ່ເມື່ອພວກເຮົາບໍ່ປາຖນາຢາກພົບ. ຍ່າຂອງຂ້າພະເຈົ້າມັກເວົ້າຢູ່ສເມີ "ຄວາມຕາຍນີ້ແຂນຄໍທຸກບາດຍ່າງ ຕື່ນມື້ເຊົ້າເຫັນໜ້າຈຶ່ງວ່າຍັງ." ພຣະທັມສຸພາສິດ 27:1 ມີຄຳແນະນຳທີ່ດີ "ຢ່າໂອ້ອວດເຣື່ອງມື້ອື່ນ ເພາະເຈົ້າບໍ່ຮູ້ດອກວ່າແມ່ນຫຍັງຈະເກີດຂຶ້ນໃນບັດນີ້ຕໍ່ໄປ."

ບໍ່ມີຜູ້ໃດເລີຍຖືກຍົກເວັ້ນຈາກວັນເອີ້ນຂອງພຣະເຈົ້າແລະການຕັດສິນຂອງພຣະອົງ. ກະສັດເບນຊັດຊາເຣເປັນຜູ້ມີອຳນາດສູງສຸດໃນໂລກ ໃນຄືນງານລ້ຽງຂອງພະອົງ "ມືມີມະນຸດປາກົດຂຶ້ນ ມືນັ້ນໄດ້ຂຽນຝາພຣະຣາຊວັງບ່ອນມີໂຄມໄຟ

ຕັ້ງຮຸ່ງຢູ່" ຂໍ້ຄວາມນັ້ນໄດ້ກ່າວເຖິງວັນພິພາກຂອງພຣະອົງແລະຣາຊອານາຈັກຂອງພຣະອົງດ້ວຍ (ດານີເອນ 5:3-31). ໃຫ້ທ່ານຄິດເບິ່ງນັກການເມືອງແລະນັກທຸຣະກິດໃນຫມູ່ງນານີ້ ພວກເຂົາລົ້ມລະລາຍລົງແລະອັບອາຍຂາຍຫນ້າຫລາຍ. ພວກເຮົາຈະຕ້ອງຕຽມຕົວໃຫ້ພ້ອມທຸກໆວັນເພື່ອຈະພົບກັບພຣະເຈົ້າ. ວັນນີ້ເປັນວັນນຶ່ງທີ່ກ້າວໄປໃກ້ວັນການສະເດັດມາຂອງພຣະເຢຊູຄຣິດໃນປະວັດສາດຂອງມະນຸສໂລກ.

**<u>ຈົ່ງຮັ່ງມີກັບພຣະເຈົ້າ</u>** (12:21)

ພຣະເຢຊູໄດ້ສລຸບຂໍ້ຄວາມອັນສຳຄັນວ່າ, "ຄົນທີ່ທ້ອນໂຮມຊັບສົມບັດໄວ້ສຳລັບຕົນແລະບໍ່ຮັ່ງມີຕໍ່ພຣະເຈົ້າ ກໍເປັນຢ່າງນັ້ນແຫລະ" (ລູກາ 12:21). ຄວາມຮັ່ງມີຂອງໂລກບໍ່ໄດ້ເຮັດອັນໃດດີເລີຍໃຫ້ເຮົາໃນຊີວິດອັນຕລອດໄປເປັນນິດ. ຖ້າພວກເຮົາບໍ່ຮັ່ງມີຕໍ່ພຣະເຈົ້າ ພວກເຮົາກໍບໍ່ມີຄວາມຮັ່ງມີຫຍັງເລີຍ. ສະນັ້ນ ພວກເຮົາຈະເຮັດຢ່າງໃດ ເພື່ອຈະມີຄວາມຮັ່ງມີຕໍ່ພຣະເຈົ້າ?

ກ່ອນອື່ນຫມົດ ທ່ານຈະຕ້ອງເຂົ້າມາເປັນຄົນໃນຄອບຄົວຂອງພຣະເຈົ້າເສັຽກ່ອນ. ເພື່ອຄວາມແນ່ນອນວ່າ ທ່ານໄດ້ຮັບເອົາພຣະເຢຊູມາເປັນເຈົ້ານາຍຂອງທ່ານແລະພຣະຜູ້ໂຜດໃຫ້ພົ້ນຂອງທ່ານ. ບາງຄົນຄິດວ່າ ເພາະເຂົາໄດ້ຖວາຍເວລາແລະເງິນໃຫ້ກັບໂບດຂອງເຂົາແລ້ວ ເຂົາກໍເປັນຂອງພຣະຄຣິດ ຄືໄດ້ເສັຽຄ່າທຳນຽມໃຫ້ພຣະເຈົ້າແລ້ວ. ພວກເຮົາຖວາຍເພາະວ່າພວກເຮົາມີຄວາມສັມພັນກັບພຣະເຈົ້າ, ບໍ່ແມ່ນຖວາຍເພື່ອຊື້ຄວາມສັມພັນ.

ອັນທີສອງ ຢູ່ເພື່ອພຣະບິດາຂອງທ່ານ. ຈົ່ງຈຳໄວ້ວ່າ ພຣະເຈົ້າແຫ່ງຈັກກະວານຊົງຮັກທ່ານ (ເອຊາຢາ 30:18). ຈົ່ງໃຊ້ຊັບສົມບັດຂອງທ່ານທຸກຕອນ, ເງິນທຸກດອນລາແລະທຸກໂອກາດ ເພື່ອຂຍາຍຣາຊແຜ່ນດິນຂອງພຣະເຈົ້າຢູ່ໃນໂລກນີ້. ຈົ່ງຖວາຍນຶ່ງສ່ວນສິບໃຫ້ພຣະອົງໂດຍຜ່ານທາງໂບດທີ່ທ່ານສັງກັດຢູ່, ແລະໃຊ້ສິ່ງທີ່ພຣະເຈົ້າຊົງຜະລິດທີ່ໄດ້ຮັກສາໄວ້ເພື່ອເປັນທີ່ຖວາຍກຽດແກ່ພຣະເຈົ້າ.

ສາມນາ ໃຫ້ນຳຄົນໃນຄອບຄົວຂອງທ່ານໃຫ້ໄວ້ວາງໃຈໃນພຣະເຈົ້າໃນສິ່ງຂອງແລະຄວາມຕັ້ງໃຈຂອງພວກເຂົາ. ໃຫ້ເລີ້ມສັ່ງສອນລູກຫລານຂອງທ່ານວ່າ "ຊີວິດຂອງມະນຸດບໍ່ຂຶ້ນຢູ່ກັບເຂົ້າຂອງອັນບໍຣິບູນທີ່ຕົນມີຢູ່" (ລູກາ 12:15). ຂໍ້ຄວາມນີ້ເປັນຖ້ອຍຄຳສຳລັບຄົນໃນສັງຄົມແລະວັທນະທັມສມັຍນີ້ ທ່ານຈະຕ້ອງສອນພວກເຂົາຕລອດຊີວິດຂອງພວກເຂົາ. ໃຫ້ຈຳໄວ້ວ່າ ທ່ານບໍ່ສາມາດຈະໃຫ້ສິ່ງຂອງນີ້ແກ່ຄົນອື່ນ ຖ້າທ່ານບໍ່ໄດ້ເປັນຜູ້ຄອບຄອງມັນ. ສິ່ງຂອງນັ້ນຈະເປັນຕົວຄອບຄອງທ່ານ.

<u>ຄຳຖາມ</u>

1. ທີ່ດິນທີ່ເກີດຜົນນັ້ນຊາວສວນເສດຖີເອົາມາເປັນຂອງລາວເອງ. ສົມບັດຂອງທ່ານທີ່ມີຢູ່ນັ້ນ ເປັນຜົນຊຶ່ງທ່ານໄດ້ອອກແຮງງານມີຢູ່ຫລາຍປານໃດ? ມີຫລາຍປານໃດທີ່ມາຈາກການຜລິດຜົນໂດຍຕົງຂອງພຣະເຈົ້າ?
2. ປະຊາຊົນໃນສມັຍນີ້ໄດ້ມ້າງເລົ້າເຂົ້າຂອງພວກເຂົາແລະໄດ້ສ້າງຂຶ້ນໃຫມ່ໃຫ້ໃຫຍ່ກວ່າເກົ່າຕາມເສຖກິດຂອງປະຈຸບັນນີ້ດ້ວຍວິທີທາງໃດ?
3. ພຣະເຢຊູໄດ້ເຕືອນພວກເຮົາວ່າ ຊີວິດຂອງພວກເຮົາຈະຖືກເອີ້ນໄປຈາກພວກເຮົາຢ່າງກະທັນຫັນ. ການຈາກໄປຂອງຜູ້ໃດໃນຫມູ່ງນີ້ທີ່ເປັນການຕັກເຕືອນທ່ານ?
4. ມີພາກສ່ວນໃດຂອງຊີວິດທ່ານທີ່ຍັງບໍ່ທັນໄດ້ຖວາຍໃຫ້ກັບພຣະເຈົ້າ ຖ້າຫາກວ່າຖືກຖາມມາ? ການງານຂອງທ່ານບໍ? ແຜນການຂອງທ່ານເພື່ອຄອບຄົວຂອງທ່ານ? ຄວາມຕັ້ງໃຈຂອງທ່ານໃນອະນາຄົດ?

# <u>ບົດຮຽນທີ 5</u>
# <u>ຈົ່ງສຳນຶກເຖິງຄວາມຈຳເປັນໃນການກັບໃຈ</u>

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນ:**</u> ລູກາ 13:1-9

<u>**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:**</u> ລູກາ 13:1-9

<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ພຣະເຢຊູຊົງຮຽກຮ້ອງໃຫ້ຝູງຊົນຮັບເອົາພຣະຄຸນຂອງພຣະເຈົ້າ ພຣະອົງໃຫ້ໂອກາດພວກເຂົາກັບໃຈເສັຽໃຫມ່ ໃນເມື່ອພວກເຂົາຍັງມີໂອກາດຢູ່.

<u>**ຄຳຖາມເພື່ອການສຳຫລວດ:**</u> ເນື່ອງດ້ວຍພຣະຄຸນຂອງພຣະເຈົ້າ ພວກເຮົາຈຳເປັນບໍ່ຈະຕ້ອງກັບໃຈ?

<u>**ຈຸດປະສົງຂອງບົດຮຽນນີ້:**</u> ດ້ວຍຄວາມສັມພັນກັບພຣະຄຸນຂອງພຣະເຈົ້າແລະການຮຽກຮ້ອງຂອງພຣະອົງເພື່ອໃຫ້ຂ້າພະເຈົ້າກັບໃຈເສັຽໃຫມ່ໃນຊີວິດນີ້.

## <u>ບົດຮຽນ</u>

<u>**ຄຳນຳ**</u>

ບໍ່ມີຜູ້ໃດຮູ້ວ່າ ເມື່ອໃດພວກເຮົາຈະຖືກຕັດສິນຈາກພຣະເຈົ້າ. ສະນັ້ນ ພວກເຮົາຈຳເປັນຕ້ອງຍອມຮັບພຣະຄຸນຂອງພຣະເຈົ້າ ຊຶ່ງພຣະອົງຊົງໃຫ້ໂອກາດກັບໃຈເສັຽໃຫມ່ ໃນຂນະທີ່ພວກເຮົາຍັງມີໂອກາດຢູ່.

<u>**ຄວາມທຸກຍາກລຳບາກທີ່ໄດ້ຮັບແມ່ນຍ້ອນຄວາມບາບສເມີໄປບໍ?**</u> (13:1-3)

ປວັດສາດບໍ່ໄດ້ບັນທຶກເຖິງເຫດການທີ່ພວກຝູງຊົນໄດ້ນຳມາເລົ່າໃຫ້ພຣະເຢຊູຟັງ, ເຖິງຢ່າງໃດກໍຕາມ ພວກເຮົາກໍຮູ້ຢູ່ແລ້ວ ການປະພຶດຂອງປີລາດຕໍ່ຊາວຢິວຕັ້ງແຕ່ໃດມາ. ພາຍໃນສິບປີທີ່ລາວປົກຄອງຢູ່ນັ້ນ ກອງທັບຂອງລາວໄດ້ຂ້າຊາວຊາມາເຣັຽທີ່ກຳລັງຂຶ້ນໄປເທິງພູ ເຄຣິຊິມ; ລາວນຳຮູບໂຄຣົບຂອງຊາວໂຣມັນເຂົ້າມາໃນກຸງເຢຣູຊາເລັມແລະເປັນເຫດໃຫ້ມີການວຸ້ນວາຍ; ລາວຢຶດເອົາຊັບສິນບັດໃນຄັງຂອງພຣະວິຫານ ແລ້ວເອົາຊັບສິນບັດຈຳນວນນັ້ນໄປສ້າງຂົວເພື່ອນຳເອົາທໍ່ນໍ້າປະປາໃຫ້ມາເຖິງສະຖານທີ່ຂອງລາວ.

ເປັນທີ່ຮູ້ກັນແລ້ວວ່າ ຊາວຄາລີເລເປັນກຸ່ມທີ່ຕໍ່ຕ້ານຈັກກະພັດໂຣມຢ່າງຮຸນແຮງ. ບາງກຸ່ມອາດຈະສ້າງຄວາມຈໍຣະກັມໃນຂນະມີງານສລອງໃນກຸງເຢຣູຊາເລັມ. ທະຫານຂອງປີລາດອາດຈະຂ້າພວກເຂົາໃນທີ່ນັ້ນ ເຖິງແມ່ນວ່າພວກເຂົາກຳລັງຖວາຍເຄື່ອງບູຊາໃນພຣະວິຫານ. ໃນທຳນອງດຽວກັນນີ້ ປີລາດໄດ້ເອົາເລືອດຂອງພວກເຂົາ " ປົນກັບເຄື່ອງບູຊາທີ່ເຂົາກຳລັງຖວາຍ."

ຝູງຊົນມາຈາກກຸງເຢຣູຊາເລັມໄດ້ນຳຂ່າວເສົ້າສລົດໃຈມາໃຫ້ພຣະເຢຊູຟັງ. ພວກເຂົາອາດຈະຢາກໃຫ້ພຣະອົງກ່າວໂທດປີລາດໃນການກະທຳອັນປ່າເຖື່ອນຢ່າງນີ້. ຫລືວ່າ ພວກເຂົາເລົ່າເຫດການນີ້ໃຫ້ພຣະອົງຟັງ ເຫມືອນກັບວ່າພວກເຂົາຢາກຈະພິສູດໃຫ້ພຣະອົງເຫັນວ່າ ຊາວຄາລີເລທີ່ຖືກຂ້ານັ້ນເຮັດບາບຊຶ່ງໄດ້ນຳຄວາມທຸກລຳບາກຈົນເຖິງແກ່ຄວາມຕາຍມາສູ່ຕົນເອງ. ຄຳຕອບຂອງພຣະອົງໄດ້ສະແດງໃຫ້ເຫັນວ່າ ພວກເຂົາມີເຈຕນາກ່າວເຖິງເຣື່ອງຂອງຊາວຄາລີເລຫລາຍກວ່າ. ສະນັ້ນ ພຣະອົງຈຶ່ງຖາມພວກເຂົາວ່າ (13:2), "ພວກທ່ານຄຶດວ່າຊາວຄາລີເລຫມູ່ນັ້ນເປັນຄົນບາບລື່ນກວ່າຊາວຄາລີເລຫມູ່ອື່ນທັງຫມົດ ເພາະເຂົາໄດ້ຖືກຄວາມທຸກລຳບາກຢ່າງນັ້ນຫລື?"

ພວກເຮົາໄດ້ມາພົບພໍ້ກັບຫລັກຄຳສອນອັນເກົ່າແກ່ຂອງຊາວຢິວ ຊຶ່ງເປັນຫລັກຄວາມເຊື່ອທີ່ມັກຈະໃຊ້ຜິດຢູ່ຕລອດມາ

ຫລັກຄຳສອນນັ້ນໄດ້ກ່າວວ່າ ຄວາມທຸກລຳບາກແມ່ນຍ້ອນການເຮັດບາບສເມີໄປ. ພວກເຮົາຈະເຫັນຫລັກຄວາມເຊື່ອຢ່າງນີ້ມີມາໃນສມັຍບູຮານຊຶ່ງເຫັນໄດ້ໃນພຣະທັມໂຢບ 4:7 "ບ່ອນໃດແດ່ຄົນທຳຊອບນັ້ນຈະພົບພໍ້ພັຍພິບັດ." ເພື່ອນຂອງໂຢບຍັງກ່າວຊ້ຳອີກວ່າ, "ລູກຂອງເຈົ້າອາດໄດ້ເຮັດບາບຕໍ່ສູ້ພຣະອົງ ດັ່ງນັ້ນພຣະອົງຈຶ່ງໃສ່ໂທດທີ່ເຂົາຄວນໄດ້ຮັບ" (ໂຢບ 8:4); "ແຕ່ພຣະເຈົ້າຈະບໍ່ປະຖິ້ມຄົນທີ່ສັດຊື່ ຫລືເຄີຍຊ່ອຍເຫລືອຄົນທີ່ໄດ້ເຮັດຊົ່ວໄວ້" (ໂຢບ 8:20).

ຕາມສະຕິປັນຍາຂອງຄົນທົ່ວໄປແລ້ວຈະເຂົ້າໃຈວ່າ ຄວາມທຸກລຳບາກແມ່ນການຕັດສິນລົງໂທດຈາກພຣະເຈົ້າຍ້ອນການເຮັດບາບ. ຖ້າຄົນຜູ້ນຶ່ງລົ້ມປ່ວຍລົງ, ຜູ້ຍິງເປັນຫມັນ, ຄອບຄົວໄດ້ຮັບຄວາມທຸກຍາກ ເຫດການດັ່ງກ່າວແມ່ນຖືກພຣະເຈົ້າລົງໂທດ. ຄົນຮັ່ງມີແມ່ນພຣະເຈົ້າໃຫ້ພອນ. ຄົນໄດ້ຮັບຄວາມທຸກລຳບາກແມ່ນຄົນໄດ້ກະທຳຜິດອັນໃດອັນນຶ່ງ.

ສາວົກຂອງພຣະເຢຊູກໍມີຄວາມຄິດຢ່າງດຽວກັນ. ເມື່ອພວກເຂົາເຫັນຄົນຕາບອດຜູ້ນຶ່ງ ຕາລາວບອດມາຕັ້ງແຕ່ນີ້ເກີດ ແລະ ພວກເຂົາຖາມພຣະອົງວ່າ(ໂຢຮັນ 9:2), "ພຣະອາຈານເອີຍ, ຜູ້ໃດໄດ້ເຮັດຜິດບາບ ຄົນນີ້ຫລືພໍ່ແມ່ຂອງຕົນ ລາວຈຶ່ງເກີດມາຕາບອດ?" ພວກເຂົາຄິດບໍ່ອອກເລີຍວ່າ ໃນກໍຣະນີອື່ນກໍອາດເປັນໄດ້. ແຕ່ພຣະອົງຊົງຕອບວ່າ, "ບໍ່ແມ່ນຄົນນີ້ຫລືພໍ່ແມ່ຂອງຕົນໄດ້ເຮັດບາບ ແຕ່ເກີດມາເພື່ອໃຫ້ພຣະຣາຊກິດຂອງພຣະເຈົ້າປາກົດໃນຕົວຄົນນີ້" (ໂຢຮັນ 9:3).

ໃນພຣະທັມຕອນນີ້ພຣະເຢຊູຊົງກ່າວຢ່າງແຈ່ມແຈ້ງວ່າ (ລູກາ 13:2), "ພວກທ່ານຄິດວ່າຊາວຄາລິເລຫມູ່ນັ້ນເປັນຄົນບາບລື່ນກວ່າຊາວຄາລິເລຫມູ່ອື່ນທັງຫມົດ ເພາະເຂົາໄດ້ຖືກຄວາມທຸກລຳບາກຢ່າງນັ້ນຫລື?"

**ຄວາມຫາຍະນະແມ່ນການບັນຊາສັ່ງຈາກພຣະເຈົ້າສເມີໄປບໍ?** (13:4-5)
ຝູງຊົນອາດຈະເຂົ້າໃຈຜິດວ່າຊາວຄາລິເລກຸ່ມນັ້ນບໍ່ໄດ້ຕາຍຍ້ອນຄວາມບາບຂອງພວກເຂົາ, ແຕ່ແມ່ນຄວາມຊົ່ວຮ້າຍຂອງປີລາດເອງ. ສຳລັບຝູງຊົນທີ່ຕາຍໄປຍ້ອນພັຍທັມຊາດເດຈະວ່າຢ່າງໃດ? ແນ່ນອນ ພັຍວິບັດທີ່ປາສຈາກການກະທຳຂອງມະນຸດເປັນການພິສູດໃຫ້ເຫັນວ່າພຣະເຈົ້າຊົງຕັດສິນລົງໂທດ. ຄົນເມົາເຫລົ້າຂັບຣົດບໍ່ແມ່ນພຣະເຈົ້າເປັນຕົ້ນເຫດ, ແຕ່ວ່າ ພຣະເຈົ້າເຮັດໃຫ້ເກີດລົມພະຍຸແລະແຜ່ນດິນໄຫວໄດ້ຢ່າງແນ່ນອນ.

ພຣະເຢຊູໄດ້ກ່າວສລຸບໃຫ້ເຫັນໃນຫລັກຄຳສອນຊຶ່ງພວກເຂົາໃຊ້ເປັນທາງອອກວ່າ (13:4): "ຫລືສິບແປດຄົນນັ້ນຊຶ່ງປ້ອມໃນຊີໂລອາມໄດ້ເຈື່ອນທັບເຂົາຕາຍເສັຽນັ້ນ ທ່ານທັງຫລາຍຄິດວ່າເຂົາເປັນຄົນຜິດລື່ນກວ່າຄົນທັງປວງທີ່ອາສັຍຢູ່ໃນກຸງເຢຣູຊາເລັມຫລື?"

ຊີໂລອາມແມ່ນສະເກັບນ້ຳຢູ່ທິດຕາເວັນອອກສ່ຽງໃຕ້ຂອງກຸງເຢຣູຊາເລັມ. ປ້ອມໃນຊີໂລອາມອາດຈະຕິດກັບກຳແພງອ້ອມເມືອງ. ພວກເຮົາບໍ່ມີຂໍ້ມູນໃນປວັດສາດທີ່ຈະມາຢັ້ງຢືນໃຫ້ເຫັນເຫດຮ້າຍທີ່ເກີດຂື້ນ, ແຕ່ວ່າ ຕຶກກຳແພງອາດເພພັງລົງໄດ້ ແລະແຜ່ນດິນໄຫວເກີດຂຶ້ນໃນໂຊງເຂດນັ້ນ ສ້າງຄວາມເສັຽຫາຍເກີດຂື້ນຢູ່ນັບບໍ່ຫນ້ອຍ. ສະນັ້ນສິບແປດຄົນທີ່ໄດ້ຮັບເຄາະຮ້າຍຈົນເສັຽຊີວິດນັ້ນ ພວກເຂົາອາດຈະຢູ່ໃກ້ອ້ອມແອ້ມສະເກັບນ້ຳນັ້ນ ຫລື ກຳລັງອາບນ້ຳຢູ່ໃນຂນະເຫດຮ້າຍເກີດຂື້ນກໍໄດ້.

ນີ້ຄືສິ່ງພິສູດໃຫ້ເຫັນຄວາມຄິດຂອງຊາວຢິວບາງກຸ່ມ ພວກເຂົາຄິດວ່າແມ່ນພຣະເຈົ້າເປັນຜູ້ລົງມືແລະລົງໂທດ. ແນ່ນອນຢູ່ແລ້ວ ຄວາມບາບຂອງມະນຸດເປັນຕົ້ນເຫດຂອງການຕາຍຂອງພວກເຂົາ. ແຕ່ພຣະເຢຊູຊົງກ່າວດັ່ງນີ້ ເພື່ອໃຫ້ພວກເຂົາເຂົ້າໃຈ (13:15): "ເຮົາບອກທ່ານທັງຫລາຍວ່າ ບໍ່ແມ່ນດອກ." ພຣະອົງກ່າວຕໍ່ພວກເຂົາໃນສິ່ງທີ່ພວກເຂົາຈະຕ້ອງປະຕິບັດນັ້ນວ່າ: "ແຕ່ຖ້າພວກທ່ານຫມົດທຸກຄົນບໍ່ຖິ້ມໃຈເກົ່າເອົາໃຈໃຫມ່ ກໍຈະຈິບຫາຍໄປຫມົດເຫມືອນກັນ."

ຄຳສອນຂອງພຣະອົງສລູບໄດ້ຢ່າງສັ້ນໆດັ່ງນີ້. ເຫດການທີ່ເກີດຂຶ້ນ ບໍ່ແມ່ນການຕັດສິນລົງໂທດຈາກພຣະເຈົ້າທຸກເທື່ອ. ຄວາມທຸກລຳບາກຂອງພວກເຮົາອາດຈະສະແດງໃຫ້ເຫັນວ່າພຣະເຈົ້າບໍ່ພໍພຣະທັຍກັບພວກເຮົາ, ຫລືເປັນການກະທຳຂອງຊາຕານ, ຫລື ເປັນການກະທຳຂອງໂລກກໍໄດ້. ບໍ່ມີຜູ້ໃດເລີຍຖືກຍົກເວັ້ນຈາກຄວາມທຸກລຳບາກ. ຖ້າຫາກວ່າເພື່ອນທີ່ດີທີ່ສຸດຂອງພຣະອົງໄດ້ຮັບປະສົບການຖືກເນຣະເທດໄປຢູ່ເກາະປັດໂມ ແລະສາວົກຂອງພຣະອົງຖືກເຂັ່ນຂ້າຍ້ອນຄວາມເຊື່ອໃນພຣະອົງ, ໃນຊີວິດນີ້ ບໍ່ມີໃຜເລີຍຈະຖືກຮັບປະກັນວ່າຈະບໍ່ໄດ້ຮັບຄວາມເຈັບປວດແລະຄວາມລຳບາກໃດໆທັງສິ້ນ. ບໍ່ມີຜູ້ໃດເລີຍມີສິດທິ ຕີຄວາມຫມາຍຂອງຄວາມລຳບາກຂອງຄົນອື່ນນັ້ນວ່າຍ້ອນບາບຂອງເຂົາ.

ສະນັ້ນຈົ່ງຈື່ຈຳຄຳສອນຂອງພຣະເຢຊູໄວ້ວ່າ, ທ່ານຈະຮູ້ໄດ້ຢ່າງໃດວ່າ ຄວາມທຸກລຳບາກຂອງທ່ານຮັບຢູ່ນັ້ນແມ່ນຫລືບໍ່ແມ່ນການລົງໂທດຈາກພຣະເຈົ້າ? ໃຫ້ເລີ້ມຕົ້ນຖາມພຣະເຈົ້າ. ໃນຂນະທີ່ທ່ານຖາມພຣະເຈົ້ານັ້ນ ກ່ອນອື່ນໃຫ້ທ່ານສຳນຶກວ່າບໍ່ມີໃຜຫນີດຈະປະຕິເສດການຕັດສິນຂອງພຣະເຈົ້າ: " ດ້ວຍວ່າຈຳເປັນທີ່ເຮົາທຸກຄົນຈະຕ້ອງປາກົດຕໍ່ຫນ້າບັນລັງພິພາກສາຂອງພຣະຄຣິດ ເພື່ອທຸກຄົນຈະໄດ້ຮັບສົມກັບການທີ່ຕົນໄດ້ເຮັດໃນຮ່າງກາຍນີ້ ແລ້ວແຕ່ຈະດີຫລືຊົ່ວ (2 ໂກຣິນໂທ 5:10). ໃນຂນະດຽວກັນນີ້ ພຣະເຈົ້າຕ້ອງການໃຫ້ທ່ານຮູ້ຈັກນ້ຳພຣະທັຍຂອງພຣະອົງຫລາຍກວ່າທ່ານຢາກຈະຮູ້ອີກ.

<u>ພວກເຮົາຈະຈັດຕຽມໃນວັນການຕັດສິນຢ່າງໃດ?</u> (13:6-9)
ຈະມີການສອບເສັງປິດທ້າຍປີ. ມີຄຳຖາມຫຍັງແດ່ຢູ່ໃນຂໍ້ສອບ? ພວກເຮົາຈະຕ້ອງຈັດຕຽມຢ່າງໃດ? ຄຳອຸປມາຂອງພຣະເຢຊູໄດ້ຕອບຄຳຖາມຂອງພວກເຮົາ: "ຄົນຜູ້ນຶ່ງມີຕົ້ນເດື່ອເທດຕົ້ນນຶ່ງໃນສວນອະງຸ່ນຂອງຕົນ" (13:6). ພວກຟູງຊົນຄິດທັນທີວ່າແມ່ນຊົນຊາດອິສຣາເອນ ສວນອະງຸ່ນເປັນສັນຍາລັກຂອງຊົນຊາດຂອງພວກເຂົາ (ໃຫ້ເບິ່ງ ເອຊາຢາ 5:1-7).

ຕົ້ນເດື່ອເທດມີຫນ້າທີ່ຢ່າງດຽວ ຄືເກີດຜົນ. ຕົ້ນເດື່ອເທດຂອງຊາວສວນນັ້ນບໍ່ເກີດຜົນ. ມັນຢູ່ກິນເນື້ອທີ່ແລະດູດກິນນ້ຳຂອງດິນທີ່ເກີດຜົນ. ເຈົ້າຂອງສວນມາຊອມເບິ່ງຜົນຂອງຕົ້ນເດື່ອເທດຕົ້ນນັ້ນສາມປີແລ້ວ (13:7) ລາວມີຄວາມອົດທົນຫລາຍ. ດຽວນີ້ເຖິງເວລາແລ້ວທີ່ຈະປ້ຳຕົ້ນເດື່ອເທດນັ້ນຖິ້ມ.

ແຕ່ຄົນງານໄດ້ຮ້ອງຂໍເຈົ້າຂອງສວນນັ້ນໃຫ້ໂອກາດຕົ້ນເດື່ອເທດນັ້ນອີກປີນຶ່ງ. ລາວຈະຂຸດດິນອ້ອມເອົາຝຸ່ນໃສ່ (13:8) ຖ້າມັນເກີດຜົນ, ພວກເຂົາກໍຈະເອົາມັນໄວ້. " ຖ້າບໍ່ເກີດຫມາກ ພາຍຫລັງທ່ານຈົ່ງປ້ຳມັນຖິ້ມເສັຽ" (13:9).

ພວກເຮົາຢ່າໄດ້ໄປຕີຄວາມຫມາຍຂອງຄຳອຸປມານີ້ຜິດ. ຄວາມຫມາຍຂອງສາມປີບໍ່ແມ່ນການປະກາດຂອງພຣະເຢຊູສາມປີຢູ່ໃນໂລກນີ້ ຫລືວ່າຕຣີເອການຸພາບ ບໍ່ແມ່ນຢ່າງນັ້ນ. ຢ່າໄດ້ໄປຕີຄວາມຫມາຍວ່າ ຄົນງານທີ່ກ່າວມານີ້ແມ່ນພຣະຄຣິດຜູ້ຊົງເມດຕາມະນຸດທີ່ເຕັມໄປດ້ວຍຄວາມບາບ ພຣະອົງຊົງຢັບຢັ້ງຄວາມໂກດຮ້າຍຂອງພຣະເຈົ້າ. ແຕ່ທີ່ຈິງແລ້ວ "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ" (ໂຢຮັນ 3:16). ພຣະເຈົ້າຂອງຈັກວານນີ້ເປັນພຣະບິດາຂອງທ່ານໃນຟ້າສວັນ. ພຣະອົງຊົງມີຄວາມຮູ້ສຶກຕໍ່ທ່ານ: "ເຖິງປານນັ້ນກໍຕາມພຣະຜູ້ເປັນເຈົ້າກໍຍັງລໍຖ້າ ເພື່ອໃຫ້ຄວາມເມດຕາແກ່ເຈົ້າຢູ່" (ເອຊາຢາ 30:18).

ພວກເຮົາຈະຖືກຕັດສິນຕາມການເຊື່ອຟັງຂອງພວກເຮົາໃນພຣະປະສົງຂອງພຣະເຈົ້າສຳລັບຊີວິດຂອງພວກເຮົາ. ໃນກໍຣະນີຂອງຄວາມທຸກລຳບາກໃດໆກໍຕາມຈະພິສູດແນ່ນອນວ່າແມ່ນຍ້ອນບໍ່ເຊື່ອຟັງ ຈາກນ້ຳນີຂອງປີລາດ ຫລື ຈາກພັຍທັມຊາດກໍວ່າບໍ່ໄດ້. ການເຊື່ອຟັງບໍ່ສາມາດຈະຮຽກເອີ້ນເອົາສິດທິຂອງພຣະຄຸນຈາກພຣະເຈົ້າ. ແທນທີ່ຈະເປັນດັ່ງນັ້ນ

ພຣະຄຸນເປັນສິ່ງທີ່ພຣະເຈົ້າມີພຣະປະສົງໃຫ້ພວກເຮົາຢູ່ແລ້ວ. ພຣະຄຸນເປັນພື້ນຖານເພື່ອການຕັດສິນຈາກພຣະເຈົ້າ.

ທ່ານໄດ້ຮັບຂອງພຣະຣາຊທານໃຫ້ນຳໄປໃຊ້ເພື່ອການຮັບໃຊ້ໃນຣາຊອານາຈັກຂອງພຣະເຈົ້າຢູ່ໃນໂລກນີ້. ຊີວິດຂອງທ່ານມີສູນກາງຂອງເປົ້າໝາຍແລະການຖືກຊົງຮ້ອງ. ທ່ານມີການຮັບຜິດຊອບເພື່ອໃຫ້ການຕໍ່ພຣະຜູ້ຊົງສ້າງຂອງທ່ານ ເພື່ອໃຫ້ທ່ານໃຊ້ສິ່ງທີ່ຖືກຊົງສ້າງ. ເພື່ອມີການຕຽມພ້ອມຈາກການຕັດສິນຈາກພຣະເຈົ້າ ຈົ່ງສັດຊື່ໃນໜ້າທີ່ຂອງທ່ານ. ຈົ່ງເປັນຕົ້ນເຄົ້າເຫດທີ່ເກີດຜົນ. ຈົ່ງເຊື່ອຟັງອົງພຣະຜູ້ເປັນເຈົ້າຈົນເຖິງທີ່ສຸດທ້າຍ.

ຄຸນແມ່ທູຣີຊາມາເມືອງນິວຢອກໃນງານຂຶ້ນຕຶກໃຫມ່ຂອງໂຮງລ້ຽງເດັກກຳພ້າ. ມີນັກຂ່າວຄົນນຶ່ງຖາມລາວວ່າ ລາວວັດແທກຄວາມສຳເຣັດຂອງກິຈການນີ້ຢ່າງໃດ. ລາວຍິ້ມແລ້ວຫລຽວໄປທາງກ້ອງຖ່າຍໂທຣະທັດ ແລ້ວກ່າວວ່າ "ຂ້າພະເຈົ້າບໍ່ເຊື່ອພຣະເຈົ້າຂອງພວກເຮົາເຄີຍກ່າວເຖິງຄຳວ່າ ສຳເຣັດ. ພຣະອົງຊົງກ່າວເຖິງຄວາມສັດຊື່ໃນຄວາມຮັກ."

ທ່ານໄດ້ສັດຊື່ຕໍ່ພຣະປະສົງຂອງພຣະເຈົ້າບໍ່? ຄວາມສັດຊື່ໃນທຸກດ້ານໃນຊີວິດຂອງທ່ານ, ເວລາ, ຊັບສິນບັດ, ຄວາມສາມາດ? ຣາງວັນອັນຕລອດໄປເປັນນິດຂອງທ່ານໄດ້ຜູກມັດກັບຄວາມເຊື່ອຟັງພຣະປະສົງຂອງພຣະເຈົ້າໃນປະຈຸບັນໃນຊີວິດຂອງທ່ານ.

<u>ຄຳຖາມ</u>

1. ເປັນຫຍັງເກືອບຈະວ່າຊາວອະເມຣິກັນທຸກຄົນເຊື່ອຫມັ້ນວ່າ ພວກເຂົາຈະໄປຢູ່ໃນສວັນເມື່ອພວກເຂົາຕາຍໄປ? ທ່ານຈະຊ່ອຍຄົນອື່ນໃຫ້ເຂົ້າໃຈເຣື່ອງຄວາມຈິງຂອງຂ່າວປະເສີດໄດ້ຢ່າງໃດ?

2. ພວກເຮົາມັກຈະເບິ່ງເຫັນແຕ່ຄວາມບໍ່ດີຂອງຄົນອື່ນ. ທ່ານມັກຈະເບິ່ງການຖືກຄວາມທຸກລຳບາກຂອງຄົນອື່ນນັ້ນມີການກ່ຽວພັນກັບຄວາມບາບແມ່ນບໍ່? ທ່ານບໍ່ຄ່ອຍເບິ່ງການຖືກຄວາມທຸກຍາກລຳບາກຂອງທ່ານເອງໃນທາງດຽວກັນແມ່ນບໍ່? ເປັນຫຍັງ?

3. ມີນັກວິເຄາະຂອງອະເມຣິກາບາງຄົນເຫັນວ່າ ເຫດຮ້າຍເກີດຂຶ້ນໃນວັນທີ 11 ເດືອນ ກັນຍາ ຂອງປີ 2001 ນັ້ນແມ່ນພຣະເຈົ້າໄດ້ຕັດສິນລົງໂທດຊົນຊາດຂອງພວກເຮົາ. ພຣະຄຳຂອງພຣະເຢຊູແລະຄຳອຸປມາຂອງພຣະອົງມີຄວາມສັມພັນອັນໃດບໍ່ກັບເຫດການທີ່ເກີດຂຶ້ນນີ້?

4. ທ່ານເປັນຕົ້ນເຄົ້າເຫດປະເພດໃດ ປະເພດທີ່ຮັບຜິດຊອບເພື່ອເກີດຜົນບໍ່? ທ່ານມີຄວາມສັດຊື່ຕໍ່ພຣະປະສົງຂອງພຣະເຈົ້າຫລາຍປານໃດໃນອາທິດນີ້?

## ບົດຮຽນທີ 6
## ຈົ່ງເພິ່ງໃນພຣະຄຸນຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນ:** ລູກາ 14:7-14
**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ລູກາ 14:1-14
**ຈຸດສໍາຄັນຂອງບົດຮຽນນີ້:** ເມື່ອຕິດຕາມພຣະເຢຊູ ພວກເຮົາຈະຕ້ອງໄດ້ປ່ຽນທັສນະທິດທາງຂອງເຮົາ ໃນເຣື່ອງສແວງຫາກຽດແລະສັກສີມາສູ່ຕົນເອງ, ໃຫ້ຄົນອື່ນຮັບຮູ້ຕົນ, ແລະຕ້ອງການຮັບຮອງຈາກຄົນທົ່ວໄປ.
**ຄໍາຖາມເພື່ອການສໍາຫລວດ:** ຄວາມສໍາເຣັດມີຄວາມຫມາຍຢ່າງໃດສໍາລັບທ່ານ?
**ຈຸດປະສົງຂອງບົດຮຽນນີ້:** ໃຫ້ຮູ້ຈັກແຈກແຍກຄວາມສໍາເຣັດທີ່ພຣະເຢຊູປະຕິເສດແລະຄວາມສໍາເຣັດທີ່ພຣະອົງເຫັນພ້ອມໃນຄໍາອຸປມາແລະການບັນລະຍາຍຕາມຄໍາສອນຂອງພຣະອົງ.

## ບົດຮຽນ

### ຄໍານໍາ

ຄຣິສຕຽນຈະຕ້ອງເລີກໃຊ້ວິທີຂອງຊາວໂລກໃນການຊອກສແວງຫາຄວາມສໍາເຣັດ ແລະພວກເຂົາຈະຕ້ອງອະນຸຍາດໃຫ້ພຣະເຈົ້າເປັນຜູ້ຊົງກະທໍາການໃນຊີວິດຂອງພວກເຂົາ ແລະໂດຍຜ່ານທາງພວກເຂົາຊຶ່ງເປັນຄວາມສໍາເຣັດອັນແທ້ຈິງຂອງການຮັບໃຊ້ໃນຣາຊອານາຈັກຂອງພຣະເຈົ້າ.

**ສະຖານທີ່ກ່າວຄໍາອຸປມາ** (14:1-6)

ຄໍາສອນຂອງພຣະເຢຊູຫລາຍບົດໄດ້ມາ ໃນຂນະທີ່ພຣະອົງຮັບປະທານອາຫານໃນເຮືອນຂອງຜູ້ນໍາຄົນນຶ່ງຂອງຝ່າຍຟາຣີຊາຍ. ໃນຂນະທີ່ພຣະອົງເດີນທາງໄປກຸງເຢຣູຊາເລັມ ພຣະອົງໄດ້ປະເຊີນກັບການຕໍ່ຕ້ານຈາກພວກຟາຣີຊາຍ. ໃນພຣະທັມລູກາຕອນນີ້ໄດ້ສະແດງໃຫ້ເຫັນວ່າ ພວກເຂົາຖືກຕິຕຽນຫນັກນັ້ນ ແມ່ນຄວາມທະນົງຕົວຂອງພວກເຂົາ, ແລະພວກເຂົາເປັນຄົນຫນ້າຊື່ໃຈຄົດ ໃນຂນະດຽວກັນພຣະອົງຊົງຢັ້ງຢືນໃຫ້ເຫັນຄວາມຮັກຂອງພຣະເຈົ້າຊົງມີຕໍ່ຜູ້ທີ່ສັງຄົມລັງກຽດ, ຜູ້ອ່ອນກໍາລັງ, ແລະຜູ້ທີ່ຂາດເຂີນ.

ຕັ້ງແຕ່ພຣະອົງໄດ້ເນັ້ນຄວາມຈໍາເປັນຂອງການກັບໃຈໃຫມ່ໃນຄໍາອຸປມາຂອງເຣື່ອງຕົ້ນເດື່ອເທດ (ລູກາ 13:1-9), ພຣະອົງໄດ້ປະເຊີນກັບຄວາມຄັດແຍ້ງກັບຜູ້ນໍາຂອງຊາວຢິວຫລາຍຂື້ນ. ພຣະອົງໄດ້ຮັບການທ້າທາຍຈາກພວກເຂົາຫລາຍຂື້ນ ເພາະວ່າພຣະອົງຊົງໂຜດຍິງຫລັງກົ່ງໃນວັນຊະບາໂຕ (13:10-17), ພຣະອົງຊົງເຕືອນພວກເຂົາໃນເຣື່ອງປະຕູຄັບແຄບທາງໄປສູ່ສວັນ (13:22-30), ແລະພຣະອົງຊົງເສັຽພຣະທັຍຍ້ອນກຸງເຢຣູຊາເລັມ (13:31-35).

ພຣະອົງເຄີຍມີປະສົບການໃຊ້ຖ້ອຍຄໍາອັນຮຸນແຮງກັບພວກຟາຣີຊາຍແລະພວກທັມບັນດິດໃນຂນະທີ່ພຣະອົງຮັບປະທານອາຫານຢູ່ເຮືອນຂອງຟາຣີຊາຍຜູ້ນຶ່ງ (11:37-54). ຫນ້າປລາດໃຈ, ເທື່ອນີ້ພຣະອົງຊົງຮັບການເຊື້ອເຊີນໃຫ້ໄປຮັບປະທານອາຫານຢູ່ບ້ານຂອງຟາຣີຊາຍອີກໃນວັນຊະບາໂຕອີກ. ເຫມືອນກັບເທື່ອກ່ອນ ພຣະອົງໄດ້ໂອກາດເຜີຍພຣະຄໍາຂອງພຣະອົງຕາມເຄີຍ.

ລູກາໄດ້ບັນທຶກໄວ້ວ່າ ພວກຟາຣີຊາຍຄອຍຢູ່ດ້ວຍຄວາມຣະມັດລະວັງ "ໂດຍຫວັງຄອຍຈັບຜິດໃນຄໍາໃດຄໍານຶ່ງທີ່ອອກ

ມາຈາກພຣະໂອດຂອງພຣະອົງ" (11:54). ມີຊາຍຄົນນຶ່ງເຂົ້າມາຫາພຣະອົງ ເບິ່ງເຫມືອນກັບວ່າບໍ່ແມ່ນແຂກທີ່ຖືກເຊີນມາດອກ. ອາດຈະເປັນແຜນການຂອງພວກຟາຣີຊາຍໃຊ້ລາວເຂົ້າມາ ເພື່ອຢາກຈະເບິ່ງວ່າ ພຣະເຢຊູຈະຮັກສາຄົນຜູ້ນີ້ບໍ່ໃນວັນຊະບາໂຕ. ຊາຍຄົນນີ້ເປັນພຍາດທ້ອງມານ (Edema), ຊ
ຶ່ງມີນ້ຳເກີດຂື້ນໃນເນື້ອກາຍເປັນເຫດໃຫ້ໄຂ່ບວມ
ແລະເຈັບປວດຫລາຍທັງແຂນແລະຂາ. ສ່ວນຫລາຍແລ້ວ ອາການດັ່ງກ່າວແມ່ນມາຈາກຄວາມຮ້າຍແຮງຂອງພຍາດອື່ນ.

ພຣະເຢຊູໃຊ້ຍຸດທະວິທີຂອງພວກຟາຣີຊາຍຊຶ່ງພວກເຂົາມັກໃຊ້ກັບພຣະອົງຢູ່ສເມີ ພຣະອົງຊົງໃຊ້ຄຳຖາມ ເພື່ອຈະໃຫ້ພວກເຂົາຕອບຊຶ່ງສາມາດເຮັດໃຫ້ພວກເຂົາອັບອາຍໄດ້. ພຣະອົງຊົງຖາມພວກເຂົາວ່າ "ຖ້າເຮັດໃຫ້ດີພຍາດໃນວັນຊະບາໂຕຈະຜິດພຣະບັນຍັດຫລືບໍ່?" ຖ້າພວກເຂົາຕອບວ່າ <u>ບໍ່ຜິດ</u> ພວກເຂົາກໍຈະຕ້ອງໄດ້ໄປຖືກຖຽງກັນເອງ. ຖ້າພວກເຂົາຕອບວ່າ <u>ຜິດ</u> ກໍຈະສະແດງໃຫ້ປະຊາຊົນເຫັນວ່າພວກເຂົາບໍ່ມີຄວາມເມດຕາຕໍ່ຄົນທີ່ມີພຍາດ. ພວກເຂົາຈຶ່ງບໍ່ຕອບພຣະອົງຫຍັງເລີຍ.

ພຣະອົງຊົງຮັບເອົາຄົນນັ້ນແລະເຮັດໃຫ້ດີຈາກພຍາດແລ້ວກໍໃຫ້ລາວໄປ. ພຣະອົງກໍຫລຽວມາຖາມພວກຟາຣີຊາຍແລະພວກທັມບັນດິດວ່າ ມີໃຜແດ່ໃນຫມູ່ພວກເຂົາ ຖ້າລູກຫລືງົວຕົກນ້ຳສ້າງຈະບໍ່ຮີບດຶງອອກໃນວັນຊະບາໂຕຫລື. ຄຳຖາມຂອງພຣະອົງໄດ້ນຳພຣະອົງເຂົ້າໄປຖືກຖຽງໃນວົງຂອງຜູ້ນຳຂອງຊາວຢິວ ກ່ຽວກັບວັນຊະບາໂຕ. ເພື່ອຈະພຍາຍາມອະນຸຍາດໃຫ້ເຮັດໃນສິ່ງທີ່ເຮັດໄດ້ໃນວັນຊະບາໂຕ. ພຣະບັນຍັດສອງ 5:14 ໄດ້ອອກກົດລະບຽບດັ່ງນີ້ ຄືບໍ່ໃຫ້ເຮັດວຽກໃນວັນຊະບາໂຕ, ແຕ່ຜູ້ນຳຊາວຢິວໄດ້ວາງກົດອື່ນໆຫລາຍສິ່ງຫລາຍຢ່າງທີ່ເຮັດບໍ່ໄດ້ຕື່ມຂື້ນອີກ. ມີຄຳສອນໄດ້ສອນວິທີຕ່າງໆເພື່ອຊ່ອຍຫລືສັດລ້ຽງໃນວັນຊະບາໂຕ. ຜູ້ວາງກົດລະບຽບນີ້ໄດ້ກ່າວວ່າ ຜູ້ໃດຜູ້ນຶ່ງຈະຊ່ອຍຄົນຕົກສ້າງໃນວັນຊະບາໂຕກໍຊ່ອຍໄດ້ ແຕ່ວ່າບໍ່ໃຫ້ໃຊ້ເຊືອກແລະບັນໄດ. ຕາມທຳນຽມຂອງຊາວຢິວໄດ້ວາງກົດລະບຽບນັ້ນ ບາງຢ່າງກໍເຮັດໄດ້ບາງຢ່າງກໍເຮັດບໍ່ໄດ້. ໃນເຫດການທີ່ພຣະເຢຊູຊົງໂຜດຜູ້ຍິງຫລັງກົ່ງຄົນນຶ່ງໃນວັນຊະບາໂຕ (ລູກາ 13: 10-17), ພຣະອົງຊົງຊີ້ໃຫ້ພວກເຂົາເຫັນວ່າພວກເຂົານັ້ນຫນ້າຊື່ໃຈຄົດ ພວກເຂົາບິດເບືອນກົດບັນຍັດເພື່ອຊ່ອຍປົກປັກຮັກສາສັດລ້ຽງຊຶ່ງເປັນວັດຖຸສິ່ງຂອງ ໃນຂນະດຽວກັນພວກເຂົາບໍ່ມີເມດຕາຈິດຕໍ່ມະນຸດດ້ວຍກັນ. ພວກຟາຣີຊາຍອາດຈະຮູ້ວ່າ ພຣະອົງຈະຕ້ອງອັດພວກເຂົາດ້ວຍຂໍ້ຄວາມດັ່ງກ່າວ ພວກເຂົາຈຶ່ງມິດງຽບຢູ່ (14:6).

ເຫດການທີ່ເກີດຂື້ນນັ້ນໄດ້ນຳໃຫ້ມີຄຳອຸປມາ. ພຣະອົງສັງເກດເຫັນພວກທີ່ຖືກເຊີນມາກຳລັງເລືອກເອົາບ່ອນນັ່ງອັນມີກຽດ. ພຣະອົງຊົງຊີ້ໃຫ້ພວກເຂົາເຫັນຄຸນຄ່າຂອງການຖ່ອມຕົວອັນແທ້ຈິງ ຊຶ່ງຂັດກັບການຊອກສແວງໃຫ້ຄົນອື່ນຮັບຮອງຕາມວິທີທາງຂອງຊາວໂລກ (14:7). ເມື່ອສຶກສາລາຍລະອຽດຜົນຂອງຄຳອຸປມາຈຶ່ງຊີ້ໃຫ້ເຫັນວ່າພຣະອົງຊົງເຂົ້າໃຈບຸກຄລິກຂອງມະນຸດຢ່າງເລິກເຊິ່ງ.

<u>ເຮັດແລ້ວນຳຫລັງດ້ວຍການຝຶກໃຫ້ເປັນຜູ້ທຳອິດ</u> (14:7-9)
ຮັບປະທານອາຫານຢູ່ໃນບ້ານຂອງຜູ້ນຳຂອງຟາຣີຊາຍໃນວັນຊະບາໂຕ, ພຣະເຢຊູໃຊ້ໂອກາດນີ້ກ່າວເຣື່ອງລາວການໄປງານລ້ຽງໃນພິທີແຕ່ງງານເປັນຄຳອຸປມາໃຫ້ພວກເຂົາຟັງ. ໃນງານລ້ຽງນັ້ນ ເຈົ້າພາບຈະເປັນຜູ້ນຳແຂກທີ່ຖືກເຊີນມາໃຫ້ໄປນັ່ງຕາມບ່ອນທີ່ໄດ້ຈັດໄວ້ຕາມຖານະຂອງແຂກໃນສັງຄົມຂອງພວກເຂົາ. ຜູ້ທີ່ໄດ້ນັ່ງໃກ້ເຈົ້າພາບທີ່ສຸດແມ່ນຜູ້ນັ້ນໄດ້ຮັບກຽດຫລາຍທີ່ສຸດ.

ພຣະເຢຊູແນະນຳຝູງຊົນຢ່າຊູ່ໄປຊອກຫານັ່ງບ່ອນມີກຽດແລະໃຫ້ຄົນອື່ນຮັບຮູ້. ຢ້ານວ່າເຈົ້າພາບຈະມາຂໍໃຫ້ລຸກອອກ

ຈາກບ່ອນນັ່ງ ແລ້ວໃຫ້ໄປນັ່ງຢູ່ບ່ອນອື່ນ. ໃນເມື່ອບ່ອນອື່ນເຕັມໝົດແລ້ວ ຜູ້ທີ່ຖ່ອມຕົວຈະໄປຫາບ່ອນທີ່ສອກຫລີກ. ໃນສັງຄົມຂອງຊາວຢິວແລະສັງຄົມອື່ນໆກໍເຊັ່ນກັນ ເມື່ອຖືກເອີ້ນໃຫ້ລຸກອອກຈາກບ່ອນນັ່ງໃຫ້ໄປນັ່ງບ່ອນອື່ນທີ່ຕໍ່າຕ້ອຍກວ່າຈະເຮັດໃຫ້ອັບອາຍຂາຍໜ້າຫລາຍ.

ພຣະເຢຊູບໍ່ໄດ້ສອນວ່າ ບໍ່ໃຫ້ຜູ້ໃດຜູ້ນຶ່ງຍັບຍັ້ງຕົວເອງໄປນັ່ງຢູ່ທີ່ສູງ ເພື່ອຫລີກລ້ຽງຈາກຄວາມອັບອາຍ. ພຣະອົງສອນວ່າເມື່ອຄົນໃດຫາກຊອກສແວງຫາກຽດແລະຊື່ສຽງຕາມຄວາມຢາກໄດ້ໃນທາງຂອງມະນຸດແລ້ວສ່ວນຫຼາຍພວກເຂົາຈະນໍາຕົນເອງເຂົ້າສູ່ບ້ວງແຮ້ວຂອງການສູນເສັຽກຽດແລະສັກສີ. ມະນຸດມັກເຫັນແຕ່ຄຸນຄ່າຂອງຄວາມຮັ່ງມີ, ອໍານາດໃຫ້ຄົນໂຄຣົບ, ຊື່ສຽງ, ກຽດແລະສັກສີ ພວກເຂົາຈຶ່ງຊອກຫາແຕ່ສິ່ງເຫລົ່ານັ້ນ. ຄົນລ່ວງເກີນຈະເຮັດໃຫ້ຄົນອື່ນປະຕິເສດເຂົາ. ພຣະອົງຊົງສັ່ງຫ້າມບໍ່ໃຫ້ອວດອົ່ງທະນົງຕົວ ແລະຊອກສແວງຫາທີ່ສູງ ແລະມີຄວາມທະເຍີທະຍານສູງ ແລະປະພຶດຕໍ່າຊ້າເພື່ອຈະປົກປ້ອງຕົວເຂົາເອງ.

<u>ກ້າວໄປທີ່ສູງດ້ວຍການເລີ້ມຈາກບ່ອນຕໍ່າ</u> (14:10)
ພຣະເຢຊູຊົງເນັ້ນໃຫ້ເຫັນຄວາມສໍາຄັນຂອງການຖ່ອມຕົວ. ພຣະອົງແນະນໍາວ່າ ເມື່ອທ່ານຖືກເຊີນໄປງານຕ່າງໆ ໃຫ້ໄປນັ່ງຢູ່ບ່ອນຕໍ່າທີ່ສຸດ. ຕໍ່ມາຖ້າຫາກວ່າເຈົ້າພາບມາເຊີນໃຫ້ໄປນັ່ງບ່ອນສູງກວ່າ ແລ້ວທ່ານຈະໄດ້ກຽດຕໍ່ໜ້າຄົນທັງຫລາຍ.

ໃນທີ່ນີ້ ພຣະອົງບໍ່ໄດ້ກ່າວເຖິງໂຄງການຊຶ່ງນໍາໄປສູ່ຊັຍຊະນະ ຫລື ຄວາມປອດພັຍໃນຄວາມສໍາເຣັດ. ຄໍາສອນຂອງພຣະອົງບໍ່ໄດ້ສເນີ "ຂ່າວປະເສີດຂອງຄວາມຮັ່ງມີແລະສຸຂພາບອ້ອມຫ້ອມສົມບູນ." ພວກເຮົາບໍ່ຖ່ອມຕົວ ສະນັ້ນພວກເຮົາຈຶ່ງບໍ່ຖືກຍົກຂຶ້ນໄປທີ່ສູງ. ພວກເຮົາຈະບໍ່ມີຄວາມພຽງພໍຈັກເທື່ອ ຕາບໃດພວກເຮົາຫຸ້ມຮັດຕົວເອງໄວ້ໃນກຽດສັກສີ, ຢາກໃຫ້ຄົນອື່ນໂຄຣົບ, ແລະຢາກສໍາເຣັດໃນທາງຂອງມະນຸດ. ພວກເຮົາຈະຕ້ອງມອບກາຍຖວາຍຊີວິດໃຫ້ກັບພຣະເຈົ້າແລະທິດທາງຂອງພຣະອົງ ແລ້ວພຣະອົງຈະນໍາຄວາມສໍາເຣັດອັນແທ້ຈິງໃນການຮັບໃຊ້ມາໃຫ້ພວກເຮົາ.

<u>ຊອກສແວງຫາຄວາມສໍາເຣັດໃນທາງຂອງພຣະເຢຊູ</u> (14:11-14)
ມະນຸດມັກຊອກສແວງຫາຄວາມສໍາເຣັດຊຶ່ງເປັນທີ່ປາກົດແກ່ສາຍຕາຂອງຄົນອື່ນ. ພຣະເຢຊູຊົງສອນເຣື່ອງຄວາມສໍາເຣັດອັນແທ້ຈິງ ແລະຮັບຮອງໃຫ້ພວກເຮົາວ່າຄວາມສໍາເຣັດນີ້ຈະໄດ້ມາໃນທາງການຖ່ອມຕົວເທົ່ານັ້ນ ແລະຈະບໍ່ໄດ້ມາໃນທາງອວດອົ່ງທະນົງຕົວ. ພຣະອົງຊົງປະກາດວ່າ "ເພາະວ່າທຸກຄົນທີ່ຍົກຕົວຂຶ້ນຈະຕ້ອງຖືກຖອຍລົງ ແລະຜູ້ທີ່ຖ່ອມຕົວລົງຈະໄດ້ຮັບການຍົກຂຶ້ນ (14:11). ການຊັ່ງຊາຄຸນຄ່າໃນສມັຍຂອງເຮົານີ້ ບໍ່ສາມາດຈະໄປທຽບກັບຄວາມຈິງໄດ້. ຄຸນຄ່າທີ່ພວກເຮົາຮັບຮູ້ນັ້ນໄດ້ປະຕິເສດກັບຄວາມຈິງຂອງຫລັກຄໍາສອນຂອງພຣະອົງ ຊຶ່ງໄດ້ນໍາທາງຊີວິດອັນປະເສີດດີເລີດ (ມັດທາຍ 5:3-10).

ພຣະເຢຊູຊົງກ່າວວ່າ ຄວາມສໍາເຣັດອັນແທ້ຈິງແມ່ນເຮັດຕາມນໍ້າພຣະທັຍຂອງພຣະເຈົ້າແລະຫາທາງທີ່ຈະຮັບໃຊ້ຄົນອື່ນ ເພາະວ່າຄວາມຮັກຂອງພຣະເຈົ້າຢູ່ໃນເຮົາ (ມັດທາຍ 22:34-40). ພຣະອົງຍັງໄດ້ສອນຕໍ່ໄປອີກວ່າ ທາງກ້າວໄປສູ່ຄວາມສໍາເຣັດນັ້ນແມ່ນການຖ່ອມຕົວ. ການຖ່ອມຕົວບໍ່ແມ່ນເປັນຄົນຂີ້ຢ້ານ, ຕີຣາຄາຂອງຕົວເອງຕໍ່າ, ຫລືຂາດຄວາມກະຕືລືລົ້ນ. ການຖ່ອມຕົວແມ່ນການເບິ່ງຕົວຂອງເຮົາເອງເໝືອນກັບພຣະເຈົ້າເບິ່ງເຮົາ ຍອມຮັບນໍ້າພຣະທັຍຂອງພຣະເຈົ້າເຂົ້າມາໃນຊີວິດຂອງພວກເຮົາ, ແລະໃຫ້ພຣະເຈົ້າໃຊ້ພວກເຮົາຕາມພຣະອົງຊົງເຫັນດີ.

ການຖ່ອມຕົວເປັນຄືແມ່ນໍ້າທີ່ໄດ້ຮັບການຫລໍ່ລ້ຽງຈາກນໍ້າສອງສາຍທີ່ໄຫລມາສູ່. ສາຍທີນຶ່ງ ຄືມີຄວາມຮູ້ສຶກສໍານຶກໃນການເປັນໜີ້ບຸນຄຸນຂອງພຣະເຈົ້າ ຊຶ່ງພຣະອົງໄດ້ຊົງປະທານໃຫ້ຕລອດມາ. ທຸກສິ່ງຢ່າງທີ່ພວກເຮົາມີຢູ່ແມ່ນມາຈາກ

ພຣະອົງທັງສິ້ນ. ຄວາມຄິດຂອງຄົນທີ່ຄິດວ່າຕົນເອງເຮັດຫມົດນັ້ນ ເປັນເຫມືອນຄົນທີ່ບໍ່ມີຄວາມພໍໃຈແລະບໍ່ທ່ຽງຫມັ້ນແນ່ນອນ. ການເຂົ້າໃຈຄວາມຫມາຍຂອງໄມ້ກາງແຂນຂອງພຣະຄຣິດນັ້ນ ເຮັດໃຫ້ພວກເຮົາເວົ້າພ້ອມກັບຜູ້ຂຽນເພງວ່າ ພວກເຮົາຮອບຮອມເບິ່ງທຸກສິ່ງທຸກຢ່າງທີ່ເຫັນວ່າເປັນກຽດແລະສັກສີຂອງພວກເຮົາ ເມື່ອຫລຽວເບິ່ງໄມ້ກາງແຂນແລ້ວທຸກສິ່ງທຸກຢ່າງບໍ່ເປັນຂອງມີຄ່າອັນໃດຫມົດ.

ສາຍນ້ຳທີສອງ ເປັນເຫມືອນມີຄວາມຢຳເກງພຣະເຈົ້າ ຊຶ່ງເກີດຈາກພາຍໃນທີ່ມີຄວາມຮູ້ສຶກສຳນຶກມີຄວາມຕ້ອງການພຣະອົງ. ເມື່ອຫລຽວເບິ່ງຄວາມງາມຂອງຕາເວັນຕົກໃນຕອນເຍັນ ມີຄວາມຮູ້ສຶກວ່າບໍ່ມີມະນຸດຄົນໃດສາມາດປະຕິເສດຄວາມງົດງາມໃນສິ່ງທີ່ພຣະເຈົ້າຊົງສ້າງ. ການຖ່ອມຕົວນຳໄປໃຫ້ເຫັນຄວາມແຕກຕ່າງລະວ່າງຄວາມປະເສີດເລີດລ້ຳຂອງພຣະເຈົ້າແລະຄວາມອ່ອນແອຂອງມະນຸດຈຶ່ງເປັນເຫດໃຫ້ເກີດຄວາມສຳນຶກວ່າຕ້ອງການໃຫ້ມີການຕິດຕໍ່ກັບພຣະອົງຢູ່ສເມີດ້ວຍການຮຽນຮູ້ຈັກການອ້ອນວອນ.

ເອົາຕົວເອງເປັນເອກແລະຮຽກຮ້ອງໃຫ້ຄົນອື່ນຈັດຫາມາໃຫ້ຕົນ ຄົນຜູ້ນັ້ນຈະຕົກລົ່ນໄປໄກຈາກຄວາມສຳເຣັດອັນແທ້ຈິງ. ການເດີນໃນສາຍທາງອັນຈົບງາມໄດ້ຮຽກຮ້ອງໃຫ້ພວກເຮົາຈຳເປັນຕ້ອງເລີ້ມຈາກການຖ່ອມຕົວ.

ພຣະປະສົງຂອງພຣະເຢຊູນັ້ນດີເລີດຊຶ່ງໄດ້ເນັ້ນໃຫ້ເຫັນການຮັບໃຊ້ດ້ວຍຄວາມຖ່ອມຕົວ. ພຣະອົງຊົງກ່າວວ່າ ຖ້າຄົນໃດມີເຈຕນາຢາກຈະລ້ຽງອາຫານຄົນອື່ນ ຈະເປັນເຂົ້າທ່ຽງຫລືເຂົ້າແລງກໍຕາມ ໃຫ້ເຊີນເອົາຄົນທຸກຍາກ, ຄົນພິການ, ແລະຄົນຕ່ຳຕ້ອຍ ພວກເຂົາບໍ່ສາມາດຈະຕອບແທນຄືນ. ການຖ່ອມຕົວເຮັດໃຫ້ຄົນນັ້ນມີໃຈຮັບໃຊ້ ແທນທີ່ຈະຊອກຫາທາງໃຫ້ຄົນອື່ນຮັບໃຊ້ຕົວເຂົາເອງ.

ຈຸດສຳຄັນຂອງຄຳອຸປມາໄດ້ສອນວ່າ ຜູ້ທີ່ຊອກສແວງຍົກຕົວເອງຂຶ້ນໃຫ້ມີກຽດແລະສັກສີແລະໃຫ້ຄົນໂຄຣົບຈະໄປບໍ່ເຖິງທີ່ສູງສຸດຊຶ່ງເປັນການໃຫ້ກຽດທີ່ພຣະເຈົ້າບໍ່ເຫັນພ້ອມ.

<u>ຄຳຖາມ</u>

1. ແມ່ນຫຍັງເປັນການວັດແທກຄວາມສຳເຣັດຂອງທ່ານ? ທ່ານພໍຈະຊອກຫາຄຳຕອບຊຶ່ງມີຄຳຖາມຢູ່ວ່າ ແມ່ນຫຍັງທີ່ທ່ານກຳລັງແລ່ນນຳຫລາຍທີ່ສຸດ.

2. ທ່ານເຄີຍຊອກສແວງໃຫ້ຄົນອື່ນຮັບຮູ້ທ່ານໂດຍເຂົ້າພົວພັນກັບຄົນຈຳພວກທີ່ຕົວສູງ? ບາງຄັ້ງທ່ານເຄີຍຊອກຫາບ່ອນໃດບ່ອນນຶ່ງ ໃຫ້ຄົນອື່ນເຫັນເພື່ອທຳທ່າວ່າທ່ານເປັນຜູ້ມີກຽດສູງ? ເປັນດ້ວຍເຫດໃດຈຶ່ງເປັນຢ່າງນັ້ນ?

3. ບາງຄັ້ງ ຄົນສມັຍນີ້ຊອກຫາທ່າທີຢ່າງໃດ ເພື່ອໃຫ້ຄົນເຫັນວ່າພວກເຂົາເປັນຄົນໃນຖານະສູງ? ຄຳອຸປມາໄດ້ກ່າວຢ່າງໃດກັບຄົນພວກນີ້?

4. ທ່ານຈະສົມທຽບໄດ້ຢ່າງໃດກັບຊີວິດທີ່ມີພື້ນຖານການຖ່ອມຕົວກັບຊີວິດທີ່ມີພື້ນຖານແລ່ນນຳຊື່ສຽງ, ກຽດແລະສັກສີ, ອຳນາດ, ຫລື ຄວາມຮັ່ງມີ?

## ບົດຮຽນທີ 7
## ຈົ່ງຊັ່ງຊາເບິ່ງຜົນໄດ້ຜົນເສັຽ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 14:25-33

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 14:25-35

**ຈຸດສຳຄັນຂອງບົດຮຽນນີ້:** ການຕິດຕາມພຣະເຢຊູມີຄວາມຮຽກຮ້ອງໃຫ້ມີການປ່ຽນແປງໃນການໃຊ້ຊີວິດ ຊຶ່ງເປັນການຊັ່ງຊາເບິ່ງຜົນດ້ວຍສະຕິປັນຍາອັນສລາດແລະຈຳເປັນອີກດ້ວຍ.

**ຄຳຖາມເພື່ອການສຳຣວດ:** ທ່ານສມັກໃຈອຸທິດຊີວິດຂອງທ່ານຈະຕິດຕາມພຣະເຢຊູຫລາຍປານໃດ?

**ຈຸດປະສົງຂອງບົດຮຽນນີ້:** ການຊັ່ງຊາເບິ່ງວ່າ ຂ້າພະເຈົ້າຈະສມັກໃຈເປັນສິດຂອງພຣະເຢຊູ ຕາມຄວາມຮຽກຮ້ອງຂອງພຣະອົງໃຫ້ມີການປ່ຽນແປງໃນຊີວິດ.

## ບົດຮຽນ

### ຄຳນຳ

ສິດຂອງພຣະເຢຊູຄວນຈະສຳນຶກຢູ່ສເມີວ່າ ພວກເຂົາຈະຕ້ອງປະເຊີນກັບຄວາມທຸກລຳບາກແລະການສູ້ທົນຕໍ່ບັນຫາທຸກຢ່າງ ສະນັ້ນ ພວກເຂົາຈະຕ້ອງຍຶດໝັ້ນໃນຄວາມຈົງຮັກພັກດີຕໍ່ພຣະອົງບໍ່ວ່າຈະມີການທົດລອງໃດໆກໍຕາມ.

### ຄວາມມຸ້ງໝາຍຂອງຫລັກຄຳສອນ (14:25)

ເມື່ອພຣະເຢຊູປະເຊີນກັບເຣື່ອງລາວການເປັນມາໃນບ້ານຂອງພວກຟາຣີຊາຍ (ລູກາ 14:1-24). ພວກເຂົາໄດ້ເຝົ້າເບິ່ງພຣະອົງດ້ວຍຄວາມລະມັດລະວັງຕລອດມາ ເພື່ອຢາກຈະຮູ້ວ່າພຣະອົງໄດ້ລະເມີດກົດເກນປະເພນີຂອງວັນຊະບາໂຕ ແລະ ປິ່ນປົວຊາຍທີ່ເປັນພຍາດທ້ອງມານ. ພຣະອົງບໍ່ໄດ້ຍິນພວກເຂົາຕອບຢ່າງໃດເລີຍ (14:6). ພຣະອົງຊຶ່ງມີອຸດົມຄະຕິແລ້ວວ່າມີຫລາຍຄົນບໍ່ສມັກໃຈຕິດຕາມພຣະອົງ.

### ການເປັນສາວົກມີການຮຽກຮ້ອງໃຫ້ຊັ່ງຊາເບິ່ງຜົນ (14:26-27)

ພຣະເຢຊູຊົງຊັກຊວນໃຫ້ປະຊາຊົນເຂົ້າມາຫາພຣະອົງດ້ວຍຄຳສອນຂອງພຣະອົງ. ໃນຂນະດຽວກັນ ພຣະອົງຊົງກັ່ນກອງຜູ້ທີ່ຕັດສິນໃຈຢາກຈະມາເປັນຜູ້ຕິດຕາມພຣະອົງຢ່າງແທ້ຈິງອອກຈາກຝູງຊົນ. ພຣະອົງຊົງກັ່ນກອງພວກເຂົາແລ້ວກໍວາງຂໍ້ເງື່ອນໄຂໃນການຮຽກຮ້ອງສຳລັບຜູ້ທີ່ຈະມາເປັນສິດຂອງພຣະອົງ. ພຣະອົງແຍກພວກເຂົາອອກຈາກກັນ ຄືຜູ້ທີ່ມາຍ້ອນຄວາມຕື່ນເຕັ້ນ ແລະຜູ້ທີ່ມີຈິດໃຈສັດທາຢາກມາເປັນຜູ້ຕິດຕາມພຣະອົງ.

ຜູ້ທີ່ຈະເປັນສິດຢ່າງແທ້ຈິງຈະຕ້ອງຮັກພຣະຄຣິດເໜືອກວ່າທຸກສິ່ງແລະບໍ່ມີເງື່ອນໄຂໃດໆທັງສິ້ນ. ສິດຂອງພຣະເຢຊູຈະຕ້ອງຮັກພຣະອົງແລະພາຣະກິດຂອງພຣະອົງເໜືອກວ່າຄອບຄົວ ຫລືຊີວິດຂອງລາວເອງ (14:26). ພຣະອົງໄດ້ເນັ້ນເຣື່ອງນີ້ມາກ່ອນແລ້ວ (9:23). ບໍ່ວ່າໃຜກໍຕາມຖ້າຈະຕິດຕາມພຣະອົງຈະຕ້ອງເຂົ້າໃຈແລະຊັ່ງຊາເບິ່ງໃຫ້ຄັກແນ່ເສັຽກ່ອນ.

ພຣະອົງໃຊ້ຄຳວ່າ "ຊັງ" ເປັນຄຳເວົ້າທີ່ເກີນຄວາມຈິງຂອງຊາວຢິວໃຊ້ (Jewish hyperbole) ໃນເມື່ອພຣະອົງເຄີຍສອນແລະເນັ້ນໃຫ້ຮັກສັດຕຣູຂອງເຮົາ (6:27, 35). ພວກເຮົາເຄີຍເວົ້າວ່າ "ໂຕທໍ່ຊ້າງຮ່າງທໍ່ແມວ". ພຣະອົງມີຄວາມ

ຕັ້ງໃຈໃຊ້ຄຳນີ້ ເພາະວ່າຄຳນີ້ໄດ້ບົ່ງບອກເຖິງຄວາມຈິງໃນຕົວເອງ. ພຣະອົງໄດ້ສແດງໃຫ້ເຫັນຄວາມຈິງຂອງການຕິດຕາມພຣະອົງຊຶ່ງມີການຮຽກຮ້ອງໃຫ້ຜູ້ຕິດຕາມແຍກຕົວອອກຈາກຄວາມຮັກໃດໆທີ່ຈະເປັນອຸປສັກໃນການອຸທິດຕົວໃຫ້ພຣະອົງ. ແມ່ນແຕ່ກະທັ້ງຄອບຄົວຊຶ່ງຊາວຢິວຖືວ່າສຳຄັນຫລາຍ ຜູ້ທີ່ຈະຕິດຕາມພຣະອົງຈະຕ້ອງຕັດສິນໃຈທີ່ຈະສັດຊື່ຕໍ່ການຊົງຮຽກຮ້ອງຂອງພຣະອົງ.

ການຕິດຕາມພຣະເຢຊູຈະຕ້ອງອຸທິດຕົນໃຫ້ພຣະອົງໝົດ. ຄຳຮຽກຮ້ອງໃຫ້ "ຊັງ" ຄົນທີ່ໃກ້ສິດໃນຄອບຄົວຂອງຕົນ ຄວາມໝາຍຂອງພຣະອົງນັ້ນແມ່ນໃຫ້ <u>ຮັກຄອບຄົວໜ້ອຍກວ່າ</u> ຮັກພຣະອົງ. ພຣະອົງສອນວ່າ ເມື່ອຄົນໃນຄອບຄົວສແດງອອກໃຫ້ເຫັນວ່າ ມີການກີດກັ້ນພວກເຮົາໃນການຕິດຕາມພຣະອົງແລະພຣະປະສົງຂອງພຣະອົງສຳລັບຊີວິດຂອງພວກເຮົາ ເມື່ອເປັນດັ່ງນັ້ນພວກເຮົາຈະຕ້ອງໄດ້ຟັງພຣະອົງ ແທນທີ່ຈະຟັງຄວາມຄົນໃນຄອບຄົວ. ອັນນີ້ແຫລະຄວາມໝາຍຂອງພຣະອົງ ເມື່ອພຣະອົງໃຊ້ຄຳວ່າ "ຊັງ" ຄວາມຮັກຖືກແບ່ງແຍກ.

ສະນັ້ນ ພຣະເຢຊູຈຶ່ງໃຊ້ຄຳວ່າ "ຊັງ" ເປັນຄຳເວົ້າທີ່ແຮງ ເຮັດໃຫ້ເຫັນວ່າຈຳເປັນຈະຕ້ອງອຸທິດຕົນໃຫ້ກັບພຣະອົງແລະແຜນການຂອງພຣະເຈົ້າ ຈຶ່ງເຮັດໃຫ້ມີຄວາມຕຶງຄຽດໃນຄວາມຮັກຂອງຄອບຄົວ ເມື່ອປຽບທຽບແລະເໝືອນກັບວ່າ "ຊັງ". ຄຳວ່າ "ຊັງ" ໃນພາສາກຣີກແລະພາສາເຮັບເຣີ ມີຄວາມໝາຍວ່າ ປະຕິເສດສິ່ງໃດສິ່ງນຶ່ງ ແລ້ວເກີດໄປມັກໃນສິ່ງທີ່ມີຄວາມຮັກຫລາຍກວ່າ. ຜູ້ທີ່ຈະຕິດຕາມພຣະເຢຊູຈະຕ້ອງສມັກໃຈອຸທິຕົນໃຫ້ກັບພຣະອົງ.

ອ້າງອີງຕາມພຣະເຢຊູແລ້ວ ຜູ້ທີ່ເປັນສິດຈະຕ້ອງຕິດຕາມເປົ້າໝາຍຂອງພຣະອົງ, ຄວາມຕັ້ງໃຈຂອງພຣະອົງ, ແຜນການຂອງພຣະອົງ, ແລະທິດທາງການໃຊ້ຊີວິດອີກດ້ວຍ. ພຣະອົງຊົງວາງມາຕະການໃຫ້ອຸທິດຕົນໃຫ້ກັບພຣະອົງ ສຳລັບຜູ້ທີ່ຕັດສິນໃຈເປັນຜູ້ຕິດຕາມພຣະອົງຢ່າງແທ້ຈິງ.

ການເປັນສິດນັ້ນ ບໍ່ພຽງແຕ່ຊັງຄອບຄົວຂອງຕົນເອງແລ້ວ ຍັງຊັງ "ຊີວິດ" ຂອງຕົນອີກ (14:26). ພຣະອົງໃຊ້ຄຳວ່າ "ຊີວິດ" ນັ້ນ ບໍ່ໝາຍເຖິງແຕ່ຮ່າງກາຍເທົ່ານັ້ນ ຍັງຮ່ວມທັງຄວາມຢາກໄດ້, ກິເລດ, ແລະແຮງດົນໃຈອີກດ້ວຍ-ທັງດີແລະຊົ່ວ. ການຊັງຊີວິດຂອງຕົນໃຫ້ມີການຄວບຄຸມແຮງດົນໃຈຂອງຕົນແລະແນະນຳມັນໃຫ້ໄປໃນທາງດີ.

ພຣະອົງຊົງສອນເຣື່ອງການເປັນສິດຮ່ວມທັງການສລະສິດ (dying to self) ສິດທິຂອງເຮົາຕາຍໄປ ເຮົາບໍ່ມີສິດເປັນຂອງຕົນເອງອີກ. ສິດທິທີ່ຕາຍໄປເປັນຄຳອຸປມາເໝືອນກັບເມັດພືດ. ຖ້າຫາກເມັດພືດນັ້ນບໍ່ຖືກຝັງຢູ່ໃນດິນແລະຕາຍເສັຽກ່ອນ ມັນຈະບໍ່ປົ່ງຂຶ້ນມາໃໝ່ແລະເກີດດອກອອກຜົນ. ໃນກໍຣະນີດຽວກັນ ບໍ່ວ່າຜູ້ໃດກໍຕາມຈະຕ້ອງຊັງຊີວິດເກົ່າຂອງຕົນຈົນກວ່າຜູ້ນັ້ນສມັກໃຈເຂົ້າມາມີຮຸ້ນສ່ວນໃນຣາຊອານາຈັກຂອງພຣະເຈົ້າຈຶ່ງຈະເກີດຜົນເພື່ອພຣະຄຣິດ ( ໃຫ້ເບິ່ງພຣະທັມ ໂຢຮັນ 12:20-33).

ພຣະເຢຊູຊົງກ່າວວ່າ ໃນຂນະທີ່ດຳເນີນຊີວິດມີຄວາມຊັງຊີວິດຕົນເອງນັ້ນ ຊີວິດນັ້ນອາດຈະໄດ້ຮັບຄວາມທຸກລຳບາກແລະຈະຕ້ອງເສັຽສລະ ແຕ່ທີ່ກ່າວມານີ້ເປັນການສມັກໃຈທັງສິ້ນ. ພຣະອົງສອນວ່າ ຖ້າຜູ້ໃດບໍ່ແບກໄມ້ກາງແຂນຂອງຕົນ ແລະຕາມພຣະອົງໄປ ຜູ້ນັ້ນຈະເປັນສິດຂອງພຣະອົງບໍ່ໄດ້ (14:27). ນັກໂທດຂອງຊາວໂຣມັນຈະຕ້ອງແບກໄມ້ກາງແຂນຂອງຕົນເອງໄປທີ່ຫລັກປະຫານ. ພຣະອົງຊົງໃຊ້ຫລັກການດັ່ງກ່າວໃນການສັ່ງສອນສຳລັບຜູ້ທີ່ຈະມາເປັນສິດຂອງພຣະອົງ ເປັນການປະຕິບັດທຸກວັນດ້ວຍຄວາມສມັກໃຈຍອມຮັບທຸກຢ່າງໃນການຮັບໃຊ້ພຣະເຈົ້າ.

ດ້ວຍເຫດນັ້ນ ພຣະເຢຊູຊົງບັນລະຍາຍໃຫ້ເຫັນການປ່ຽນແປງຫລາຍໃນຊີວິດຂອງການເປັນສິດຂອງຄຣິສຕຽນ. ພຣະ

ອົງບອກຝູງຊົນວ່າ ເປັນການຍາກທີ່ຈະປະຕິບັດຕາມ. ພຣະອົງຊີ້ນຳວ່າ ຜູ້ທີ່ຈະຕິດຕາມນັ້ນຈະຕ້ອງສມັກໃຈອຸທິດຕົນຈຶ່ງຈະເປັນສິດຂອງພຣະອົງໄດ້ (14:27). ພຣະອົງຊົງເນັ້ນໃຫ້ຝູງຊົນຮັບຮູ້ເຖິງເງື່ອນໄຂຂອງການເປັນສິດ ເພື່ອພວກເຂົາຈະໄດ້ຕຶກຕ້ອງເຖິງການຮຽກຮ້ອງຂອງເງື່ອນໄຂນີ້ ແລ້ວພວກເຂົາຈະຮູ້ວ່າມີຫຍັງແດ່ພົວພັນໃນການເຂົ້າມາເປັນສິດ.

**<u>ຄວາມຈຳເປັນໃນການຊັ່ງຊາເບິ່ງຜົນ</u>** (14:28-32)

ພຣະເຢຊູຊົງຮູ້ແລ້ວວ່າ ຜູ້ທີ່ຢາກລອງຕິດຕາມພຣະອົງໃນການມາເປັນສິດປາສຈາກຄວາມເຂົ້າໃຈແລະຕຶກຕອງຊັ່ງຊາເບິ່ງຜົນໄດ້ແລະຜົນເສັຽຢ່າງຖ້ອນຖີ່ກໍຈະຕົກລົ່ນໄປ ເມື່ອປະເຊີນກັບຄວາມທຸກລຳບາກ, ຄວາມຮຽກຮ້ອງ, ແລະຖືກຂົ່ມເຫັງ. ພຣະອົງຈຶ່ງນຳເຣື່ອງລາວສອງເຣື່ອງມາເລົ່າໃຫ້ພວກເຂົາຟັງ ເນື່ອງຈາກວ່າ ຈຳເປັນຫລາຍຈະຕ້ອງຊັ່ງຊາເບິ່ງຜົນໄດ້ແລະຜົນເສັຽໃນການເປັນສິດ. ເຣື່ອງລາວສອງເຣື່ອງນີ້ ເປັນເຣື່ອງຂອງຄົນທົ່ວໄປທີ່ໄດ້ປະຕິບັດກັນມາກ່ອນແລ້ວ ແລະເພື່ອຄວາມລອບຄອບ ບໍ່ວ່າໃຜກໍຕາມຢູ່ໃນໂລກນີ້ກ່ອນຈະເຮັດຫຍັງລົງໄປຈະຕ້ອງໄດ້ຄິດໄລ່ເສັຽກ່ອນ. ເມື່ອມາເວົ້າເຖິງເຣື່ອງຈິດວິນຍານແລ້ວ ແຫ່ງບໍ່ຈຳເປັນບໍຈະຕ້ອງເບິ່ງໄປໄກກວ່ານີ້ອີກ. ພຣະທັມຕອນນີ້ມີຈຸດປະສົງນຳບົດຮຽນອັນສຳຄັນກ່ຽວກັບເຣື່ອງຄວາມຈຳເປັນໃນການຊັ່ງຊາເບິ່ງຜົນ.

ໃນເຣື່ອງທຳອິດນັ້ນ ພຣະອົງຊົງອ້າງອີງໃສ່ເຣື່ອງຄົນຜູ້ນຶ່ງຕັ້ງໃຈວ່າຈະສ້າງ "ປ້ອມ" (14:28-30). ປ້ອມມີຄວາມແຂງແກ່ນໃຊ້ປ້ອງກັນເມືອງ, ເຮືອນຊານ, ດິນແດນ ຫລື ສວນອະງຸ່ນ. ປ້ອມຍາມຈະຕ້ອງແຂງແກ່ງແລະສູງເພື່ອຄົນຍາມຈະໄດ້ເຫັນແຕ່ໄກ.   ກ່ອນຈະສ້າງປ້ອມ ນາຍຊ່າງທີ່ລອບຄອບຈະຕ້ອງໄດ້ຄິດໄລ່ເບິ່ງກ່ອນ ວ່າຈະມີພໍສ້າງໃຫ້ແລ້ວໄດ້ຫລືບໍ່. ປີລາດສ້າງທໍ່ນ້ຳປະປາ ເມື່ອບໍ່ມີທຶນກໍເລີຍສ້າງບໍ່ແລ້ວ. ບາງທີພຣະເຢຊູເຫັນເຫດການດັ່ງກ່າວ ພຣະອົງເລີຍເອົາມາໃຊ້ເປັນຕົວຢ່າງ.

ພຣະອົງຊົງເຕືອນວ່າ ເມື່ອວາງໂຄງການສ້າງຕຶກສູງຈະໄປຈຸຟ້າ ແຕ່ເຮັດບໍ່ສຳເຣັດປະໂຄງການນັ້ນຮ້າງຢູ່ ບ້ານເມືອງເຫັນ ເຂົາກໍຈະພາກັນເຍາະເຍີ້ຍ. ແຕ່ຄວາມກະຕືລືລົ້ນກໍດັບໄປ. ເມື່ອເລີ້ມຕິດຕາມພຣະເຢຊູແລະຕໍ່ມາກໍເຊົາໄປຈະເຮັດໃຫ້ຄົນອື່ນດູຫມິ່ນແລະນຳຄວາມເສື່ອມເສັຽມາໃຫ້ພຣະຄຣິດອີກດ້ວຍ. ສິດຂອງພຣະຄຣິດຄວນຈະຊັ່ງຊາເບິ່ງຜົນແລະເບິ່ງຄຸນຄ່າທີ່ຮຽກຮ້ອງໃນການສ້າງຊີວິດຢູ່ເທິງຫລັກຄຳສອນຂອງພຣະອົງ ຄືຄຳເທສນາຢູ່ຈ້າຍພູ (ມັດທາຍ ບົດທີ 5) ສິດຂອງພຣະຄຣິດຈະຕ້ອງສັງເກດເບິ່ງຄວາມທຸກລຳບາກແລະການທົດລອງຊຶ່ງເປັນເຫດໃຫ້ຕົກລົ່ນໄປແລະໃຫ້ຕຽມພ້ອມຢືນຢັດຢູ່ສເມີ.

ເຣື່ອງລາວທີສອງທີ່ພຣະເຢຊູຊົງນຳມາເປັນຕົວຢ່າງ ຄືຄວາມຈຳເປັນໃນການຊັ່ງຊາເບິ່ງຜົນ ໂດຍອາງອີງໃສ່ເຣື່ອງຂອງກະສັດທີ່ຄິດໄລ່ເບິ່ງກ່ອນພະອົງຈະເຂົ້າໄປສູ້ຮົບກັບສັດຕຣູ (14:31-32). ນາຍພົນທີ່ສລາດຈະຕ້ອງເບິ່ງຈຳນວນທະຫານແລະອາວຸດຍຸທພັນທີ່ຕົນມີຢູ່ກ່ອນຈະຕັດສິນໃຈເຂົ້າໂຈມຕີສັດຕຣູ. ຖ້າເພິ່ນບໍ່ມີກຳລັງພຽງພໍ ເພິ່ນກໍຈະຕ້ອງຫາທາງສົ່ງທູດເຂົ້າໄປເຈຣະຈາເງື່ອນໄຂຂອງຄວາມສງົບເສິກ.

ໃນເຣື່ອງຕົວຢ່າງທີນຶ່ງແມ່ນເຣື່ອງຖືກດູຫມິ່ນຖ້າມີການພາດພັ້ງ. ໃນເຣື່ອງລາວທີສອງແມ່ນເຣື່ອງຖືກຄວາມຜ່າຍແພ້ຖ້າບໍ່ພິຈາຣະນາຄິດໃຫ້ຖ້ອນທີ່. ເຣື່ອງລາວຕົວຢ່າງທີສອງບໍ່ໄດ້ສອນໃຫ້ພວກເຮົາວ່າ   ບໍ່ໃຫ້ພວກເຮົາລິເລີ້ມອັນໃດເລີຍ ຫລືສອນໃຫ້ພວກເຮົາຍອມຜ່າຍແພ້ ແທນທີ່ຈະຕໍ່ສູ້ກັບອຸປສັກຕ່າງໆ. ຫລັກຄຳສອນສຳຄັນນັ້ນຄືສອນໃຫ້ພວກເຮົາຄິດໄລ່ ຊັ່ງຊາເບິ່ງຜົນໄດ້ແລະເສັຽຂອງການເປັນສິດ ເມື່ອເລີ້ມເປັນສິດແລ້ວກໍໃຫ້ສັດຊື່ແລະຫມັ້ນຄົງເດີນໄປໃຫ້ສຸດເສັ້ນທາງຂອງຊີວິດ. ຜູ້ທີ່ຈະຕິດຕາມພຣະຄຣິດຄວນຈະເຂົ້າໃຈໃຫ້ຖ້ອນທີ່ເຖິງເງື່ອນໄຂຂອງການເປັນສິດ, ໃຫ້ຮັບຮູ້ຄວາມຍາກລຳບາກ, ແລະໃຫ້ມີໃຈກ້າຫານບຸກເບີກຕາມແບບຢ່າງຊີວິດຂອງພຣະເຢຊູ.

## <u>ຄວາມຈິງຍ່ອມເປັນຄວາມຈິງທີ່ຫລີກລ້ຽງບໍ່ໄດ້</u> (14:33-35)

ພຣະເຢຊູທ້າທາຍຜູ້ທີ່ມາຟັງພຣະອົງ (ຮ່ວມທັງພວກເຮົາດ້ວຍ) ໃຫ້ເຂົ້າໃຈເງື່ອນໄຂແລະການບຸກເບີກໃນຊີວິດຂອງການເປັນສິດ. ພຣະອົງບໍ່ໄດ້ແນະນຳໃຫ້ພວກເຮົາເຮັດເຫມືອນກັນກັບຄົນທີ່ຢູ່ໃນຄຳອຸປມາຫມົດທຸກຢ່າງ. ແທນທີ່ຈະເປັນຢ່າງນັ້ນ ແຕ່ລະຄົນຄວນຈະເຂົ້າມາຫາພຣະອົງຕາມຄວາມຮຽກຮ້ອງຂອງພຣະອົງໃຫ້ເສັຽສລະ ແຕ່ວ່າທຸກຄົນຄວນຈະຮັບຮູ້ເຖິງການເສັຽສລະ ເມື່ອໄດ້ຕັດສິນໃຈເຂົ້າມາເປັນສິດຂອງພຣະອົງ.

ຜູ້ທີ່ມາເປັນສິດຂອງພຣະອົງດ້ວຍຄວາມຝືນໃຈນັ້ນ ຈະເປັນສິດຂອງພຣະອົງບໍ່ໄດ້ ຫາກບໍ່ມອບກາຍຖວາຍຈິດໃຈໃຫ້ພຣະອົງຈົນຫມົດ. ພຣະອາຈານຊົງສອນໄວ້ວ່າ ປາສຈາກການຍອມຮັບທິດທາງຂອງພຣະອົງຈະເປັນສິດຂອງພຣະອົງບໍ່ໄດ້ (14:26-27). ບັດນີ້ ໃນຂໍ້ທີ 33 ພຣະອົງຊົງກ່າວວ່າ ທຸກຄົນທີ່ບໍ່ສລະສິ່ງສາຣະພັດທີ່ຕົນມີຢູ່ ຈະເປັນສິດຂອງພຣະອົງບໍ່ໄດ້. ຈົນກວ່າພວກເຮົາມອບຊີວິດແລະສິ່ງຂອງທີ່ຄອບຄອງໃຫ້ພຣະຄຣິດ ພວກເຮົາຈຶ່ງກັບມາເປັນສິດຂອງພຣະອົງແລະໃຫ້ພຣະອົງໃຊ້ຢ່າງເກີດຜົນ.

ພຣະເຢຊູຊົງໃຊ້ເກືອເປັນຕົວຢ່າງ. "ເກືອເປັນຂອງດີ" (14:35) ເກືອໃຊ້ໄດ້ກັບຫລາຍຢ່າງ. ເກືອມີຫນ້າທີ່ສຳຄັນຫລາຍ ເພື່ອໃຊ້ປຸງແຕ່ງອາຫານແລະໃຊ້ເກັບຮັກສາອາຫານ, ແຕ່ເກືອຍັງໃຊ້ຢ່າງອື່ນອີກ. ພຣະອົງຊົງຖາມວ່າ ຖ້າເກືອຫມົດຣົດເຄັມແລ້ວຈະເປັນຢ່າງໃດ? ຈະເຮັດໃຫ້ເຄັມຄືນອີກໄດ້ຢ່າງໃດ? ພຣະອົງຊົງກ່າວຕໍ່ໄປວ່າ "ຈະໃຊ້ເປັນຝຸ່ນໃສ່ດິນກໍບໍ່ໄດ້ ຈະປະສົມກັບກອງຝຸ່ນສັດເພື່ອເຮັດຝຸ່ນກໍບໍ່ໄດ້ ເຂົາກໍເອົາໄປຖິ້ມເສັຽ".

ດ້ວຍຂໍ້ຄວາມດັ່ງກ່າວ ພຣະອົງຊົງເຕືອນຜູ້ທີ່ເປັນສິດໃຫມ່ ທີ່ປາສຈາກຄວາມເຂົ້າໃຈເງື່ອນໄຂທັງຫມົດຂອງພຣະອົງ. ພຣະອົງຊົງສອນວ່າພວກເຮົາຄວນຈະຊັ່ງຊາເບິ່ງຜົນໄດ້ແລະເສັຽ, ມອບຊີວິດໃຫ້ກັບພຣະອົງ, ແລະເລີ້ມກ້າວເຂົ້າເປັນສິດຂອງພຣະອົງ ໃນຂນະດຽວກັນໃຫ້ຈຳໄວ້ວ່າ ເມື່ອເກີດມີການລີເລີ້ມຫັນຫລັງຄືນກໍຈະບໍ່ເກີດຜົນ (ໂຢຮັນ 15:6). ບໍ່ວ່າໃຜກໍຕາມເມື່ອມີການລີເລີ້ມແລະຫັນຫລັງຈາກການເປັນສິດກໍຈະບໍ່ມີພາກສ່ວນອັນໃດເລີຍ ເຫມືອນກັບເກືອທີ່ຂາດຄວາມເຄັມກໍໃຊ້ການບໍ່ໄດ້.

## <u>ຄຳຖາມ</u>

1. ທ່ານເຄີຍມີຄວາມຮູ້ສຶກບໍ່ວ່າ ຄວາມຮຽກຮ້ອງຂອງການຕິດຕາມພຣະເຢຊູນີ້ຍາກຫລາຍ? ໃນບົດຮຽນໄດ້ຊີ້ໃຫ້ເຫັນມີຄວາມຮຽກຮ້ອງອັນໃດແດ່?

2. ທ່ານຄິດວ່າ ຄວາມຮຽກຮ້ອງໃຫ້ມີການປ່ຽນແປງຂອງການເປັນສິດແມ່ນສຳລັບຄຣິສຕຽນທຸກໆຄົນບໍ່ ຫລືມີໄວ້ສຳລັບຜູ້ທີ່ຖືກຮ້ອງເຂົ້າໄປໃນການຮັບໃຊ້ ເຊັ່ນຜູ້ທີ່ໄປເຜີຍແຜ່ຂ່າວປະເສີດ, ສິດຍາພິບານ, ຫລື ພະນັກງານໃນໂບດເທົ່ານັ້ນ?

3. ໃນເມື່ອສະພາບຂອງການເປັນສິດນີ້ຍາກຫລາຍ ຄຣິສຕຽນຈະໃຊ້ຊີວິດໃຫ້ໄດ້ຕາມມາຕຖານໄດ້ບໍ?

4. ຊີວິດຂອງທ່ານຈະຕ້ອງມີການປ່ຽນແປງອັນໃດແດ່ ຖ້າຫາກທ່ານຢາກຕິດຕາມການຊົງຮຽກຮ້ອງຂອງພຣະເຢຊູໃຫ້ເຂົ້າມາເປັນສິດ? ທ່ານຈະສມັກໃຈຕິດຕາມພຣະເຢຊູບໍ ເຖິງແມ່ນວ່າທ່ານຈະຕ້ອງເສັຽສລະໃນສິ່ງທີ່ກ່າວມານີ້?

# <u>ບົດຮຽນບົດທີ 8</u>
# <u>ຄຳອຸປມາເຣື່ອງເງິນທີ່ເສັຽ ແລະເຣື່ອງລູກທີ່ເສັຽ</u>
# <u>ແລະຄວາມຊົມຊື່ນຍິນດີທີ່ໄດ້ພົບສິ່ງທີ່ເສັຽໄປ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 15:8-32
**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ລູກາ 15: 1-32
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເວລາພວກເຮົາໄດ້ເຫັນພຣະຄຸນຂອງພຣະເຈົ້າໃນຊີວິດຂອງເຮົາ, ພວກເຮົາຈຶ່ງເກີດມີຈິດໃຈທີ່ຊົມຊື່ນຍິນດີກັບພຣະເຈົ້າເມື່ອພຣະອົງໄດ້ຮັບເອົາຄົນທີ່ຫລົງໄປກັບຄືນ ບໍ່ວ່າຄົນເຫລົ່ານັ້ນຈະເປັນໃຜ ຫລືໄດ້ເຮັດສິ່ງໃດມາກ່ອນ.

**<u>ຄຳຖາມເພື່ອການສຳຣວດ:</u>** ທ່ານຊົມຊື່ນຍິນດີກັບພຣະເຈົ້າບໍ່ ເວລາເຫັນພຣະອົງຕ້ອນຮັບຄົນທີ່ໄດ້ຫລົງທາງໄປຄືນຫາພຣະອົງ? ຖ້າບໍ່, ເປັນຫຍັງຈຶ່ງບໍ່ຍິນດີ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຮັບເອົາພຣະຄຸນເຂົ້າມາໃນຊີວິດ ແລະເພື່ອຫາວິທີທີ່ຈະແບ່ງປັນຄວາມຍິນດີໃຫ້ກັບຄົນອື່ນໆ.

**<u>ສິ່ງທີ່ຄວນເນັ້ນໃນການຮຽນຄັ້ງນີ້</u>**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້
- ບອກເຣື່ອງຂ່າວປະເສີດໃຫ້ກັບຄົນທັງຫລາຍ
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ

## <u>ຄຳນຳ</u>

ພຣະເຈົ້າເຫັນຄຸນຄ່າຂອງບຸກຄົນທີ່ຫລົງທາງໄປ, ພຣະອົງໄດ້ສແວງຫາພວກເຂົາ, ແລະພຣະອົງຊົງຊົມຊື່ນຍິນດີເມື່ອໄດ້ພົບພວກເຂົາອີກ. ພຣະເຈົ້າບໍ່ຊົງເລືອກເຜົ່າພັນ, ຖານະໃນຊີວິດ, ຄວາມສຳຄັນໃນປວັດສາດ, ຫລືຄວາມສຳຄັນສຳລັບໂລກ ໃນບຸກຄົນທີ່ພຣະອົງສແວງຫາ. ພຣະເຈົ້າຊົງເອີ້ນໃຫ້ພວກຄຣິສຕຽນທັງຫລາຍໃຫ້ເຂົ້າຮ່ວມກັບພຣະອົງໃນການຊອກຫາ, ການພົບ, ແລະຄວາມຊົມຊື່ນຍິນດີເຫລົ່ານັ້ນ.

ບົດຮຽນຕໍ່ໄປນີ້ຈະເວົ້າເຣື່ອງການເສັຽ, ການຊອກຫາ, ແລະການໄດ້ພົບ. ພຣະເຢຊູຊົງບອກພວກເຮົາເຖິງຄວາມຮັກແລະຄວາມຕ້ອງການຂອງພຣະຜູ້ເປັນເຈົ້າທີ່ຈະຊອກຫາບຸກຄົນທີ່ໄດ້ແຍກອອກຈາກພຣະອົງໄປ ແລະເຖິງຄວາມຊົມຊື່ນຍິນດີຂອງພຣະອົງເມື່ອຜູ້ທີ່ຫລົງທາງໄປຈາກພຣະອົງໄດ້ກັບຄືນມາຫາພຣະອົງອີກ. ພຣະເຢຊູຊົງເອີ້ນພວກເຮົາໃຫ້ມີສ່ວນໃນການຊອກຫາແລະຄວາມຊົມຊື່ນຍິນດີ. ຄຳອຸປມາເຣື່ອງແກະທີ່ເສັຽ, ເຣື່ອງເງິນທີ່ເສັຽ, ແລະເຣື່ອງລູກທີ່ເສັຽໄດ້ສແດງເຖິງຄວາມຮັກຂອງພຣະເຈົ້າໃນການຊອກຫາ ແລະຄວາມຊົມຊື່ນຍິນດີຂອງພຣະອົງເມື່ອໄດ້ພົບ.

**<u>ເບື້ອງຫລັງຂອງຄຳອຸປມາ</u>**

ພຣະເຢຊູໄດ້ຊົງໃຊ້ຄຳອຸປມາຕໍ່ໄປນີ້ເພື່ອຕອບພວກຟາຣີຊາຍແລະພວກນັກທັມທີ່ຕຳໜິພຣະອົງວ່າໄປພົວພັນກັບຄົນເກັບພາສີແລະຄົນບາບ. ຄົນບາບຄືຜູ້ຄົນທີ່ບໍ່ຮັກສາພຣະບັນຍັດ ຫລືປະເພນີຂອງເຖົ້າແກ່ ແລະຖືກຈັດໄວ້ວ່າເປັນ "ຄົນນອກສິນທັມ" ໃນປະເທດອິສຣາເອັນ. ພຣະເຢຊູຊົງເວົ້າຢ່າງແຈ່ມແຈ້ງແລ້ວວ່າພຣະອົງຊົງມາເພື່ອຈະໂຜດຄົນບາບ ແລະບໍ່ໄດ້ຊົງມາເພື່ອໂຜດຄົນທີ່ຄິດວ່າຕົນເອງເປັນຄົນຊອບທັມ ເຊັ່ນພວກນັກທັມແລະພວກຟາຣີຊາຍ (ມທ 5:27-32; 14:21-24). ພຣະເຢຊູຊົງເຫັນວ່າພວກຄົນບາບເຫລົ່ານັ້ນຄືແກະທີ່ຕ້ອງການຜູ້ລ້ຽງ; ເງິນທີ່ເສັຽທີ່ຕ້ອງການກັບຄືນມາເປັນປໂຍດອີກ; ແລະລູກທີ່ເສັຽທີ່ຕ້ອງການມີຄວາມສັມພັນກັບພໍ່ອີກ.

## ພຣະເຈົ້າຊົງຊອກຫາຄົນທີ່ຫລົງທາງ (15:1-10)

ຄົນລ້ຽງແກະມີໜ້າທີ່ໃນການຮັກສາລູກແກະແຕ່ລະໂຕ; ແລະເມື່ອລູກແກະໂຕນຶ່ງເສັຽໄປ ຫລືຖືກຂ້າ ຄົນລ້ຽງແກະຜູ້ນັ້ນຈະຕ້ອງຊອກຫາແກະໂຕໃໝ່ມາແທນ. ແກະຫລົງທາງເພາະຄວາມໂງ່ ແລະເຂົາບໍ່ຮູ້ວ່າອັນຕະລາຍຈະມາເຖິງຕົວເອງ. ພຣະເຢຊູຊົງມາ "ເພື່ອຈະຊອກຫາແລະໂຜດເອົາຜູ້ທີ່ຫລົງເສັຽໄປແລ້ວນັ້ນໃຫ້ລອດພົ້ນ" (ມທ 19:10). ເມື່ອຄົນລ້ຽງໄດ້ພົບແກະຂອງຕົນແລ້ວເພິ່ນກໍມີຄວາມຍິນດີ, ເພື່ອນບ້ານກໍມີຄວາມຍິນດີ, ແລະຟ້າສວັນກໍມີຄວາມປິຕິຍິນດີ.

ຜູ້ຍິງທີ່ຖືສ້ອຍຄຽນຫົວຊຶ່ງເຮັດດ້ວຍເງິນສິບຫລຽນ ບອກໃຫ້ຮູ້ວ່າໄດ້ແຕ່ງງານແລ້ວ. ເມື່ອຫລຽນນຶ່ງເສັຽໄປ, ສ້ອຍນັ້ນກໍໝົດຄວາມໝາຍ ແລະຈະສ້າງຄວາມອັບອາຍໃຫ້ກັບຜູ້ເປັນເຈົ້າຂອງ. ເໝືອນດັ່ງເງິນຫລຽນ, ຄົນບາບແຕ່ລະຄົນມີສີພຣະທັດຂອງພຣະເຈົ້າຝັງຢູ່ ແລະມີຄຸນຄ່າ (ມທ 20:24-25); ແຕ່ພວກເຂົາໄດ້ກາຍເປັນສິ່ງທີ່ບໍ່ມີປໂຍດ. ເມື່ອໄດ້ພົບພໍ້ແລ້ວ, ຄົນບາບທັງຫລາຍໄດ້ກາຍເປັນຜູ້ທີ່ມີປໂຍດແລະສາມາດຮັບໃຊ້ພຣະເຈົ້າ. ຄວາມປິຕິຍິນດີໄດ້ກັບມາສູ່ຄອບຄົວເມື່ອຄົນທີ່ໄດ້ຫລົງທາງໄປແລ້ວນັ້ນ ໄດ້ກັບຄືນມາ.

ການຫລົງທາງມີຄວາມໝາຍແນວໃດ? ເໝືອນຕົວແກະທີ່ຫລົງທາງ, ພວກເຂົາໄດ້ອອກໄປຈາກບ່ອນປອດພັຍ ແລະໄດ້ເຂົ້າໄປສູ່ເຂດອັນຕະລາຍ; ເໝືອນເງິນຫລຽນທີ່ເສັຽໄປ, ເງິນນັ້ນໄດ້ກາຍເປັນສິ່ງທີ່ບໍ່ມີປໂຍດ. ໃນກໍຣະນີຂອງລູກຜູ້ນ້ອງ, ມັນໝາຍເຖິງການຂາດຄວາມສັມພັນກັບພຣະບິດາ ແລະການຢູ່ຫ່າງໄກຈາກຄວາມຊົມຊື່ນຍິນດີຂອງຄອບຄົວ.

## ການລໍຄອຍແລະການຕ້ອນຮັບ (15: 11-24)

ສິ່ງສຳຄັນທີ່ພວກເຮົາເຫັນໃນພຣະທັມຕອນນີ້ຄື ຜູ້ເປັນພໍ່ບໍ່ໄດ້ອອກໄປຊອກຫາລູກ ແຕ່ໄດ້ລໍຄອຍຖ້າຢູ່ທີ່ເຮືອນ. ເມື່ອລູກຂອງເຂົາໄດ້ກັບຄືນບ້ານ, ພໍ່ກໍໄດ້ແລ່ນອອກໄປພົບລາວ. ເໝືອນດັ່ງລູກແກະທີ່ຫລົງທາງ, ພວກຄົນບາບທັງຫລາຍໄດ້ຫລົງທາງໄປເພາະຄວາມໂງ່ຊ້າຂອງພວກເຂົາ; ແລະເໝືອນດັ່ງເງິນຫລຽນທີ່ເສັຽໄປ, ພວກເຂົາໄດ້ຫລົງຫາຍໄປເພາະຄວາມບໍ່ຣະມັດຣະວັງຂອງຄົນອື່ນ. ແຕ່ລູກຄົນນີ້ໄດ້ຫລົງໄປເພາະການຕັດສິນໃຈຂອງເຂົາເອງ, ແລະພໍ່ຈຳເປັນຈະຕ້ອງລໍຄອຍຈົນກວ່າເຂົາຈະຮຽນຮູ້ເອງແລະກັບມາເປັນຄົນເຊື່ອຟັງ.

ການທີ່ລູກຊາຍຜູ້ນ້ອງຂໍສ່ວນແບ່ງໃນມໍຣະດົກກໍບໍ່ຜິດຫຍັງກັບຂໍໃຫ້ພໍ່ຕາຍ ສິ່ງເຫຼົ່ານີ້ຄົງເຮັດໃຫ້ຜູ້ເປັນພໍ່ອົກຫັກຫລາຍສົມຄວນ, ແຕ່ພໍ່ກໍໄດ້ຍອມແບ່ງໃຫ້ຕາມທີ່ຂໍ. ພຣະຜູ້ເປັນເຈົ້າກໍເໝືອນກັນ, ພຣະອົງໄດ້ຊົງແບ່ງຊັບສົມບັດຂອງພຣະອົງໃຫ້ກັບໂລກນີ້ ຄືຄົນທັງຫລາຍທີ່ຫລົງທາງໄປ ແລະພວກເຂົາກໍໄດ້ປ່ອຍໃຫ້ສູນຫາຍໄປຢ່າງບໍ່ມີປໂຍດ (ກຈກ 14: 15-17; 17:24-28). ສິ່ງທີ່ເຮັດໃຫ້ລູກຊາຍຜູ້ນ້ອງກັບໃຈຄົງບໍ່ແມ່ນຄວາມຊົ່ວທີ່ເຂົາໄດ້ເຮັດ, ແຕ່ແມ່ນຄວາມດີຂອງຜູ້ເປັນພໍ່ (ຂໍ້ 17; ໂຣມ 2:4).

ຕາມປົກຕິແລ້ວ, ຄົນອາຍຸສູງໃນເຂດຕະເວັນອອກກາງຈະບໍ່ແລ່ນ; ແຕ່ພໍ່ຄົນນີ້ແລ່ນໄປຫາລູກເພາະຄວາມຮັກທີ່ມີຕໍ່ລູກ. ນອກນັ້ນ ລູກຜູ້ທີ່ເຮັດໃຫ້ພໍ່ແມ່ອັບອາຍຂາຍໜ້າຈະຕ້ອງຖືກປະຫານໂດຍການຄວ່າງກ້ອນຫີນ (ພຣະບັນຍັດສອງ 21:

18:21). ແຕ່ໃນກໍຣະນີນີ້, ຖ້າມີຄົນຈະຄວ່າງກ້ອນຫີນໃສ່ລູກຊາຍ ກ້ອນຫີນນັ້ນກໍຄົງຈະຖືກຜູ້ເປັນພໍ່! ເຄື່ອງນຸ່ງຢ່າງດີຄົງຈະເປັນເຄື່ອງນຸ່ງທີ່ມີຣາຄາສູງຂອງພໍ່ເອງ; ເກີບບອກໃຫ້ເຫັນວ່າພໍ່ບໍ່ຍອມໃຫ້ລູກກາຍມາເປັນຂ້ອຍໃຊ້ຕາມທີ່ເຂົາໄດ້ຂໍ; ແຫວນສແດງເຖິງການໄດ້ກັບມາເປັນລູກແບບສົມບູນ. ຄວາມຊົມຊື່ນຍິນດີໄດ້ກັບຄືນມາ ເມື່ອຄົນທີ່ຫລົງຫາຍໄປໄດ້ກັບຄືນບ້ານ.

**<u>ຄຳອ້ອນວອນ (15:25-32)</u>**
ລູກຜູ້ກົກເປັນຜູ້ທີ່ຖືກລືມໃນຄຳອຸປມານີ້ ແຕ່ເຂົາຄວນຈະເປັນຜູ້ທີ່ທຸກຄົນຄວນສົນໃຈໃນເຣື່ອງນີ້. ຄວາມຈິງແລ້ວ, ລູກຜູ້ທີ່ເສັຽໄປຄືຕົວແທນຂອງ "ຄົນນອກສິນທັມແລະຄົນບາບ," ແລະລູກຊາຍກົກຄືຕົວແທນຂອງ "ພວກຟາຣີຊາຍແລະພວກນັກທັມ." ຜູ້ນຳທາງສາສນາທັງຫລາຍອາດຈະບໍ່ເຄີຍເຮັດຄວາມບາບເໝືອນກັບລູກຜູ້ນ້ອງໃນຄຳອຸປມາ, ແຕ່ພວກເຂົາເຈົ້າກໍເປັນຄົນບາບ ແລະມີຄວາມຜິດເພາະເປັນຜູ້ມັກຕ້ອງຕິຄົນອື່ນ, ເປັນຜູ້ຂາດຄວາມຮັກ, ເປັນຜູ້ອວດດີ, ແລະເປັນຜູ້ທີ່ບໍ່ຢາກຈະໃຫ້ອະພັຍຄົນອື່ນໆ.

ເນື່ອງຈາກລູກຜູ້ນ້ອງໄດ້ສ່ວນແບ່ງໃນຊັບສົມບັດໄປແລ້ວ, ທຸກຢ່າງທີ່ເຫລືອກໍຈະຕົກເປັນຂອງຜູ້ເປັນອ້າຍກົກ; ແຕ່ພໍ່ກໍຍັງຈະຕ້ອງເປັນຜູ້ບໍຣິຫານມໍຣະດົກເຫລົ່ານັ້ນຢູ່. ການກັບຄືນບ້ານຂອງນ້ອງຊາຍຈະເຮັດໃຫ້ທຸກຢ່າງສັບສົນ; ສະນັ້ນກໍເປັນຂອງທັມມະດາທີ່ອ້າຍກົກບໍ່ປະສົງທີ່ຈະໃຫ້ນ້ອງຂອງຕົນກັບຄືນບ້ານ ແລະເຂົາເອງກໍບໍ່ໄດ້ໄປຊອກຫານ້ອງເລີຍ.

ນອກນັ້ນພວກເຮົາຍັງໄດ້ເຫັນແຜນເລິກລັບຂອງອ້າຍກົກ; ເຂົາຕັ້ງໃຈທີ່ຈະເອົາລູກແກະໄວ້ "ເພື່ອຈັດການລ້ຽງໃຫ້ມິດສະຫາຍ" ຂອງຕົນ. ເຂົາເກີດໂມໂຫເພາະນ້ອງຊາຍໄດ້ກັບຄືນບ້ານ; ຫລາຍໄປກວ່ານັ້ນຜູ້ເປັນພໍ່ຍັງຕ້ອນຮັບນ້ອງຊາຍຢ່າງດີ ແລະໃຫ້ອະພັຍເຂົາທຸກຢ່າງ. ເໝືອນດັ່ງພວກນັກທັມແລະພວກຟາຣີຊາຍ, ລູກຊາຍກົກຢືນຢູ່ຂ້າງນອກ ເມື່ອຄົນອື່ນຊົມຊື່ນຍິນດີເພາະໄດ້ເຫັນຄົນບາບກັບໃຈ.

ການທີ່ລູກຊາຍກົກຢືນຢູ່ນອກບ້ານ ເປັນການສ້າງຄວາມອັບອາຍໃຫ້ກັບພໍ່ແລະນ້ອງຊາຍ. ຜູ້ເປັນພໍ່ສາມາດທີ່ສັ່ງໃຫ້ເຂົາຮີບເຂົ້າມາໃນບ້ານ, ແຕ່ພໍ່ໄດ້ຍອມອອກໄປຫາລູກກົກ ແລະອ້ອນວອນໃຫ້ເຂົາເຂົ້າໃຈ. ພຣະເຢຊູກໍໄດ້ເຮັດເຊັ່ນດຽວກັນນີ້ ກັບພວກຜູ້ນຳສາສນາຂອງຊາວຢິວ, ແຕ່ພວກເຂົາໄດ້ພາກັນຫັນຫລັງໃຫ້ພຣະອົງ. ພວກເຂົາຄິດວ່າພວກຕົນຈະໄດ້ລອດພົ້ນເພາະການປະພຶດທີ່ເປັນຕົວຢ່າງຂອງພວກຕົນ. ຄວາມຈິງແທ້ຄື ພວກເຂົາທຸກຄົນບໍ່ໄດ້ມີຄວາມສັມພັນກັບພຣະຜູ້ເປັນເຈົ້າ; ພວກເຂົາຈຳເປັນຈະຕ້ອງກັບໃຈ ແລະຊອກສແວງຫາການໃຫ້ອະພັຍເໝືອນກັບຄົນອື່ນໆ.

**<u>ຄຳຖາມ:</u>**
1. ທ່ານເຄີຍຄິດບໍ່ວ່າ ຄົນທີ່ມາເຊື່ອໃໝ່ບໍ່ຄວນຈະໄດ້ຮັບກຽດ ຫລືມີສິດທຽບເທົ່າກັບຜູ້ທີ່ຮັບໃຊ້ມາດົນແລ້ວ? ທ່ານຄິດວ່າຄວາມຄິດດັ່ງນີ້ຖືກຕ້ອງບໍ່?

2. ຖານະທາງສັງຄົມຂອງຄົນທີ່ຫລົງຫາຍໄປ ມີສ່ວນໃນການຕັດສິນໃຈຂອງທ່ານວ່າຈະປະກາດກັບຄົນນັ້ນຫລືບໍ່?

3. ມີຂໍ້ມູນຫຍັງແດ່ທີ່ບອກໃຫ້ຮູ້ວ່າທ່ານຍັງຄິດວ່າຕົວເອງເປັນຜູ້ຊອບທັມ ແລະເປັນຜູ້ຂາດຄວາມຮັກ? ທ່ານຄິດວ່າຈະເອົາຊະນະຄວາມບາບເຫລົ່ານີ້ໃນຊີວິດຂອງທ່ານແນວໃດ?

# ບົດຮຽນບົດທີ 9
# ພະນັກງານບໍ່ສັດຊື່
# ໃຊ້ຊັບເພື່ອຈຸດປະສົງອັນຍິ່ງໃຫຍ່

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ລູກາ 16:1-13
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ລູກາ 16:1-15
**ຈຸດສໍາຄັນຂອງບົດຮຽນນີ້:** ຄຣິສຕຽນສົມຄວນໃຊ້ເງິນແລະຊັບສິນຢ່າງສລຽວສລາດ ເພື່ອຈະໄດ້ມີສ່ວນໃນວຽກງານທີ່ຈະໝັ້ນຄົງຊົ່ວນິຣັນ.

**ຄໍາຖາມເພື່ອການສໍາຣວດ:** ການຈ່າຍເງິນແລະໃຊ້ຊັບສົມບັດຂອງທ່ານມີຄວາມສໍາພັນຫຍັງແດ່ກັບຊີວິດນິຣັນ?
**ຈຸດປະສົງຂອງບົດຮຽນນີ້:** ອະທິບາຍວິທີໃຊ້ເງິນແລະຊັບສິນແບບສລຽວສລາດ ເພື່ອຈະໄດ້ມີສ່ວນໃນວຽກງານທີ່ຈະໝັ້ນຄົງຊົ່ວນິຣັນ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຄົນດ້ານວັດຖຸ, ດ້ານຈິດວິນຍານ, ແລະຄວາມຮູ້ສຶກ.
- ສ້າງຜູ້ນໍາທີ່ມີນໍ້າໃຈເປັນຜູ້ຮັບໃຊ້.

## ຄໍານໍາ

ຄຣິສຕຽນຈະຕ້ອງໃຊ້ວິທີການຂອງທຸຣະກິດແລະການບໍຣິຫານເງິນທີ່ເໝາະສົມເພື່ອຊ່ວຍພວກເຂົາເຈົ້າໃນການໃຊ້ຊັບສົມບັດ ເພື່ອວຽກງານທີ່ຈະໝັ້ນຄົງຢູ່ຊົ່ວນິຣັນ. ພວກເຮົາບໍ່ຄວນໃຊ້ຊັບສົມບັດຂອງຕົນເພື່ອສິ່ງທີ່ຊາວໂລກທັງຫລາຍຖືວ່າເປັນຄວາມສໍາເຣັດໃນຊີວິດນີ້.

ຄໍາອຸປມາເຣື່ອງລູກສອງຄົນໃນລູກາ 15 ໄດ້ເວົ້າເຖິງເຣື່ອງຊັບສົມບັດ, ແລະໃນລູກາ 16 ນີ້ ພຣະເຢຊູໄດ້ຊົງເວົ້າຕໍ່ໃນເຣື່ອງນີ້. ຄົນຢິວຄິດວ່າຊັບສົມບັດຄືສັນຍາລັກຂອງຄວາມລອດພົ້ນແລະຄວາມເຫັນຊອບຂອງພຣະເຈົ້າ (ມຣກ 10:17-27), ແຕ່ພຣະເຢຊູຊົງສອນວ່າຊັບສົມບັດອາດສາມາດນໍາໄປສູ່ການລົງໂທດ. ໃນບົດຮຽນຕໍ່ໄປນີ້, ພວກເຮົາຈະໄດ້ຮຽນເຖິງອັນຕະລາຍສາມຢ່າງທີ່ພວກເຮົາຈະຕ້ອງຫລີກເວັ້ນ.

### ການສິ້ນເປືອງຊັບສົມບັດ (16:1-12)

ເໝືອນລູກຜູ້ທີ່ເສັງ, ພະນັກງານຜູ້ນີ້ໃຊ້ຊັບສົມບັດຂອງເສດຖີແບບສິ້ນເປືອງ, ດັ່ງທີ່ຄົນທັງຫລາຍໃນປັດຈຸບັນນີ້ກໍາລັງເຮັດຢູ່. ທຸກຢ່າງທີ່ພວກເຮົາມີມາຈາກພຣະເຈົ້າ ແລະພວກເຮົາຈະຕ້ອງໃຊ້ທຸກຢ່າງເພື່ອປໂຍດຂອງຄົນທົ່ວໄປ ແລະ

ເພື່ອພຣະສິຣິຂອງພຣະເຈົ້າ. ພວກເຮົາບໍ່ແມ່ນເຈົ້າຂອງສິ່ງໃດຈັກຢ່າງ; ພວກເຮົາເປັນພຽງຜູ້ຈັດການຊັບສົມບັດຂອງພຣະອົງ ແລະມື້ນຶ່ງພວກເຮົາທຸກຄົນຈະໄດ້ລາຍງານຕົວຕໍ່ໜ້າພຣະອົງວ່າພວກເຮົາໄດ້ເຮັດຫຍັງແດ່ກັບສິ່ງທີ່ພຣະເຈົ້າໄດ້ມອບໃສ່ກຳມືຂອງພວກເຮົາ.

ພຣະເຢຊູບໍ່ໄດ້ຊົງຍ້ອງຍໍພະນັກງານໃນການທີ່ເຂົາຂະໂມຍຊັບສົມບັດຂອງນາຍຈ້າງ; ແຕ່ພຣະອົງຍ້ອງຍໍເຂົາໃນການໃຊ້ໂອກາດທີ່ມີຢູ່ໃຫ້ເປັນປໂຍດ. ຄົນຝ່າຍໂລກມັກຈະເຫັນໂອກາດໄວກວ່າໄພ່ພົນຂອງພຣະເຈົ້າ (ອຟຊ 5:15-17). ໃນຊີວິດທີ່ສັ້ນນີ້, ພວກເຮົາຄຣິສຕຽນມີໂອກາດທີ່ຈະໃຊ້ຊັບສົມບັດທີ່ມີເພື່ອສ້າງໝູ່ສ້າງເພື່ອນເພື່ອພຣະເຈົ້າ, ໝູ່ເພື່ອນທີ່ພວກເຮົາຈະໄດ້ພົບກັນອີກໃນຟ້າສວັນ.

ເຄັດລັບຄືຄວາມສັດຊື່ (ຂໍ້ 10-12). ຊັບສົມບັດອັນບໍ່ຍຸດຕິທັມ (ເງິນ) ຄືຂອງ "ເລັກນ້ອຍ," ແຕ່ຊັບສົມບັດອັນທ່ຽງແທ້ຄືຂອງ "ສຳຄັນທີ່ສຸດ." ຖ້າພວກເຮົາໃຊ້ຊັບສົມບັດຂອງພຣະເຈົ້າຕາມພຣະປະສົງຂອງພຣະອົງ, ພຣະອົງຈະປະທານຊັບສົມບັດທີ່ແທ້ໃຫ້ພວກເຮົາເປັນເຈົ້າຂອງ. ພຣະເຢຊູຄຣິດບໍ່ຊົງເຫັນສິ່ງກີດຂວາງຣະຫວ່າງວັດຖຸແລະເຣື່ອງຈິດວິນຍານ, ເພາະສິ່ງຍິ່ງໃຫຍ່ທີ່ພວກເຮົາສາມາດເຮັດໄດ້ກໍຄືການໃຊ້ວັດຖຸເພື່ອຖວາຍພຣະກຽດແດ່ພຣະເຈົ້າໂດຍການເອົາຊະນະພວກທີ່ໄດ້ຫລົງຫາຍໄປ.

## <u>ຄວາມໂລບມາກເຣື່ອງຊັບສົມບັດ (16:13-18)</u>

ພວກຟາຣີຊາຍເປັນຄົນທີ່ໜ້ານັບຖືຖ້າເບິ່ງແຕ່ທາງຂ້າງນອກ, ແຕ່ຖ້າເບິ່ງທາງໃນແລ້ວພວກເຂົາກໍເຕັມໄປດ້ວຍໂລບມາກໂລພາ (ມທ 23:14; ຕິໂຕ 1:11). ເນື່ອງຈາກພວກເຂົາເຊື່ອວ່າຊັບສົມບັດຄືສັນຍາລັກຂອງພຣະພອນ, ພວກເຂົາຈຶ່ງໄດ້ພາກັນເຍາະເຍີ້ຍພຣະເຢຊູແລະການສັ່ງສອນຂອງພຣະອົງ. ພວກຟາຣີຊາຍກໍມີລັກສະນະຄ້າຍກັບພວກນັກສອນເຣື່ອງຄວາມສຳເຣັດໃນສມັຍນີ້; ພວກເຂົາເຈົ້າເຫັນວ່າຄວາມສຸກແລະຄວາມບໍຣິສຸດນັ້ນເທົ່າທຽມກັບຄວາມອຸດົມສົມບູນ. ພວກເຂົາພຍາຍາມຮັບໃຊ້ນາຍສອງຄົນ--ພຣະເຈົ້າແລະເງິນຄຳ ຊຶ່ງເປັນສິ່ງທີ່ເປັນໄປບໍ່ໄດ້. "ທ່ານຈະເປັນຂ້ອຍໃຊ້ຂອງພຣະເຈົ້າແລະເປັນຂ້ອຍໃຊ້ຂອງເງິນຄຳພ້ອມກັນບໍ່ໄດ້" (ມທ 6:24).

ຄວາມສຳເຣັດທາງວັດຖຸ, ອຳນາດ, ແລະກຽດຕິຍົດອາດຈະເຮັດໃຫ້ຄົນທົ່ວໄປເກີດຄວາມນິຍົມຊົມຊອບ, ແຕ່ພຣະເຈົ້າເຫັນວ່າສິ່ງເຫລົ່ານີ້ເປັນສິ່ງທີ່ໜ້າກຽດຊັງ (ສພສ 10:2-3). ການມີຊັບສົມບັດບໍ່ແມ່ນການເຮັດຄວາມຜິດບາບ ເພາະຄົນຊອບທັມຫລາຍໆຄົນກໍເປັນຄົນທີ່ມີຖານະດີ ເຊັ່ນ: ກະສັດດາວິດແລະອັບຣາຮາມ. ນອກນັ້ນການໃຊ້ຊັບສົມບັດທີ່ຕົນມີກໍບໍ່ແມ່ນການເຮັດຄວາມຜິດບາບ (1 ຕມທ 6:17); ແຕ່ການເບິ່ງຊັບສົມບັດຕາມແນວຄິດຂອງຊາວໂລກຫລືການບໍ່ຍອມໃຊ້ຊັບສົມບັດເພື່ອຖວາຍພຣະກຽດແດ່ພຣະເຈົ້ານັ້ນເປັນການເຮັດຄວາມຜິດບາບຕໍ່ພຣະອົງ.

ບັນຫາຂອງພວກຟາຣີຊາຍແມ່ນການພຍາຍາມເຮັດຕາມຄົນທັງຫລາຍແລະບໍ່ໄດ້ເນັ້ນເຣື່ອງ "ເຂົ້າຣາຊແຜ່ນດິນ" (ຂໍ້ 16). ພວກເຂົາບໍ່ຍອມເສັຽສະລະເພື່ອຈະຕິດຕາມພຣະເຈົ້າ. ພວກເຂົາພຍາຍາມເຮັດຕາມພຣະບັນຍັດແຕ່ລະໂຕຢ່າງລະອຽດດີ, ແຕ່ເຂົາເຈົ້າບໍ່ສົນໃຈຄວາມໝາຍທາງໃນຂອງພຣະບັນຍັດທີ່ພຣະເຢຊູໄດ້ຊົງສັ່ງສອນ.

## <u>ຫລັກຄຳສອນໃນຄຳອຸປມາ</u>

- ພຣະເຢຊູຊົງສອນວ່າ ບຸກຄົນທີ່ມີຄວາມສັດຊື່ໃນຂອງເລັກນ້ອຍກໍຈະມີຄວາມສັດຊື່ໃນຂອງຫລາຍ (ຂໍ້ 10). ຜູ້ທີ່ສະແດງຕົວໃຫ້ເຫັນວ່າເປັນຄົນສັດຊື່ກໍເປັນຜູ້ສົມຄວນທີ່ຈະໄດ້ຮັບໂອກາດໃນການປົກຄອງສິ່ງຂອງທີ່ມີຄວາມສຳຄັນຫລາຍຂຶ້ນ (ຂໍ້ 10-12).

- ພຣະເຢຊູຊີງສອນວ່າ ພວກເຮົາຈະຕ້ອງຖວາຍຕົວທັງໝົດເພື່ອຮັບໃຊ້ພຣະເຈົ້າ ແລະຈະບໍ່ພຍາຍາມທີ່ຈະເປັນຂ້ອຍໃຊ້ຂອງພຣະເຈົ້າແລະເງິນຄຳພ້ອມກັນ (ຂໍ້ 13).

## ຄຳສອນສຳລັບຊີວິດ

- ຊັບສົມບັດແລະສິ່ງຂອງເປັນອັນຕະລາຍດ້ານຈິດວິນຍານສຳລັບຜູ້ທີ່ຮັກເງິນຄຳ (16:14-15).
- ຄຣິສຕຽນຈະຕ້ອງຫາວິທີທີ່ຈະໃຊ້ຊັບສົມບັດເພື່ອສິ່ງທີ່ຈະຢູ່ຊົ່ວນິຣັນ.
- ຄຣິສຕຽນຈະຕ້ອງມີໃຈເພື່ອແຜ່ເມື່ອເຫັນຄວາມຕ້ອງການ.
- ຄຣິສຕຽນຈະຕ້ອງເບິ່ງທຸກຢ່າງໃນໂລກ ແລະສິ່ງທີ່ເກີດຂຶ້ນໃນໂລກນີ້ໂດຍເຫັນຊີວິດນິຣັນເປັນຫລັກ,
- ຄຣິສຕຽນຈະຕ້ອງເຫັນຕົນເອງວ່າເປັນພຽງຜູ້ຈັດການຊັບສົມບັດ ແລະຈະໃຊ້ສິ່ງທີ່ພຣະເຈົ້າໄດ້ປະທານໃຫ້ໃນທາງທີ່ເໝາະສົມ.
- ຄຣິສຕຽນຈະບໍ່ຍອມຮັບຄຳສອນໃດໆທີ່ບໍ່ຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າທີ່ໄດ້ຖືກເປີດເຜີຍໄວ້ຜ່ານພຣະຄຳ, ການປະພຶດ, ແລະຄະຕິຂອງພຣະເຢຊູຄຣິດ.

## ຄຳຖາມ:

1. ມີຈັກເທື່ອທີ່ທ່ານຄິດວ່າເງິນຄຳ, ສິ່ງຂອງ, ແລະໂອກາດຕ່າງໆເປັນຂອງທ່ານເອງ ແທນທີ່ຈະຮັບວ່າເປັນຂອງເກັບຝາກຈາກພຣະເຈົ້າ?

2. ທ່ານມີວິທີໃດແດ່ທີ່ຈະໃຊ້ຊັບສົມບັດແລະສິ່ງຂອງທຸກຢ່າງທີ່ມີເພື່ອສິ່ງທີ່ຈະຢູ່ໄປຊົ່ວນິຣັນ?

3. ມີວິທີເຮັດທຸຣະກິດແນວໃດແດ່ທີ່ເໝາະສົມສຳລັບຄຣິສຕຽນ? ມີວິທີເຮັດທຸຣະກິດແນວໃດແດ່ທີ່ບໍ່ເໝາະສົມສຳລັບຄຣິສຕຽນ?

# <u>ບົດຮຽນບົດທີ 10</u>
# <u>ລາຊະໂຣ ແລະພວກອ້າຍນ້ອງທີ່ກຄົນ</u>
# <u>ຊ່ວຍເຫລືອຜູ້ທີ່ມີຄວາມຕ້ອງການ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 16:19-31

**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** ລູກາ 16:19-31

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການບໍ່ຍອມຊ່ວຍເຫລືອບຸກຄົນທີ່ກຳລັງມີຄວາມຕ້ອງການ ຈະຖືກການພິພາກສາຂອງພຣະເຈົ້າ

**<u>ຄຳຖາມເພື່ອການສຳຣວດ:</u>** ການຊ່ວຍເຫລືອຄົນທີ່ກຳລັງມີຄວາມຕ້ອງການມີຄວາມສຳຄັນບໍ່, ຊ່ວຍຫລືບໍ່ຊ່ວຍກໍໄດ້ບໍ່, ຫລືຈຳເປັນຕ້ອງຊ່ວຍບໍ່?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສຳຣວດເບິ່ງຊີວິດຂອງຂ້າພະເຈົ້າເອງ ເມື່ອເບິ່ງການປະພຶດຂອງເສດຖີຄົນນີ້.

## <u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດໂດຍການຊ່ວຍເຫລືອຄົນອື່ນທີ່ມີຄວາມຄວາມຕ້ອງການທາງຮ່າງກາຍ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສ້າງຄົນເພື່ອໃຫ້ເປັນຜູ້ນຳທີ່ມີຈິດໃຈເປັນຜູ້ຮັບໃຊ້.

## <u>ຄຳນຳ</u>

ໃນສັງຄົມທີ່ເຫັນວ່າຊັບສົມບັດເປັນເຄື່ອງໝາຍຂອງຄວາມສຳເຣັດໃນຊີວິດ, ຄວາມຈິງຂອງພຣະເຈົ້າໄດ້ສະແດງ ໃຫ້ເຫັນເຖິງຄວາມສຳຄັນຂອງການເປັນຜູ້ຮັບໃຊ້ກັບຄົນທີ່ຢູ່ອ້ອມຮອບພວກເຮົາຊຶ່ງກຳລັງມີຄວາມຕ້ອງການ. ຄຳອຸປມາຕໍ່ໄປນີ້ອາດຈະກົງກັນຂ້າມກັບຄວາມເຂົ້າໃຈຂອງຫລາຍໆຄົນເຣື່ອງຄວາມສຳເຣັດແລະຄວາມຜິດຫວັງໃນຊີວິດ. ແຕ່ຄຳອຸປມານີ້ກໍໄດ້ສະແດງໃຫ້ເຫັນຄວາມຈິງຫລາຍຢ່າງໃນຂ່າວປະເສີດທີ່ພຣະເຢຊູຄຣິດໄດ້ຊົງດຳເນີນຊີວິດແລະໄດ້ຊົງສັ່ງສອນໄວ້.

ຄຳອຸປມານີ້ມີຄຳຕຳໜິສຳລັບຜູ້ທີ່ເມີນເສີຍກັບສິ່ງແວດລ້ອມຂອງຕົນ ແລະມີຄຳຮຽກຮ້ອງໃຫ້ພວກເຮົາທັງຫລາຍໃຫ້ມີສ່ວນໃນການຊ່ວຍເຫລືອບຸກຄົນຜູ້ທີ່ກຳລັງມີຄວາມຕ້ອງການ. ບຸກຄົນເຫຼົ່ານີ້ອາດຈະຢູ່ໃກ້ໆພວກເຮົາບໍ່ວ່າຈະເປັນບ່ອນທຳງານ ຫລືບ້ານເຮືອນທີ່ເຮົາພັກອາສັຍຢູ່. ຢ່າພຍາຍາມເບິ່ງຄຳອຸປມານີ້ວ່າເປັນເຣື່ອງຂອງຊີວິດຫລັງຈາກຄວາມຕາຍແຕ່ຢ່າງດຽວ ແຕ່ໃຫ້ເບິ່ງວ່າເປັນຄຳສອນອັນສຳຄັນເຣື່ອງຄວາມຮັບຜິດຊອບຂອງໄພ່ພົນຂອງພຣະເຈົ້າໃນຊີວິດ

ນີ້ ໂລກນີ້ເປັນໂອກາດຂອງພວກເຮົາສຳລັບການຮັບໃຊ້ໃນພຣະນາມພຣະເຢຊູຄຣິດ. ໂລກນີ້ຄືບ່ອນປະກາດຂອງພວກເຮົາ ຊຶ່ງພວກເຮົາສາມາດທີ່ຈະເຊື່ອຟັງຫລືຈະເມີນເສີຍຕໍ່ພຣະບັນຊາຂອງພຣະເຈົ້າສຳລັບຊີວິດເຮົາ.

## ການບູຊາຊັບສົມບັດ (16:19-21)

ທ່ານລູກາຜູ້ຂຽນພຣະທັມຕອນນີ້ບໍ່ໄດ້ບອກຢ່າງແຈ່ມແຈ້ງວ່າເຣື່ອງຕໍ່ໄປນີ້ເປັນຄຳອຸປມາ ຫລືວ່າເປັນເຣື່ອງແທ້ທີ່ເກີດຂຶ້ນກັບຄົນໃນສມັຍນັ້ນ. ເສດຖີໃຊ້ຊັບສົມບັດຂອງຕົນເພື່ອຄວາມສນຸກສນານ; ເຂົາດຳເນີນຊີວິດຢ່າງ "ປີຕິຍິນດີ" ເພາະເຂົາພຽງພໍທຸກຢ່າງ; ເຂົາມີເຄື່ອງນຸ່ງຫົ່ມທີ່ສວຍງາມ ແລະມີອາຫານການກິນຢ່າງປະນີດທຸກໆວັນ. ເສດຖີຄົນນີ້ບໍ່ໄດ້ໃຊ້ຊັບສົມບັດຂອງຕົນເພື່ອຊ່ວຍເຫລືອຄົນຍາກຈົນ ຫລືຄົນທີ່ມີຄວາມຕ້ອງການ. ເຂົາບໍ່ໄດ້ສົນໃຈແມ່ນກະທັ້ງຄົນຂໍທານທີ່ມານັ່ງຢູ່ທີ່ປະຕູບ້ານຂອງເຂົາທຸກໆມື້. ຄວາມຈິງແລ້ວລາຊະໂຣກໍເປັນພຍານໃຫ້ກັບເສດຖີໄດ້ອີກປະເພດນຶ່ງ (ຂໍ້ 27-28); ແຕ່ເສດຖີໄດ້ຝາກຊີວິດຂອງເຂົາໄວ້ກັບສິ່ງຂອງແລະເງິນຄຳ ເຂົາຈຶ່ງບໍ່ຍອມກັບໃຈ. ສຳລັບຕົວເຂົາແລ້ວເຂົາບໍ່ເຄີຍຄຳນຶງເຖິງຄວາມຕາຍເລີຍ.

## ຄວາມຕາຍຄືຈຸດນັດພົບ (16:22-26)

ແຕ່ເມື່ອຄວາມຕາຍໄດ້ມາເຖິງແລ້ວ, ທຸກຢ່າງກໍເລີຍປ່ຽນແປງ. ເສດຖີໄດ້ພົບກັບຄວາມທຸກເວທະນາ ແລະໄດ້ຖືກການທໍຣະມານ; ສ່ວນລາຊະໂຣໄດ້ກາຍເປັນຄວາມລ້ຳລວຍ ແລະໄດ້ຢູ່ໃນຟ້າສວັນ. ສິ່ງທີ່ເຮັດໃຫ້ສອງຄົນນີ້ໄດ້ຮັບຕ່າງກັນຄືຄວາມເຊື່ອຂອງພວກເຂົາ. ເສດຖີບໍ່ໄດ້ໄປຢູ່ໃນແດນນໍຣະນາເພາະເຂົາເປັນຄົນລວຍ, ແລະລາຊະໂຣບໍ່ໄດ້ຢູ່ສວັນເພາະເຂົາເປັນຄົນຍາກຈົນ. ຄົນຍາກຈົນເປັນຄົນເຊື່ອໃນພຣະເຈົ້າ ແຕ່ເສດຖີເປັນຄົນທີ່ບໍ່ເຊື່ອ. ຫລັງຈາກຄວາມຕາຍ, ສະພາບຂອງພວກເຂົາເລີຍກັບກັນ, ແລະສະພາບເຫລົ່ານີ້ເປັນສິ່ງຖາວອນ ແລະບໍ່ມີໃຜທີ່ຈະສາມາດປ່ຽນແປງໄດ້.

## ຄວາມຈິງໄດ້ຖືກເປີດເຜີຍແລ້ວ (16:27-31)

ນັບວ່າເປັນສິ່ງໜ້າເຊື່ອຫລາຍ ທີ່ພວກເຮົາໄດ້ເຫັນຄົນທີ່ຢູ່ໃນແດນນໍຣະນາເອີ້ນໃຫ້ອີກຜູ້ນຶ່ງໄປເປັນພຍານໃຫ້ກັບຄົນທີ່ເຂົາຮັກຊຶ່ງຍັງມີຊີວິດຢູ່. ພວກເຮົາບໍ່ສາມາດໃຊ້ການບັງຄັບຫລືຄວາມຢ້ານກົວ ເພື່ອເຮັດໃຫ້ຜູ້ໃດຜູ້ນຶ່ງມາເຊື່ອໃນອົງພຣະເຢຊູຄຣິດ (ຂໍ້ 31; 2 ກຣທ 5:11; ກຈກ 18:4). ຖ້າໄພ່ພົນຂອງພຣະເຈົ້າມີໂອກາດໄດ້ໄປຢູ່ແດນນໍຣະນາປະມານນຶ່ງວິນາທີ, ພວກເຂົາຄົງຈະມີຄວາມກ້າຫານຫລາຍຂຶ້ນໃນການເປັນພຍານເພື່ອພຣະຄຣິດ. ສິ່ງເຫລົ່ານີ້ເປັນສິ່ງນຶ່ງຊຶ່ງຄົນທີ່ມີຄວາມເຊື່ອ ແລະຄົນຜູ້ທີ່ບໍ່ມີຄວາມເຊື່ອຄວນຈື່ຈຳໄວ້ໃນໃຈ.

## ຄຳສອນສຳລັບຊີວິດ

ມີຄຳເວົ້າໄວ້ວ່າ ຄຳເວົ້າທີ່ກົງກັນຂ້າມກັບຄຳວ່າ "ຮັກ" ບໍ່ແມ່ນຄຳວ່າ "ຊັງ" ແຕ່ແມ່ນຄຳວ່າ "ບໍ່ສົນໃຈ." ພຣະເຈົ້າຜູ້ຊົງສ້າງສາຣະພັດຢ່າງໄດ້ຊົງຫລຽວເບິ່ງໂລກນີ້ດ້ວຍຄວາມຮັກ, ເພາະຄວາມຮັກນັ້ນພຣະອົງຈຶ່ງຊົງຫລິງເຫັນວ່າມະນຸດທຸກຄົນມີຄຸນຄ່າສົມຄວນທີ່ຈະໄດ້ຮັບພຣະຄຸນການຊົງໄຖ່.

ຄົນພວກເຮົາໃນສມັຍນີ້ບໍ່ມັກສົນໃຈກັບຄົນທີ່ "ແຕກຕ່າງ" ຈາກພວກຕົນ; ໂດຍສເພາະເມື່ອຄົນທີ່ແຕກຕ່າງນັ້ນເປັນຄົນຍາກຈົນ, ຄົນໂດດດ່ຽວ, ຄົນພະເນຈອນ, ຫລືຄົນຄຸກ. ພວກເຂົາອາດຈະມີຖານະຕ້ອຍຕ່ຳ, ມີຄວາມແຕກຕ່າງດ້ານຜິວພັນ, ຫລືມີຄວາມແຕກຕ່າງທາງສາສນາ. ແນ່ນອນພວກເຮົາບໍ່ໄດ້ກຽດຊັງພວກເຂົາ; ແຕ່ພວກເຮົາກໍບໍ່ສົນໃຈກັບພວກເຂົາ. ພວກເຮົາອາດຈະເວົ້າເຣື່ອງຊວນຫົວແບບສຽດສີພວກເຂົາ; ພວກເຮົາແບ່ງແຍກພວກເຂົາໄວ້ຕ່າງຫາກ ເພື່ອເຮົາຈະບໍ່ໄດ້ເຫັນຄວາມລຳບາກຂອງພວກເຂົາ ແລະພວກເຮົາກໍບໍ່ເຄີຍຄິດເລີຍວ່າພວກເຮົາມີໜ້າທີ່ໃນການຊ່ວຍເຫລືອພວກເຂົາເຫລົ່ານັ້ນ.

ເຣື່ອງອຸປມາໃນບົດຮຽນນີ້ຊີ້ໃຫ້ເຫັນເຖິງການບໍ່ສົນໃຈຂອງພວກເຮົາໃນຄວາມທຸກຮ້ອນຂອງຄົນຍາກຈົນ, ຄົນເຈັບປ່ວຍ, ແລະຄົນທີ່ຢູ່ໂດດດ່ຽວ ຊຶ່ງຢູ່ອ້ອມຮອບພວກເຮົາ. ພວກເຮົາຮູ້ວ່າຄົນພວກນີ້ມີຢູ່ທົ່ວໆໄປ, ແຕ່ປະກົດວ່າພວກເຂົາໄດ້ຢູ່ໄກຈາກສາຍຕາ ແລະຈາກໃຈຂອງພວກເຮົາ. ຄົນສ່ວນຫລາຍບໍ່ຮູ້ເລີຍວ່າໃນສັງຄົມຂອງພວກເຮົາຍັງມີຄົນທີ່ຍາກຈົນແລະຕ້ອງການຄວາມຊ່ວຍເຫລືອຢູ່ຢ່າງຫລວງຫລາຍ. ສຳລັບຜູ້ທີ່ຮູ້ ສ່ວນຫລາຍຍັງຄິດວ່າຄວາມຍາກຈົນນັ້ນແມ່ນເກີດມາຈາກຄວາມກຽດຄ້ານ ແລະຄວາມບໍ່ເອົາໃຈໃສ່ໃນວຽກງານຂອງສ່ວນບຸກຄົນ.

ຄຳອຸປມານີ້ຍັງຊ່ວຍພວກເຮົາໃຫ້ຄິດເຖິງຄຳສອນຂອງພຣະເຢຊູຄຣິດໃນພຣະທັມມັດທາຍບົດທີ 25 ຊຶ່ງພຣະອົງໄດ້ຊົງສອນພວກເຮົາເຣື່ອງການພິພາກສາຄັ້ງສຸດທ້າຍ. ພຣະເຢຊູໄດ້ເວົ້າເຖິງຄົນທີ່ໄດ້ຊ່ວຍເຫລືອຜູ້ທີ່ຍາກຈົນ ແລະຄົນທີ່ບໍ່ໄດ້ຊ່ວຍເຫລືອ. ຜູ້ທີ່ໄດ້ຊ່ວຍເຫລືອທູນວ່າ, "ພຣະອົງເຈົ້າເອີຍ, ພວກຂ້າພຣະອົງໄດ້ເຫັນພຣະອົງຊົງຢາກເຂົ້າຫລືຊົງຫິວນ້ຳ ຊົງເປັນແຂກບ້ານ, ຊົງເປືອຍພຣະກາຍ, ຊົງປະຊວນຫລືຊົງຢູ່ໃນຄຸກແລະພວກຂ້າພຣະອົງບໍ່ໄດ້ປະຕິບັດພຣະອົງ ຍາມໃດ?" ເມື່ອນັ້ນພຣະອົງຈະຊົງຕອບແກ່ເຂົາວ່າ "ເຮົາບອກສູທັງຫລາຍຕາມຄວາມຈິງວ່າ ທີ່ສູບໍ່ໄດ້ເຮັດການເຫລົ່ານັ້ນແກ່ຜູ້ຕ່ຳຕ້ອຍທີ່ສຸດໃນພວກນີ້ ພວກສູກໍບໍ່ໄດ້ເຮັດແກ່ເຮົາເໝືອນກັນ" (ມທ 25:44-45).

ພຣະເຢຊູໄດ້ໃຊ້ເວລາຂອງພຣະອົງໃນໂລກເພື່ອຮັບໃຊ້ຄົນຍາກຈົນ, ຄົນນອກສັງຄົມ, ຄົນປ່ວຍ, ຄົນຂັດສົນ, ແລະຄົນທີ່ສັງຄົມບໍ່ເອົາໃຈໃສ່. ແນ່ນອນທີ່ສຸດ ຄົນທີ່ມີຖານະຫລາຍຄົນກໍໄດ້ຕິດຕາມພຣະເຢຊູ; ແລະພວກເຂົາໄດ້ຕິດຕາມພຣະອົງເພາະເຂົາໄດ້ເຫັນຄວາມຮັກແລະຄວາມເມດຕາຂອງພຣະອົງ. ນອກນັ້ນພວກເຂົາກໍໄດ້ເຫັນຣິດອຳນາດໃນການສອນເຣື່ອງຊີວິດຂອງພຣະອົງດ້ວຍ.

**<u>ຄຳຖາມ:</u>**

1. ມີຄົນພວກໃດທີ່ທ່ານສັງເກດເຫັນວ່າຍັງຕ້ອງການ ການຊ່ວຍເຫລືອຫລາຍທີ່ສຸດໃນຄຸ້ມບ້ານຂອງທ່ານ?
໒. ມີອຸປສັກອັນໃດແດ່ທີ່ກີດກັ້ນບໍ່ໃຫ້ພວກເຮົາສາມາດເຫັນຄວາມທຸກລຳບາກທີ່ມີຢູ່ອ້ອມຮອບພວກເຮົາ? ພວກເຮົາຈະທຳລາຍອຸປສັກນັ້ນໄດ້ແນວໃດ?
3. ຖ້າທ່ານພຍາຍາມຈະທຳລາຍອຸປສັກເຫລົ່ານັ້ນ, ທ່ານຄິດວ່າຈະມີການຕໍ່ຕ້ານເກີດຂຶ້ນບໍ່, ຈາກພາຍໃນຕົວຂອງທ່ານເອງ ແລະຈາກຄົນອື່ນໆ?
4. ທ່ານເຄີຍມີປະສົບການເຣື່ອງການຮັບໃຊ້ຄົນທີ່ຕ້ອງການຄວາມຊ່ວຍເຫລືອໃນຄຸ້ມບ້ານຂອງທ່ານ, ໃນຣັດຂອງທ່ານ, ຫລືໃນຕ່າງປະເທດບໍ່? ທ່ານໄດ້ຮຽນບົດຮຽນແນວໃດແດ່ຈາກຄົນທີ່ທ່ານໄດ້ຮັບໃຊ້ມາ?

# ບົດຮຽນບົດທີ 11
# ຂ້າໃຊ້ກັບເຈົ້ານາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 17:7-10
**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ລູກາ 17:1-10
**ຈຸດສຳຄັນຂອງບົດຮຽນນີ້:** ການເຊື່ອຟັງພຣະເຈົ້າເປັນໝາກຜົນຂອງການຮູ້ພຣະຄຸນພຣະອົງ.
**ຄຳຖາມເພື່ອການສຳຣວດ:** ທ່ານຄິດວ່າພຣະເຈົ້າໄດ້ຕິດຄ້າງທ່ານອັນໃດເມື່ອທ່ານປະຕິບັດຕາມຄຳພຣະອົງ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຄົ້ນໃນຄຳອຸປະມາກ່ຽວກັບການເຊື່ອຟັງເປັນໜ້າທີ່ຂອງເຮົາ ບໍ່ແມ່ນວ່າເຮົາເຊື່ອຟັງແລ້ວຈະໄດ້ສິ່ງຕອບແທນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ສັ່ງສອນຄົນທັງຫລາຍໃຫ້ກາຍເປັນສາວົກ.

ການຮັບໃຊ້ເປັນໜ້າທີ່ຂອງຂ້າໃຊ້ຜູ້ເຊື່ອຟັງເຈົ້ານາຍຂອງຕົນໂດຍບໍ່ມີເງື່ອນໄຂວ່າຈະໄດ້ສິ່ງໃດຈາກເຈົ້ານາຍ, ສ່ວນທີ່ຈະໄດ້ສິ່ງໃດຈາກເຈົ້ານາຍນັ້ນສຸດແລ້ວແຕ່ເຈົ້ານາຍຈະເມດຕາສົງສານ ຝ່າຍຂ້າໃຊ້ບໍ່ມີສິດທວງໜີ້ບຸນຄຸນ. ນີ້ຄືກົດເກນຂອງສັງຄົມໂລກທົ່ວໄປ. ໃນທຳນອງດຽວກັນຫາກເຮົາເຂົ້າໃຈວ່າພຣະເຈົ້າຊົງເປັນພຣະເຈົ້າຂອງຈັກກະວານ. ສ່ວນເຮົາທັງຫລາຍເປັນຜູ້ຮັບໃຊ້ພຣະເຈົ້າທີ່ຊົງເລືອກຈາກສວັນ ໃຫ້ໄດ້ຮັບໃຊ້ໃນໂລກມະນຸດເພື່ອນຳຄົນທັງຫລາຍໃຫ້ຄືນດີກັບພຣະເຈົ້າ ເຮົາກໍຄວນພູມໃຈທີ່ໄດ້ຮັບໃຊ້ ແລະຖືເປັນກຽດອັນສູງສົ່ງທີ່ມີໂອກາດຮັບໃຊ້ພຣະເຈົ້າ ອົງທ່ຽງແທ້. "*ຜູ້ຖືກເອີ້ນກໍມີຫລາຍ ແຕ່ຜູ້ຊົງເລືອກກໍມີນ້ອຍ* "(ມັດທາຍ 22:14). ຫາກເຮົາເຂົ້າໃຈເຊັ່ນນັ້ນ ເຮົາກໍຈະປິຕິຍິນດີໃນໜ້າທີ່ຂອງເຮົາ.

ຫລາຍເທື່ອເຮົາເຂົ້າໃຈວ່າຫາກເຮົາເຊື່ອປະຕິບັດຕາມພຣະທັມຂອງພຣະອົງແລ້ວພຣະອົງຕ້ອງໂຜດປະທານສິ່ງທີ່ເຮົາຢາກໄດ້ນັ້ນໃຫ້ແກ່ເຮົາ ເພາະເຮົາເປັນຄຣິສຕຽນທີ່ເຊື່ອຟັງ, ສ່ວນຄຣິສຕຽນທີ່ບໍ່ເຊື່ອຟັງນັ້ນຈະບໍ່ໄດ້ອັນໃດຈາກພຣະເຈົ້າ, ລາງເທື່ອເຮົາເຄີຍເວົ້າວ່າພຣະເຈົ້າລົງໂທດຄົນນັ້ນ ເພາະບໍ່ເຊື່ອຟັງພຣະອົງ. ນີ້ເປັນພຽງຄວາມຄິດຄວາມເຫັນຂອງເຮົາເປັນບາງຄັ້ງ. ຄຣິສຕຽນຜູ້ໃດຫາກຄິດເຊັ່ນນີ້ຈະໝົດໃຈເມື່ອລາວຮັບໃຊ້ພຣະເຈົ້າຈົນສຸດກຳລັງເຫື່ອແຮງແຕ່ເມື່ອລາວທູນຂໍອັນໃດອັນນຶ່ງແລ້ວບໍ່ໄດ້ຕາມໃຈລາວງກໍຈະໝົດໃຈຫລືເຊົາເຊື່ອພຣະເຈົ້າໄປເລີຍ. ບົດຮຽນທີ່ເຮົາຈະເວົ້າກັນໃນ ມື້ນີ້ຈະຊ່ອຍຊີ້ແຈງໃຫ້ເຮົາເຫັນແຈ້ງເພີ້ມອີກ.

**ຂ້ອຍໃຊ້ແລະເຈົ້ານາຍ 17: 7**

ໃນພຣະທັມຄຳອຸປະມາຂອງພຣະເຢຊູຕອນນີ້ເປັນການເຂົ້າໃຈຍາກ. ພຣະອົງບໍ່ໄດ້ກ່າວໂທດໃສ່ຄົນໃຊ້ວ່າເປັນຄົນໃຊ້ບໍ່

ດີ ແລະພຣະອົງກໍບໍ່ໄດ້ບອກວ່າ ພາຣະໜ້າທີ່ຂອງຜູ້ຮັບໃຊ້ໝົດເທົ່ານີ້ແລ້ວ. ໃນສມັຍພຣະເຢຊູນັ້ນມີພວກຂ້າທາດຢູ່ຫລວງຫລາຍ ໂດຍສເພາະເຮືອນເຈົ້ານາຍທຸກຄົນຕ້ອງມີຂ້າໃຊ້ຢ່າງນ້ອຍນຶ່ງຄົນ, ກ່ອນທີ່ພວກຂ້າໃຊ້ຈະໄດ້ເຂົ້າມາຢູ່ໃນເຮືອນຫລັງໃດຫລັງໜຶ່ງນັ້ນ ແມ່ນເຈົ້າຂອງເຮືອນຫລັງນັ້ນໄດ້ຊື້ຂ້ອຍໃຊ້ຄົນນັ້ນຈາກທ້ອງຕລາດ ຫລືຈາກບ້ານເຮືອນອື່ນທີ່ຂາຍໃຫ້ເໝືອນຂາຍສິ່ງຂອງ. ດ້ວຍເຫດນີ້ພຣະເຢຊູຈຶ່ງເວົ້າຄຳອຸປມາໂດຍຍົກເອົາຕົວຢ່າງ ຂ້າໃຊ້ໃນບໍຣິເວນນັ້ນໃຫ້ພວກສາວົກຟັງ ເພື່ອສາວົກຈະໄດ້ເຂົ້າໃຈເຣື່ອງການເປັນຂ້າໃຊ້ຂອງອົງພຣະຜູ້ເປັນເຈົ້າ. ດ້ວຍວ່າພຣະເຈົ້າໄດ້ຊົງຊື້ຂ້າໃຊ້ຂອງພຣະອົງດ້ວຍພຣະໂລຫິດແລະຊີວິດອັນບໍຣິສຸດຂອງພຣະບຸດພຣະອົງ ດັ່ງນັ້ນຂ້າໃຊ້ຂອງພຣະອົງທຸກຄົນຈຶ່ງເປັນໜີ້ພຣະຄຸນພຣະເຈົ້າ ແລະສົມຄວນແລ້ວທີ່ຈະຮັບໃຊ້ພຣະອົງໂດຍບໍ່ຮຽກຮ້ອງສິ່ງໃດ ຫລືບໍ່ຄິດວ່າຮັບໃຊ້ພຣະອົງແລ້ວ ພຣະອົງເປັນໜີ້ເຮົາໃນສິ່ງທີ່ເຮົາເຮັດນັ້ນ.

ໂດຍຄຳອຸປມານີ້ເຮົາຈຶ່ງເຂົ້າໃຈໄດ້ວ່າ ເຮົາທັງຫລາຍເປັນຂ້າໃຊ້ຜູ້ທີ່ເຮັດຕາມໜ້າທີ່ຂ້ອຍໃຊ້ດ້ວຍຄວາມຈົງຮັກພັກດີ ແລະເຮັດດ້ວຍການຂອບພຣະຄຸນທີ່ໄດ້ຊົງໄຖ່. ທ່ານອາດຈະຈຳໄດ້ວ່າພຣະເຢຊູຊົງປົວຄົນຂີ້ທູດສິບຄົນ ແລະມີຜູ້ດຽວຄືນມາຂອບພຣະຄຸນພຣະອົງເພາະລາວດີພະຍາດຂີ້ທູດ, ໃນຂະນະທີ່ລາວກັບຄືນມານັ້ນພຣະອົງກໍອະພັຍຄວາມຜິດບາບຂອງລາວດ້ວຍ. ສ່ວນເກົ້າຄົນນັ້ນບໍ່ໄດ້ກັບມາຖວາຍກຽດຂອບພຣະຄຸນພຣະອົງເຂົາຈຶ່ງດີແຕ່ພຽງພະຍາດຂີ້ທູດເທົ່ານັ້ນ, ສ່ວນຄວາມຜິດບາດນັ້ນຍັງບໍ່ທັນໄດ້ຮັບການອະພັຍ.

ຄຳຖາມມີຢູ່ວ່າ ເປັນຫຍັງພວກເຮົາຈຶ່ງພາກັນໄປໂບດທຸກອາທິດ? ບໍ່ແມ່ນທ່ານແລະຂ້າພະເຈົ້າໄປໂບດເພື່ອນະມັສການ ແລະຂອບພຣະຄຸນພຣະອົງໃນສິ່ງທີ່ພຣະອົງໄດ້ກະທຳໃນຊີວິດຂອງເຮົາບໍ່? ພຣະອົງໄດ້ຊົງໄຖ່ໂທດເຮົາຈາກຄວາມຜິດບາບຊຶ່ງເປັນເສັ້ນທາງແຫ່ງບຶງໄຟນະຮົກນັ້ນເປັນສິ່ງທີ່ຍິ່ງໃຫຍ່ທີ່ສຸດບໍ່ມີຫຍັງປຽບທຽບໄດ້ ດັ່ງນັ້ນແຫລະຄຣິສຕຽນທຸກຄົນຈຶ່ງໄປໂບດເພື່ອນະມັສການ ແລະຂອບພຣະຄຸນພຣະອົງ ໂດຍການຖວາຍ ແລະຮັບໃຊ້ພຣະອົງດ້ວຍໃຈສັດທາ ບໍ່ແມ່ນຫວັງໃຫ້ພຣະເຈົ້າຕອບແທນເຮົາທີ່ໄດ້ຮັບໃຊ້ນັ້ນ ຈົ່ງເຂົ້າໃຈວ່າເຮົາເປັນໜີ້ພຣະຄຸນພຣະເຈົ້າ ບໍ່ແມ່ນພຣະເຈົ້າເປັນໜີ້ເຮົາໃນສິ່ງທີ່ເຮົາເຮັດໃນພຣະນາມພຣະອົງ ເພາະເຮົາເຮັດໃນຖານະທີ່ເປັນຄຣິສຕຽນທີ່ຮູ້ບຸນຄຸນນັ້ນເອງ. ດັ່ງນັ້ນຜູ້ຮັບໃຊ້ພຣະເຈົ້າທຸກຂແນງຄວນມີໃຈໂມທະນາພຣະຄຸນໂດຍການຖວາຍຕົວຮັບໃຊ້ໂດຍເຫັນແກ່ພຣະຄຸນ.

**<u>ຂ້ອຍໃຊ້ທຸກວັນເວລາ</u> (17:8-9).**

ຫລາຍເທື່ອເຮົາໄດ້ແບ່ງຊີວິດຂອງເຮົາເປັນສ່ວນໆ ຄືວັນອາທິດເປັນຄຣິສຕຽນ ຫລືເປັນຜູ້ຮັບໃຊ້ພຣະເຈົ້າຈົນສຸດກຳລັງເຫື່ອແຮງຂອງຕົນ ສ່ວນວັນອື່ນໆນັ້ນເປັນຫຍັງກໍໄດ້. ການເຮັດດັ່ງນີ້ກໍບໍ່ແຕກຕ່າງຫຍັງຫລາຍກັບຊີວິດຂອງເຮົາບາງຄົນໃນເມື່ອກ່ອນ, ວັນສິນບໍ່ດື່ມເຫລົ້າເຂົ້າບາ, ຍາມເຂົ້າພັນສາກໍເຄັ່ງຄັດຈົນເຖິງຂັ້ນສຸດຍອດ ບາດນອກຈາກວັນສິນ ແລະອອກພັນສາແລ້ວກາຍເປັນຄົນທັມດາ ຫລືລາງຄົນກໍກາຍເປັນຄົນຂີ້ເຫລົ້າ. *(ຂ້າພະເຈົ້າບໍ່ໄດ້ເວົ້າວ່າວັດທະນະທັມສັງຄົມການເຊື່ອຖືນັ້ນບໍ່ດີ, ທີ່ເວົ້າມາກໍພຽງແຕ່ຍົກຕົວຢ່າງຂອງຄຣິສຕຽນຫລາຍຄົນໄດ້ມີຊີວິດແນວນັ້ນມາກ່ອນ)* 2000 ປີທີ່ຜ່ານມາໃນສມັຍຂອງພຣະເຢຊູຍັງຢູ່ໃນໂລກນີ້ເປັນສມັຍຂອງຂ້າທາດແລະຊັກດີນາ. ຜູ້ທຸກຍາກໄດ້ກາຍເປັນສິນຄ້າໃນທ້ອງຕລາດ ເພື່ອຄົນຮັ່ງມີແລະພວກເຈົ້ານາຍຈະພາກັນຊອກຊື້ຂ້າທາດມາໄວ້ໃນເຮືອນເພື່ອເຮັດວຽກງານທຸກຢ່າງ ແລະເພື່ອສແດງເຖິງຄວາມຮັ່ງມີອີກດ້ວຍ. ເມື່ອຖືກຊື້ໄປແລ້ວພວກເຈົ້ານາຍກໍຈະໃຊ້ຂ້ອຍຂ້ານັ້ນຕາມໃຈມັກຂອງເຈົ້ານາຍ. ຂ້າທາດຫລາຍຄົນຕ້ອງເຮັດວຽກທີ່ທົ່ງນາແຕ່ເຊົ້າຈົນຄ່ຳ ເມື່ອຕົກແລງມາກໍກັບສູ່ບ້ານເຮືອນຂອງເຈົ້ານາຍແລະປະຕິບັດເພີ່ມອີກ. ດ້ວຍເຫດນີ້ຊີວິດຂ້ອຍຂ້າຈຶ່ງແຕກຕ່າງກັບເຮັດການແປດຊົ່ວໂມງຕໍ່ວັນ.

ໃນຂໍ້ 8 ໄດ້ບອກພວກເຮົາວ່າ *"ຈົ່ງຈັດແຈງໃຫ້ເຮົາກິນແລງແລະຄາດແອວໄວ້ປະຕິບັດເຮົາ ຈົນເຖິງເຮົາກິນແລະດື່ມແລ້ວ ພາຍຫລັງເຈົ້າຈຶ່ງຄ່ອຍກິນແລະດື່ມ"* ຫາກເຮົາບໍ່ເຂົ້າໃຈເຣື່ອງຊີວິດຂ້ອຍໃຊ້ແລ້ວເຮົາຄືດວ່າເຈົ້ານາຍນັ້ນຂົ່ມເຫັງຂ້ອຍໃຊ້. ຂ້າພະເຈົ້າບໍ່ເຄີຍເປັນຂ້ອຍຂ້າ ແລະບໍ່ເຄີຽເປັນເຈົ້ານາຍຂອງຜູ້ໃດໃນຊີວິດ ແຕ່ດຽວນີ້ຂ້າພະເຈົ້າຮ້ອງ

ຕົນເອງວ່າເປັນຂ້ອຍໃຊ້ຂອງພຣະເຢຊູຄຣິດ. ໃນຖານະທີ່ເປັນຂ້ອຍໃຊ້ພຣະອົງນັ້ນໄດ້ເຮັດໃຫ້ຂ້າພະເຈົ້າເຂົ້າໃຈເຖິງຊີວິດຂ້ອຍໃຊ້ເຈົ້ານາຍຝ່າຍໂລກແລະຝ່າຍສວັນດ້ວຍ. ໃນຝ່າຍໂລກນີ້ກໍເປັນເໝືອນຂໍ້ 8 ນັ້ນແທ້ຄືຫລັງຈາກວຽກງານນອກບ້ານແລ້ວເມື່ອກັບມາຂ້ອຍໃຊ້ຍັງຕ້ອງປະຕິບັດເຈົ້ານາຍອີກ. ໃນຄໍາອຸປມາທີ່ພຣະເຢຊູຊົງກ່າວແກ່ສາວົກນັ້ນເປັນພຽງພາບພົດໃຫ້ເຂົ້າໃຈເພີ້ມເທົ່ານັ້ນ ສ່ວນຄວາມໝາຍທີ່ແທ້ຈິງມີຢູ່ວ່າ ຂ້າໃຊ້ຂອງພຣະເຈົ້າເມື່ອປະຕິບັດໜ້າທີ່ບໍ່ວ່າຈະເປັນງານການຊ່ອຍເຫລືອຜູ້ອື່ນ, ງານຮັບໃຊ້ໃນໂບດເຊັ່ນງານສອນພຣະຄັມພີຕລອດເຖິງການເທສນາພຣະທັມພຣະເຈົ້າຈົບແລ້ວກໍຄວນຂອບພຣະຄຸນພຣະເຈົ້າດ້ວຍການອ້ອນວອນເຂົ້າເຝົ້າພຣະເຈົ້າເປັນການສ່ວນຕົວເສັຽກ່ອນ. ດັ່ງນັ້ນຄໍາທີ່ພຣະອົງກ່າວວ່າ *"ພາຍຫລັງເຈົ້າຈຶ່ງຄ່ອຍກິນແລະດື່ມ"* ໝາຍຄວາມວ່າບໍ່ເຖິງຍາມສນຸກສຸກສໍາບາຍເທື່ອ, ເມື່ອເຖິງເວລາແລ້ວຂ້າໃຊ້ນັ້ນຈະນັ່ງກິນແລະດື່ມຕາມກໍາໜົດເວລາທີ່ຊົງກໍາໜົດໄວ້ແລ້ວ.

ເຮົາເຄີຽໄດ້ຍິນຄຣິສຕຽນບາງຄົນຕລອດເຖິງອາຈານເວົ້າວ່າຂໍພັກຜ່ອນຢູ່ບ້ານສາກ່ອນຈັກໜ່ອຍນຶ່ງແລ້ວຈະໄປນະມັສການຢູ່ດອກ. ຂ້າພະເຈົ້າບໍ່ຮູ້ວ່າແມ່ນເພິ່ນເວົ້າຫຍັງ? ຫລືບາງທີເພິ່ນອາຈຄິດວ່າການໄປນະມັສການ ແລະການໄປຂອບພຣະຄຸນພຣະເຈົ້າເປັນພາຣະກໍບໍ່ຮູ້, ສ່ວນຂ້າພະເຈົ້າເຂົ້າໃຈວ່າການໄປໂບດເພື່ອນະມັສການ ແລະໄປຂອບພຣະຄຸນພຣະເຈົ້າທີ່ເພິ່ນໄດ້ໂຜດເຮົາໃຫ້ພົ້ນນັ້ນເປັນໜ້າທີ່ຂອງຄຣິສຕຽນທຸກຄົນສົມຄວນຈະໄປຂອບພຣະຄຸນດ້ວຍຍິນດີ.

ຖານະທີ່ເຮົາທັງຫລາຍເປັນຜູ້ຮັບໃຊ້ພຣະເຈົ້າ ທີ່ໄດ້ຮ້ອງຕົນເອງວ່າເປັນຂ້າໃຊ້ພຣະເຈົ້າໃນຂະນະທີ່ຕົນເອງອ້ອນວອນນັ້ນເປັນຄໍາອ້ອນວອນດ້ວຍຄວາມຖ່ອມຕົວແລ້ວເຮົາຄວນເຮັດໜ້າທີ່ງພຣະເຈົ້າມອບໝາຍໃຫ້ນັ້ນໃຫ້ສໍາເຣັດດ້ວຍຄວາມຊື່ນຊົມຍິນດີແລ້ວຜູ້ຮັບໃຊ້ຈໍາຕ້ອງມາລາຍງານວຽກທີ່ຕົນໄດ້ເຮັດໃນວັນນີ້ເໝືອນໃນຂໍ້ 8 ນັ້ນ. ເຮົາຮ້ອງວ່າ Devotional ແປວ່າ ເຂົ້າເຝົ້າພຣະເຈົ້າ, ສລຸບແລ້ວຊີວິດຂ້ອຍໃຊ້ບໍ່ໄດ້ແບ່ງເປັນສ່ວນຮັບໃຊ້ ແລະອີກສ່ວນນັ້ນຈະເຮັດຕາມໃຈ. ເມື່ອເປັນຂ້ອຍໃຊ້ (ຄຣິສຕຽນ) ແລ້ວບໍ່ວ່າຈະເປັນເວລາໃດ ຢູ່ທີ່ໃດກໍຍັງໄດ້ຊື່ວ່າເປັນຂ້ອຍໃຊ້ຢູ່ນັ້ນແຫລະ.

**<u>ຂ້າທາດທີ່ຖ່ອມຕົວ</u>** (17:10)

ຂ້າພະເຈົ້າຍັງຈໍາເຣື່ອງທີ່ຂຽນໃນໂຮງຮຽນປະຖົມສຶກສາໃນສມັຍຂ້າພະເຈົ້າເປັນເດັກນ້ອຍ. ເຣື່ອງມີຢູ່ວ່າ ມີໄກ່ຜູ້ໂຕໜຶ່ງກໍາລັງຂັນດ້ວຍຄວາມອອນຊອນສຽງຂັນຂອງຕົນເອງມ່ວນຫລາຍ, ບໍ່ນານເທົ່າໃດກໍມີເຫງັນຜູ້ຫິວກະຫາຍໂຕນຶ່ງວາງແຜນກິນໄກ່ຜູ້ໂຕນັ້ນ. ໄກ່ເປັນອາຫານຊັ້ນຍອດຂອງເຫງັນ ແຕ່ໄກ່ນັ້ນຢູ່ຫ່າງໄກຈາກເຫງັນພໍສົມຄວນ, ໃນຂະນະທີ່ໄກ່ຜູ້ໂຕນັ້ນເປັ່ງສຽງຂັນຈົນສຸດກໍາລັງ ເຫງັນຜູ້ກໍເອີຽຂຶ້ນວ່າ *"ເຈົ້າຄືມາຂັນມ່ວນແທ້"* ຄໍາເວົ້ານີ້ເຮັດໃຫ້ໄກ່ຜູ້ພໍໃຈຫລາຍຈຶ່ງເປັ່ງສຽງຂັນຂຶ້ນອີກຈົນສຸດສຽງ ແລະແລ້ວເຫງັນຈຶ່ງກ່າວອີກວ່າ *"ເວລາພໍ່ເຈົ້າຍັງມີຊີວິດຢູ່ເພິ່ນຂັນສຽງມ່ວນກວ່າເຈົ້າແດ່ຈັກໜ່ອຍ ເພາະເພິ່ນຫລັບຕາຂັນ"* ວ່າແລ້ວໄກ່ຜູ້ກໍເລີ້ມຫລັບຕາຂັນເບື້ອງນຶ່ງ ເຫງັນຜູ້ກໍຍ້ອງຂຶ້ນອີກວ່າ *"ໂອຍ...ຈັ່ງແມ່ນມ່ວນກວ່າເກົ່າຫລາຍ"* ເວົ້າແລ້ວກໍຫຍັບເຂົ້າໃກ້ເທື່ອລະເລັກລະນ້ອຍ ເຫງັນເວົ້າຕໍ່ໄປວ່າ *"ຖ້າເຈົ້າຢາກໃຫ້ສຽງເຈົ້າມ່ວນຄືພໍ່ເຈົ້າແທ້ ເຈົ້າຄວນຫລັບຕາທັງສອງຂ້າງ ແລ້ວສຽງເຈົ້າຈະມ່ວນອອນຊອນໄປກວ່ານີ້"* ຝ່າຍໄກ່ມັກຍ້ອງກໍເລີ້ມຫລັບຕາທັງສອງຂັນດ້ວຍການເປັ່ງສຽງຍາວໆ ໃນຂະນະນັ້ນເອງ ເຫງັນຜູ້ກໍໂດດຄາບຄໍໄກ່ໂຕນັ້ນໄປເປັນອາຫານ. ເຮົາກໍເຊັ່ນດຽວກັນຫາກເປັນຜູ້ຮັບໃຊ້ທີ່ມັກຍ້ອງ ເມື່ອບໍ່ຖືກຍ້ອງກໍຈະບໍ່ດີໃຈ ຫາກຖືກຍ້ອງບ່າໄຫລ່ທັງສອງກໍຈະພອງຈົນລືມວ່າຕົນເອງເປັນຂ້າໃຊ້ທີ່ບໍ່ມີປໂຍດ.

*"ສໍາລັບພວກທ່ານກໍເໝືອນກັນນັ້ນແຫລະ ຄືເມື່ອພວກທ່ານໄດ້ເຮັດຕາມທຸກສິ່ງທີ່ໄດ້ຊົງສັ່ງໄວ້ນັ້ນ ພວກທ່ານກໍຈົ່ງເວົ້າວ່າ ພວກຂ້ານ້ອຍເປັນຂ້ອຍໃຊ້ທີ່ບໍ່ມີປໂຍດ ພວກຂ້ານ້ອຍພຽງແຕ່ເຮັດຕາມໜ້າທີ່ຂອງພວກຂ້ານ້ອຍເທົ່ານັ້ນ"* ຂໍ້ 10 ເປັນການສອນໃຫ້ເຮົາທັງຫລາຍຖ່ອມຕົວໃນຖານະເປັນຂ້ອຍໃຊ້, ດ້ວຍວ່າພຣະອົງເອງກໍຍັງຖ່ອມພຣະທັຍຟັງພຣະບິດາ ພຣະອົງຊົງຖ່ອມຢ່າງໃດພຣະອົງກໍສອນເຮົາດັ່ງນັ້ນ ແລະສົມຄວນແລ້ວເຮົາຈະຕ້ອງປະຕິບັດຕາມຄໍາສອນພຣະອົງດ້ວຍວ່າຄຣິສຕຽນທຸກຄົນກໍາລັງຮຽນເອົາແບບຢ່າງພຣະເຢຊູ.

ງານທຸກຢ່າງທີ່ເຮົາທັງຫລາຍໄດ້ຮັບໃຊ້ນັ້ນບໍ່ແມ່ນເຮົາເປັນຄົນແຮກແລະຜູ້ສຸດທ້າຍ, ງານຮັບໃຊ້ທີ່ເຮົາເຮັດໃນເວລານີ້ມີຄົນຈຳນວນຫລວງຫລາຍໄດ້ເຮັດມາກ່ອນແລ້ວ. ດ້ວຍວ່າຄົນຫລັງຫລາຍທີ່ໄດ້ເຮັດມານັ້ນແຫລະເຮົາທັງຫລາຍຈຶ່ງໄດ້ຮັບຄວາມລອກພົ້ນ ແລະໃນເວລານີ້ແມ່ນໜ້າທີ່ຂອງພວກເຮົາຈຳຕ້ອງດຳເນີນວຽກງານນັ້ນຕໍ່ໄປ ໂດຍເຂົ້າໃຈວ່າ *"ພວກຂ້ານ້ອຍເປັນຂ້ອຍໃຊ້ທີ່ບໍ່ມີປະໂຍດ ພວກຂ້ານ້ອຍພຽງແຕ່ເຮັດຕາມໜ້າທີ່ຂອງພວກຂ້ານ້ອຍເທົ່ານັ້ນ"* ຫາກເຮົາຍັງຕ້ອງການຣາງວັນຈາກພຣະເຈົ້າຢູ່ ແມ່ນເຮົາຕ້ອງການສິ່ງນ້ອຍທີ່ສຸດ ເພາະສິ່ງໃຫຍ່ທີ່ສຸດນັ້ນແມ່ນພຣະອົງໄດ້ໃຫ້ແກ່ເຮົາແລ້ວຕັ້ງແຕ່ວັນທີ່ເຮົາຮັບເຊື່ອພຣະອົງພຸ້ນ. *"ຜູ້ທີ່ຍົກຕົວຂຶ້ນ ຜູ້ນັ້ນຈະຖືກຖອຍລົງ ຜູ້ໃດທີ່ຖ່ອມຕົວລົງ ຜູ້ນັ້ນຈະຖືກຍົກຂຶ້ນ"* (ມັດທາຍ 23:12).

ເມື່ອຊ່ອຍເຫລືອຮັບໃຊ້ກໍຢ່າຫວັງໃຈວ່າຈະໄດ້ຮັບຄຳຍ້ອງຍໍຊົມເຊີຍຈາກຜູ້ທີ່ເຮົາຊ່ອຍເຫລືອເພິ່ນ ເພາະເຮົາຊ່ອຍເພິ່ນນັ້ນບໍ່ແມ່ນໃນນາມຂອງເຮົາ, ຫາກເພິ່ນຈະຍ້ອງກໍໃຫ້ເພິ່ນຍ້ອງແລະສັຣເສີນພຣະເຈົ້າກໍດີກວ່າ. ທ່ານອາດຮູ້ວ່າກັນຢ່າພະຍາຍາມຈື່ຈຳວ່າໄດ້ຊ່ອຍເພິ່ນແລ້ວ ຄາວໜ້າມາເພິ່ນຈະເຮັດດີຕໍ່ເຮົາດອກ, ຄິດແນວນີ້ຄືເພິ່ນຕິດຄ້າງເຮົາ ຄິດຢ່າງນີ້ກັບພຣະເຈົ້າກໍບໍ່ຖືກເພາະເຮົາຮັບໃຊ້ເພື່ອເຫັນແກ່ພຣະຄຸນພຣະອົງ; ຫາກຄິດກັບຜູ້ທີ່ເຮົາໄດ້ຊ່ອຍເຫລືອເພິ່ນເຮົາກໍອາດເສັຽໃຈເມື່ອເພິ່ນບໍ່ເຮັດດີຕອບສນອງ. ບາງທີເພິ່ນຍັງຈະຕິຕຽນເຮົາອີກຊ້ຳ ແຕ່ຢ່າເອົາໃຈໃສ່ຄຳຕິຫລືຄຳຊົມ ດ້ວຍວ່າມີສິ່ງໃດແດ່ໃນໂລກນີ້ທີ່ຄົນບໍ່ຕ້ອງຕິ ເຮັດດັ່ງນີ້ແລ້ວທ່ານກໍສບາຍໃຈກວ່າເປັນຄົນມັກຍ້ອງດັ່ງໄກ່ຜູ້ມັກຍ້ອງໂຕນັ້ນ.

ສ່ວນຜູ້ທີ່ເພິ່ນໄດ້ຊ່ອຍເຫລືອຕົນເອງແລ້ວກໍຄວນພະຍາຍາມຈື່ຈຳສິ່ງທີ່ເພິ່ນເຮັດກັບເຮົາໃນພຣະນາມພຣະຄຣິດນັ້ນ, ຫາກທ່ານຄິດດັ່ງນີ້ທ່ານກໍເປັນຄົນຮູ້ຈັກບຸນຄຸນຂອງຄົນແລະພຣະຄຸນພຣະເຈົ້າດ້ວຍໂດຍສເພາະຢ່າງຍິ່ງແມ່ນພຣະຄຸນຂອງພຣະເຈົ້າ ເພາະເພິ່ນໄດ້ສົ່ງຂ້ອຍໃຊ້ເພິ່ນມາຊ່ອຍເຮົາໃນສິ່ງທີ່ເຮົາເຮັດເອງບໍ່ໄດ້.

<u>ຄຳຖາມ</u>:

1: ເມື່ອກ່ອນໜ້າຮຽນບົດຮຽນບົດນີ້ ທ່ານເຂົ້າໃຈໃນພຣະທັມຕອນນີ້ຢ່າງໃດ?

2. ຫລັງຈາກຮຽນແລ້ວທ່ານເຂົ້າໃຈຢ່າງໃດ?

3. ໃນພຣະທັມມາຣະໂກ 10:44 *"ຜູ້ໃດຢາກເປັນເອກເປັນຕົ້ນໃນພວກທ່ານຜູ້ນັ້ນຈະຕ້ອງເປັນຂ້ອຍໃຊ້ຂອງທ່ານທັງໝົດ"* ທ່ານເຂົ້າໃຈຄຳວ່າຂ້ອຍໃຊ້ doulos ແນວໃດ?

4. ຂ້ອຍໃຊ້ເຮັດງານເມື່ອມາແຕ່ທົ່ງນາແລ້ວບໍ່ໄດ້ເຂົ້ານັ່ງໂຕະອາຫານໂລດທ່ານເຂົ້າໃຈແນວໃດ?

5. ພາຍຫລັງເຈົ້າຈຶ່ງຄ່ອຍກິນແລະດື່ມໝາຍຄວາມວ່າແນວໃດ?

6. ຊົງສອນວ່າ *ພວກຂ້ານ້ອຍເປັນຂ້ອຍໃຊ້ທີ່ບໍ່ມີປະໂຍດ* ທ່ານເຂົ້າໃຈແນວໃດ?

7. ບົດຮຽນວັນນີ້ສອນຫຍັງທ່ານແດ່?

# <u>ບົດຮຽນບົດທີ 12</u>

# <u>ຍິງໝ້າຍແລະຕຸລາການ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 18:1-8

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ລູກາ 17: 20--18:8

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການອ້ອນວອນເປັນກຳລັງໃຈໃນການຕໍ່ສູ້ກັບບັນຫາ

**<u>ຄຳຖາມເພື່ອການສຳຣວດ:</u>** ທ່ານຍັງຈະມີຄວາມເຊື່ອຈົນເຖິງເວລາພຣະຄຣິດກັບຄືນມາບໍ່?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອບອກໃຫ້ຮູ້ວ່າການອ້ອນວອນຊ່ອຍໃຫ້ຕັ້ງໝັ້ນຄົງ.

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດຖືກສ້າງຂຶ້ນໃນຮູບຮ່າງຄ້າຍຄືພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູທາງກາຍ, ຈິດວິນຍານ ແລະຄວາມຄິດ.

ພຣະທັມລູກາເປັນພຣະທັມຄຳອຸປມາທີ່ເຂົ້າໃຈໄດ້ຍາກສຳລັບຄົນທົ່ວໄປທີ່ບໍ່ໄດ້ຢູ່ໃນພຣະເຢຊູຄຣິດ. ໃນພຣະທັມຕອນທີ່ເຮົາໄດ້ອ່ານນັ້ນໄດ້ເວົ້າເຖິງຄຳອ້ອນວອນທີ່ມີພະລັງຄືອ້ອນວອນໃນສິ່ງທີ່ບໍ່ ໜ້າເປັນໄປໄດ້ ເຮັດເປັນໄປໄດ້ຫາກພຣະເຈົ້າພໍພຣະທັຍ. ດ້ວຍເຫດນີ້ເມື່ອເຮົາອ້ອນວອນຈົ່ງໝັ້ນໃຈໃນຄຳອ້ອນວອນ ແລະອ້ອນວອນຈົນເຫັນຜົນ, ຫລາຍເທື່ອເຮົາບໍ່ໄດ້ອົດທົນດົນນານໃນການອ້ອນວອນພຽງພໍ. ດ້ວຍເຫດນີ້ພຣະເຢຊູຊົງ ສອນໃຫ້ເຮົາທັງຫລາຍອົດທົນໃນການອ້ອນວອນໃນຄຳອຸປມານີ້.

## <u>ຄົນສອງຄົນໃນຄຳອຸປະມາ</u> 18:2-3

1. ຕຸລາການເປັນຜູ້ມີອຳນາດໃນການຕັດສິນຄວາມຕ່າງໆ, ຖືກແຕ່ງຕັ້ງໃຫ້ເປັນຜູ້ຕັດສິນຄວາມຕາມພຣະບັນຍັດຂອງພຣະເຈົ້າ. ຕຸລາການຈຳເປັນຕ້ອງເປັນຄົນສັດຊື່ແລະທ່ຽງທັມບໍ່ອຽງຊ້າຍຫລືຂວາ ແລະເປັນຄົນຂອງພຣະເຈົ້າ. (ອົບພະຍົບ 18:16).

2. ຍິງໝ້າຍເປັນຄົນຍາກຈົນຂາດສາມີເປັນຜູ້ເບິ່ງແຍງ, ເມື່ອຍາກຈົນກໍບໍ່ມີໃຜສົນໃຈ, ໄຮ້ທີ່ເພິ່ງພາອາສັຍຈຶ່ງກາຍເປັນຄົນຖືກຂົ່ມເຫັງຈາກພວກເຈົ້ານາຍທີ່ມີອຳນາດ. ດ້ວຍເຫດນີ້ຈຶ່ງມີກົດກ່າວວ່າ *"ຢ່າຂົ່ມເຫັງແມ່ໝ້າຍຫລືລູກ ກຳພ້າ"* (ອົບພະຍົບ 22:22).

ພຣະເຢຊູໄດ້ຍົກເອົາເຣື່ອງຂອງຕຸລາການແລະໂຈດ (Plaintiff) ຜູ້ນຶ່ງໄດ້ມາຟ້ອງເພື່ອຮຽກຮ້ອງຂໍຄວາມ ເປັນທັມ. ໂຈດຜູ້ນີ້ເປັນຍິງໝ້າຍຍາກຈົນ, ໃນຖານະທີ່ເປັນຍິງໝ້າຍຍາກຈົນຜູ້ຄົນແລະສັງຄົມກໍເມີນເສີຽ. ດ້ວຍເຫດນີ້ນາງຈຶ່ງຂາດທີ່ເພິ່ງພາອາສັຍແລະອັບປະຍົດໄຮ້ກຽດສັກສີ, ທີ່ເພິ່ງຂອງນາງແມ່ນຕຸລາການຜູ້ດຽວເທົ່ານັ້ນ. ໃນຄຳອຸປະມານີ້

ເຮົາເຫັນວ່າອຳນາດທັງໝົດຕົກຢູ່ໃນມືຕຸລາການຜູ້ດຽວໃນສມັຍນັ້ນ, ນາງໄປຫາຕຸລາການຜູ້ນີ້ເພື່ອເພິ່ນຈະໄດ້ຕັດສິນດ້ວຍຄວາມເປັນທັມ. ຈົ່ງສັງເກດວ່າຍິງໝາຍຜູ້ນີ້ບໍ່ໄດ້ຟ້ອງຮ້ອງໃຫ້ລົງໂທດ ຫລືເອົາເຣື່ອງຈຳເລີຽ (Defendant) ແຕ່ຢ່າງໃດ, ແຕ່ໄດ້ມາຂໍຮ້ອງໃຫ້ຕຸລາການຕັດສິນເພື່ອຄວາມເປັນທັມເທົ່ານັ້ນ.

ໃນສມັຍຂອງເຮັບເຣີ ການປົກຄອງແລະຕັດສິນຄວາມຕ່າງໆບໍ່ຈຳເປັນຕ້ອງມີພະຍານເພື່ອຕໍ່ສູ້ຄວາມໃນສານ ແລະຍັງບໍ່ຈຳ ເປັນໃຊ້ທະນາຍຄວາມເພື່ອຕໍ່ສູ້ຄະດີໃດໆ ດ້ວຍເຫດນີ້ອຳນາດທັງໝົດຈຶ່ງຕົກຢູ່ໃນມືຂອງຕຸລາການຜູ້ດຽວ. ອີງຕາມສະພາບການຕົວຈິງໃນເວລານັ້ນຕຸລາການຕ້ອງເປັນຄົນສັດຊື່ແລະທ່ຽງທັມ ແລະເປັນຄົນຂອງພຣະເຈົ້າເພື່ອຕັດສິນຄວາມດ້ວຍຄວາມຍຸຕິທັມຕາງໜ້າພຣະເຈົ້າ. ແຕ່ວ່າຕຸລາການຜູ້ນີ້ບໍ່ເປັນແນວນັ້ນ ລາວບໍ່ຢຳເກງພຣະເຈົ້າ (fear God) ແລະບໍ່ນັບຖືມະນຸດ (neither respect people). ດ້ວຍເຫດນີ້ເຮົາເຫັນວ່າຕຸລາການຜູ້ນີ້ບໍ່ເໝາະກັບໜ້າທີ່ຂອງລາວ ເພາະລາວບໍ່ໄດ້ເຮັດໜ້າທີ່ໄດ້ກຳນົດໄວ້. ແຕ່ໃຫ້ເຮົາເຂົ້າໃຈວ່ານີ້ເປັນພຽງຄຳອຸປມາເຣື່ອງການອົດທົນໃນການໄຫວ້ວອນ, ຊຶ່ງເປັນຮູບພາບຂອງຄົນທັມມະດາສາມັນຍາກຈົນທີ່ພະຍາຍາມອ້ອນວອນທູນຂໍຢ່າງບໍ່ລົດລະ.

ຍິງໝ້າຍຮູ້ຕົວດີວ່າຕຸລາການເປັນຄົນບໍ່ຢຳເກງພຣະເຈົ້າ ແລະບໍ່ໃຫ້ກຽດນັບຖືຜູ້ໃດ ແຕ່ນາງບໍ່ມີທາງເລືອກນອກຈາກໝັ່ນທຽວໄປຂໍຮ້ອງ, ລົບກວນໃຈຕຸລາການຈົນເພິ່ນລຳຄານແລ້ວເພິ່ນກໍຈະຕັດສິນຢ່າງຍຸຕິທັມໃຫ້. ຫລາຍເທື່ອຄຣິສຕຽນເຮົາບໍ່ໄດ້ອົດທົນພຽງພໍຕໍ່ການລໍຖ້າຄຳຕອບຈາກພຣະເຈົ້າເມື່ອເຮົາອ້ອນວອນຫາພຣະອົງ ຈົນລາງຄົນໄດ້ອອກຈາກໂບດໄປກໍມີ. ຂ້າພຣະເຈົ້າເຂົ້າໃຈວ່າເວລາຂອງພຣະເຈົ້າບໍ່ຄືເວລາຂອງເຮົາ ດ້ວຍເຫດນີ້ເມື່ອອ້ອນວອນແລ້ວຈົ່ງອົດໃຈລໍດ້ວຍຄວາມໝັ້ນໃຈ ແລ້ວພຣະອົງຈະໂຜດປະທານໃຫ້ຫາກສິ່ງນັ້ນເໝາະສົມກັບເຮົາ.

<u>ຄຳຕັດສິນຂອງຕຸລາການ</u> (18:4-5)

ຈາກຂໍ້ 2-3 ເຮົາເຫັນໜ້າທີ່ແລະຊີວິດຂອງຕຸລາການແລະຍິງໝ້າຍມີຄວາມແຕກຕ່າງກັນໄກ, ແຕ່ເນື່ອງຈາກຄວາມໝັ່ນພຽນຂອງຍິງໝ້າຍໄປລົບກວນຕຸລາການຫລາຍຄັ້ງຫລາຍທີ່ນຈົນຕຸລາການນັ້ນລຳຄານຈຶ່ງຈັດການເຣື່ອງນີ້ໃຫ້ແລ້ວໄປເພື່ອບໍ່ຢາກໃຫ້ລາວມາຫຍຸ້ງອີກ. *"ຝ່າຍຕຸລາການຜູ້ນັ້ນ, ເມື່ອທົ່ວທີກໍບໍ່ຍອມເຮັດຕາມ ແຕ່ພາຍລຸນມາກໍນຶກໃນໃຈວ່າ ແມ່ນເຮົາບໍ່ຢຳເກງພຣະເຈົ້າແລະບໍ່ນັບຖືມະນຸດກໍດີ, ແຕ່ເພາະແມ່ໝ້າຍຄົນນີ້ມາກວນໃຈເຮົາ ເຮົາຈະໃຫ້ຄວາມຍຸຕິທັມແກ່ນາງ ຢ້ານວ່ານາງຈະມາຢູ່ເລື້ອຍ ເຮັດໃຫ້ເຮົາເສັຽກຳລັງໃຈ" (ຂໍ້ 4-5).*

ໃນພຣະທັມຄຳອຸປມານີ້ມີຄວາມໝາຍວ່າ ເຖິງແມ່ວ່າຕຸລາການບໍ່ຢຳເກງພຣະເຈົ້າແລະບໍ່ນັບຖືມະນຸດກໍຍັງໃຈອ່ອນເມື່ອຖືກຍິງໝ້າຍມາລົບກວນຂໍຮ້ອງ. ສ່ວນພຣະເຈົ້າຜູ້ຊົງຮັກແລະຫ່ວງໃຍພວກເຮົາທັງຫລາຍຈະເມີນເສີຽຕໍ່ຄຳອ້ອນວອນຂອງເຮົາໄດ້ຢ່າງໃດ? ພຣະອົງຈະບໍ່ຟັງສຽງລູກຂອງພຣະອົງຫລາຍກວ່ານັ້ນຫລື? ຈົ່ງສັງເກດເບິ່ງຍິງໝ້າຍແລະຕຸລາການທີ່ພຣະເຢຊູຊົງກ່າວນັ້ນແລ້ວເຮົາທັງຫລາຍຈະບໍ່ເສັຽກຳລັງໃຈໃນການອ້ອນວອນ.
ໃນໂລກນີ້ເຮົາເຫັນວ່າເປັນການຍາກຫລາຍທີ່ຄົນທຸກຍາກຈະໄດ້ຮັບຄວາມຍຸຕິທັມຈາກພວກເຈົ້ານາຍທີ່ມີອຳນາດ, ໂດຍສເພາະໃນສມັຍທີ່ພຣະເຢຊູກ່າວເຖິງນັ້ນຍິ່ງຍາກວ່າທຸກວັນນີ້ຫລາຍເທົ່າ. ຈົ່ງສັງເກດວ່າຕອນທົ່ວທີຕຸລາການນັ້ນບໍ່ຍອມເຮັດຕາມຄຳຂໍຮ້ອງຂອງຍິງໝ້າຍ ຫລືເວົ້າອີກຢ່າງນຶ່ງວ່າບໍ່ຟັງສຽງຄຳຂໍຮ້ອງຂອງລາວ ຫລືເມີນເສີຽກໍວ່າໄດ້ ແຕ່ເນື່ອງຈາກວ່າຕຸລາການຢ້ານຍິງໝ້າຍຜູ້ນີ້ທຽວມາລົບກວນຫລາຍເທື່ອໂພດ ແລະຫາກນາງທຽວມາລົບກວນຫລາຍເທື່ອຄົນອື່ນກໍອາດຈະສັງເກດເຫັນວ່າເປັນຕຸລາການບໍ່ດີ ເພິ່ນຈຶ່ງຕັດສິນໃຈໃຫ້ຄວາມຍຸຕິທັມແກ່ນາງ.

<u>ຊົງອະທິບາຍຄຳອຸປມາ</u> 18:6-8

ພຣະອົງຊົງເປີດເຜີຍຄຳອຸປະມາໃຫ້ສາວົກເຂົ້າໃຈ *"ຄົນທີ່ພຣະເຈົ້າໄດ້ຊົງເລືອກໄວ້ຊຶ່ງຮ້ອງອອກພຣະນາມຂອງພຣະທັງ ກາງເວັນແລະກາງຄືນນັ້ນ ເຖິງແມ່ນວ່າພຣະອົງຈະຊົງຊ້ານານໃນການຂອງເຂົາກໍຕາມ* (ບໍ່ໄດ້ຕອບຄຳອ້ອນ

ວອນ ງ່າຍໆ)     *ພຣະອົງຈະບໍ່ຊົງໂຜດຄວາມຍຸຕິທັມແກ່ເຂົາຫລື* (ແປວ່າພຣະອົງຈະຊົງໂຜດດ້ວຍຄວາມຍຸຕິທັມ) ຂໍ້ 7. ຈົ່ງ ສັງເກດເບິ່ງຕຸລາການເປັນຄົນບໍ່ຢໍາເກງພຣະເຈົ້າແລະບໍ່ນັບຖືມະນຸດ ຍັງຕັດສິນຄວາມຂອງຍິງໝ້າຍດ້ວຍວ່ານາງມາ ລົບກວນຫລາຍເທື່ອ ສ່ວນຄົນຂອງພຣະເຈົ້າຜູ້ທີ່ພຣະເຈົ້າຊົງເລືອກໄວ້ແລ້ວພຣະອົງຈະຊົງຕອບຄໍາອະທິຖານທຸກຄົນ ດ້ວຍຄວາມຍຸຕິທັມຂອງພຣະອົງ.

ພຣະເຢຊູຊົງກ່າວຕອນສໍາຄັນວ່າ "*ຮ້ອງອອກພຣະນາມຂອງພຣະອົງທັງກາງເວັນແລະກາງຄືນ*" ແປວ່າອ້ອນວອນໃນນາມພຣະອົງດ້ວຍການອົດທົນ. ເພາະວ່າບາງຄັ້ງພຣະເຈົ້າບໍຕອບຄໍາອະທິຖານອ້ອນວອນຕາມໃຈຂອງເຮົາ ແຕ່ພຣະອົງຈະຕອບຄໍາອາທິຖານອ້ອນວອນຕາມເວລາແລະຕາມນໍ້າພຣະທັຍຂອງພຣະອົງຫາກພຣະອົງເຫັນວ່າສິ່ງທີ່ເຮົາອ້ອນວອນນັ້ນເໝາະສົມໃນພຣະທັມມັດທາຍກ່າວວ່າ "*ແຕ່ກ່ອນອື່ນ, ທ່ານທັງຫລາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງ ແລະພຣະອົງຈະຊົງເພີ້ມເຕີມສິ່ງທັງ ປວງເຫລົ່ານີ້ໃຫ້ແກ່ທ່ານ*" (ມທ 6:33).

ພຣະເຈົ້າຂອງພວກເຮົາຊົງເປັນພຣະເຈົ້າແຫ່ງຄວາມຮັກແລະຊົງເປັນພຣະເຈົ້າແຫ່ງຄວາມຍຸຕິທັມ ພຣະອົງຊົງຟັງສຽງຄໍາອະທິຖານອ້ອນວອນແລະສຽງຮ້ອງໄຫ້ຂອງລູກຂອງພຣະອົງທຸກຄົນ, ເຮົາທັງຫລາຍຟັງສຽງລູກຂອງເຮົາຮ້ອງໄຫ້ຢ່າງໃດພຣະອົງກໍຟັງເຮົາຍິ່ງໄປກວ່ານັ້ນອີກ. ບໍ່ມີພໍ່ຫລືແມ່ຄົນໃດດອກທີ່ບໍ່ສົນໃຈສຽງຮ້ອງໄຫ້ລູກຂອງຕົນ ທຸກຄັ້ງທີ່ລູກຂອງເຮົາຮ້ອງໄຫ້ ຢ່າງນ້ອຍເຮົາກໍຫລຽວເບິ່ງ ແລະໄປຈອບອອຍລູກດ້ວຍສໍານຽງສຽງມ່ວນ ລູກຢາກໄດ້ອັນໃດກໍຫາໃຫ້ລູກ ສ່ວນພໍ່ແລະແມ່ນັ້ນບໍ່ໄດ້ກະຢ່າຂໍແຕ່ລູກດີໃຈກໍພໍ່. ພຣະເຈົ້າກໍມີພຣະທັຍນີ້ກ່ອນພວກເຮົາຈົນໄດ້ສະລະພຣະບຸດອົງດຽວໃຫ້ແກ່ພວກເຮົາເພື່ອເປັນຄ່າໄຖ່ໂທດຂອງພວກເຮົາ, ບາງເທື່ອເວລານີ້ພຣະອົງຍັງບໍ່ທັນໄດ້ມາຈອບອອຍຫລືຕອບຄໍາອ້ອນວອນຂອງເຮົາເທື່ອ ການສະເດັດຄືນມາຂອງພຣະເຢຊູມາເຖິງເມື່ອໃດ ເມື່ອນັ້ນແຫລະນໍ້າຕາທຸກຢົດທີ່ລູກຂອງພຣະອົງໄຫລອອກມາກໍຈະຖືກເຊັດໃຫ້ແຫ້ງ. ດ້ວຍເຫດນີ້ເຮົາທັງຫລາຍຢ່າໄດ້ອ່ອນໃຈໃນການໄຫວ້ວອນຂໍ.

ທ່ານເຄີຍຊອກຫາລູກກຸນແຈຣົດກ່ອນຈະອອກຈາກບ້ານບໍ່? ບາງຄັ້ງກໍຊອກບໍ່ເຫັນແມ່ນບໍ່? ທ່ານຮູ້ບໍ່ເປັນຫຍັງທ່ານຈຶ່ງຊອກກຸນແຈນັ້ນບໍ່ພົບ? ບາງທີອາດເປັນເພາະທ່ານເອົາລູກກຸນແຈນັ້ນໄວ້ບໍ່ເປັນບ່ອນກໍເປັນໄດ້. ຄໍາອຸປມາທີ່ຊົງກ່າວນີ້ຄ້າຍຄືລູກກຸນແຈຣົດຂອງພວກເຮົາທີ່ຫ້ອຍຢູ່ຝາເຮືອນທີ່ຕຽມພ້ອມສເມີທີ່ຈະໃຊ້ງານໄດ້ທຸກຄັ້ງທີ່ຈະຂັບຣົດອອກບ້ານ. ການອ້ອນວອນກໍເປັນເຊັ່ນນັ້ນແຫລະ ເມື່ອເຮົາບໍ່ໄດ້ອ້ອນວອນທູນຂໍ ຫລືຫາກເຮົາອ້ອນວອນແບບບໍ່ເປັນຣະບຽບກໍຄ້າຍຄືເຮົາບໍ່ມີກຸນແຈຈະຕິດຈັກຣົດຂອງເຮົານັ້ນເອງ. ດັ່ງນັ້ນເຮົາຄວນອ້ອນວອນດ້ວຍຄວາມເຊື່ອ, ອ້ອນວອນດ້ວຍຄວາມອົດທົນ ແລະອ້ອນວອນຢ່າງມີຣະບຽບ.

<u>**ຄໍາຖາມ:**</u>

1. ພຣະເຢຊູເລົ່າຄໍາອຸປະມາໂດຍຍົກເອົາເຣື່ອງຂອງໃຜ?

2. ຕຸລາການເປັນຄົນແນວໃດ?

3. ພຣະເຈົ້າຊົງເປັນພຣະເຈົ້າແນວໃດ?

4. ເປັນຫຍັງພຣະເຢຊູຈຶ່ງເລົ່າຄໍານອຸປະມານີ້?

5. ທ່ານເຄີຍອ່ອນໃຈໃນຄຳອາທິຖານທີ່ບໍ່ຊີວິຕອບງ່າຍໆບໍ່?

6. ບົດຮຽນວັນນີ້ສອນຫຍັງແກ່ທ່ານແດ່?

7. ຕໍ່ໄປນີ້ທ່ານຄວນຈະອ້ອນວອນຢ່າງໃດ?

# ບົດຮຽນບົດທີ 13
# ຄົນອ້ອນວອນສອງຄົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 18:9-14
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ລູກາ 18:9-14
**ຈຸດສຳຄັນຂອງບົດຮຽນນີ້:** ການອ້ອນວອນນັ້ນສຳຄັນໃນສິ່ງທີ່ເຮົາເວົ້າ.
**ຄຳຖາມເພື່ອການສຳຣວດ:** ອັນໃດເປັນເຄື່ອງບອກວ່າເຮົາມີຄວາມສັມພັນທີ່ດີກັບພຣະເຈົ້າ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຳຣວດຄວາມສັມພັນອັນແທ້ຈິງແມ່ນການຂານຮັບພຣະເຈົ້າດ້ວຍຖ່ອມຕົວ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດຖືກສ້າງຂຶ້ນໃນຮູບຮ່າງຄ້າຍຄືພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູທາງກາຍ, ຈິດວິນຍານ ແລະຄວາມຄິດ.

**ບົດນຳ:**
ອາທິດແລ້ວເຮົາເວົ້າກັນເຣື່ອງອ້ອນວອນດ້ວຍຄວາມເຊື່ອແລະອົດທົນເໝືອນຍິງໝ້າຍໄຮ້ຄ່າໄປວອນຂໍໃຫ້ຕຸລາການທີ່ບໍ່ເຊື່ອພຣະເຈົ້າແລະບໍ່ນັບຖືມະນຸດ, ວັນນີ້ເຮົາຈະເວົ້າເຖິງການອ້ອນວອນແນວໃດຈຶ່ງຈະຖືກຕ້ອງ ເພາະວ່າການອ້ອນວອນແມ່ນການເວົ້າຫລືທູນຂໍຕໍ່ພຣະເຈົ້າ ດັ່ງນັ້ນເຮົາຄວນຈະຮຽນເວົ້າວ່າຢ່າງໃດດີ. ຫລາຍເທື່ອເຮົາໄດ້ຍິນຄົນເຮົາເວົ້າກັນວ່າຜູ້ນີ້ຊ່າງເວົ້າ, ຜູ້ນັ້ນນັ້ນເວົ້າບໍ່ເປັນ ຄວາມຈິງແລ້ວທັງສອງຄົນເປັນຄົນເວົ້າເກ່ງ. ດັ່ງນັ້ນຈຶ່ງມີຄຳຖາມວ່າ ຊ່າງເວົ້າ ແລະບໍ່ຊ່າງເວົ້າທີ່ກ່າວມານັ້ນມີຄວາມໝາຍຢ່າງໃດ?

**ຊາຍສອງຄົນເຂົ້າອ້ອນວອນໃນພຣະວິຫານ** 18:10
ຄົນທີ່ຢູ່ແຖວໃກ້ຄຽງພຣະວິຫານທີ່ກຸງເຢຣູຊາເລັມໃຜໆກໍຢາກເຂົ້າໄປອ້ອນວອນໃນພຣະວິຫານໃຫຍ່ທີ່ກາງເມືອງເຢຣູຊາເລັມກັນທັງນັ້ນ, ເຣື່ອງນີ້ໄດ້ລວມເຖິງເທົ່າທຸກວັນນີ້ຄືໃຜໆກໍຢາກໄປໂບດໃຫຍ່ໂບດງາມທີ່ຜູ້ອື່ນສ້າງໄວ້ແລ້ວ. ພຣະເຢຊູຊົງກ່າວຄຳອຸປະມາເຣື່ອງຂອງຄົນສອງຄົນທີ່ມີຄວາມເຊື່ອຢ່າງດຽວກັນຂຶ້ນໄປອ້ອນວອນໃນເວລາດຽວກັນໃນບໍຣິເວນພຣະວິຫານຊຶ່ງບໍ່ແມ່ນຍາມຄົນໜາແໜ້ນ. ທັງສອງຕ່າງກໍມີຈຸດປະສົງເຂົ້າເຝົ້າພຣະເຈົ້າເປັນການສ່ວນຕົວ, ຄົນໃນແຖວນັ້ນມີຄວາມເຊື່ອວ່າການໄປອ້ອນວອນໃນພຣະວິຫານຖືເປັນການສັກສິດ ເພາະເຂົາຄິດວ່າພຣະເຈົ້າສະຖິດຢູ່ໃນພຣະວິຫານທີ່ສ້າງດ້ວຍມືມະນຸດ. ດ້ວຍເຫດນີ້ວິຫານທີ່ເປັນຕຶກອາຄານຕ່າງໆຈຶ່ງມີທັງຄົນດີແລະຄົນຊົ່ວປະປົນກັນຢູ່ດ້ວຍວ່າຄົນທີ່ເຂົ້າມາໃນພຣະວິຫານຫລືໂບດມີທັງຄົນເຊື່ອແລະຄົນບໍ່ເຊື່ອປະປົນກັນຢູ່. ອາເບນແລະກາອິນກໍຖວາຍເຄື່ອງບູຊາໃນແທ່ນບູຊາອັນດຽວກັນ ການຂອງທັງສອງກໍແຕກຕ່າງກັນສັນໃດຟາຣີຊາຍແລະຄົນເກັບພາສີທີ່ເຂົ້າມາອ້ອນວອນກໍຕ່າງກັນຢ່າງນັ້ນ. ສອງຄົນທີ່ເຮົາກຳລັງເວົ້າກັນນີ້ແມ່ນ;

1. ຟາຣີຊາຍ, ແມ່ນຜູ້ມີອຳນາດທາງການເມືອງໃນສມັຍພຣະຄັມພີໃໝ່, ແລະຍັງເປັນພັກພວກຂອງຢິວແລະມີຄວາມຮູ້ກົດຂອງໂມເຊເປັນຢ່າງດີ, ຟາຣີຊາຍຈຶ່ງເປັນຜູ້ສູງສຸດເໝືອນຂັ້ນໄດຂັ້ນສູງ. ຟາຣີຊາຍຜູ້ນີ້ຂຶ້ນໄປອ້ອນວອນເພື່ອໃຫ້ຄົນທັງຫລາຍເຫັນວ່າລາວເອງເປັນຄົນຊອບທັມດ້ວຍວ່າລາວເອງເປັນຄົນປະຕິບັດສິນທັມພ້ອມທັງການຖວາຍຕາມກົດຂອງໂມເຊ. ມີນັກສາສນາສາດຄົນນຶ່ງກ່າວວ່າ ຟາຣີຊາຍຜູ້ນີ້ບໍ່ໄດ້ຂຶ້ນໄປອ້ອນວອນ ແຕ່ລາວໄປບອກພຣະເຈົ້າ ໃນສິ່ງທີ່ລາວເຮັດ, ລາວເວົ້າອີກວ່າການທີ່ເຮົາທັງຫລາຍເຮັດສິ່ງໃດສິ່ງນຶ່ງນັ້ນເຮົາບໍ່ຈຳເປັນບອກພຣະເຈົ້າ ດ້ວຍວ່າພຣະອົງຊົງເຫັນແລ້ວທຸກຢ່າງ.

2. ຄົນເກັບພາສີ, ແມ່ນຄົນເກັບພາສີອາກອນເພື່ອສົ່ງເສີມຈັກກະພັດໂຣມັນ, ດ້ວຍເຫດນີ້ໃນສາຍຕາຂອງຊາວຢິວລາວກາຍເປັນຄົນກົດຂີ່ຂູດຮີດຄົນຂອງຕົນເອງ ເພື່ອສົ່ງເສີມຕ່າງຊາດ, ດັ່ງນັ້ນຄົນເກັບພາສີຈຶ່ງເປັນຄົນຕ່ຳສຸດເໝືອນຂັ້ນໄດຂັ້ນຕ່ຳນັ້ນເອງ ການອ້ອນວອນກໍຄົງຈະບໍ່ກ້າອອກສຽງເທົ່າໃດ ແລະຄຳອ້ອນວອນນັ້ນກໍສັ້ນ ແຕ່ເຕັມໄປດ້ວຍຄວາມໝາຍສຳຄັນ.

ຄຳອຸປະມານີ້ມີຄວາມໝາຍວ່າ ຄົນສອງຄົນນີ້ມີອຸປນິດສັຍແລະອຸດົມຄະຕິແຕກຕ່າງກັນ, ໃນການປະຕິບັດ, ປາກເວົ້າກັບຜູ້ອື່ນນັ້ນ ແມ່ນອອກມາຈາກນິສັຍແລະຄວາມຄິດຂອງບຸກຄົນນັ້ນ. ໃນເຣື່ອງນີ້ພຣະເຢຊູຊົງສອນເຮົາໃຫ້ເອົາແບບຢ່າງຂອງຄົນເກັບພາສີທີ່ເຮັດຜິດແລ້ວສາຣະພາບຜິດຍັງດີກວ່າຟາຣີຊາຍເຮັດຖືກແຕ່ເວົ້າຜິດໂດຍການຕິຄອງຍ້ອງຕົນເອງໃຫ້ຜູ້ອື່ນຕົບມືໃຫ້.

## <u>ສອງຄົນອ້ອນວອນ ແຕ່ຊົງຟັງຜູ້ດຽວ</u> 18:11-14

### <u>1. ຟາຣີຊາຍ</u>

ຟາຣີຊາຍຂຶ້ນຕົ້ນອ້ອນວອນ *"ຂ້າແດ່ພຣະເຈົ້າ, ຂ້າພຣະອົງຂໍໂມທະນາພຣະຄຸນພຣະອົງ ທີ່ຂ້າພຣະອົງບໍ່ເປັນເໝືອນຄົນອື່ນຊຶ່ງເປັນຄົນໂລບ, ຄົນບໍ່ຍຸຕິທັມ ຄົນຫລິ້ນຊູ້ສູ່ຜົວເມັຽ ແລະບໍ່ເໝືອນຄົນເກັບພາສີຜູ້ນີ້"* ຂໍ້ 11 ຕອນແຣກເລີ້ມເບິ່ງຄືວ່າຟາຣີຊາຍຕັ້ງອົກຕັ້ງໃຈອ້ອນວອນດ້ວຍຖ່ອມຕົວແທ້ ຕໍ່ມາກໍເວົ້າອອກມາເປັນການຂົ່ມເພິ່ນຍໍໂຕຊຶ່ງເປັນການຜິດຫລັກສະນະຂອງພຣະຄຣິດຜູ້ຖ່ອມພຣະທັຍ ພຣະອົງຊົງເປັນຕົວຢ່າງແລະຊົງສອນໃຫ້ເຮົາທຸກຄົນຖ່ອມຕົວເໝືອນພຣະອົງ. ການອ້ອນວອນຂອງຟາຣີຊາຍມີສຽງນິນທາກັນວ່າບໍ່ແມ່ນການອ້ອນວອນ ແຕ່ແມ່ນການປະກາດຕົນເອງວ່າເປັນຄົນຊອບທັມ ຊຶ່ງເປັນການອວດໂຕຈອງຫອງຕໍ່ພຣະພັກພຣະເຈົ້າ.

ໃນພຣະທັມມັດທາຍສອນວ່າ *"ເມື່ອທ່ານຖືສິນອົດອາຫານ ຢ່າເຮັດໜ້າເສົ້າໝອງເໝືອນດັ່ງຄົນໜ້າຊື່ໃຈຄົດ ດ້ວຍວ່າເຂົາເຮັດໜ້າໝອງເພື່ອໃຫ້ມະນຸດເຫັນວ່າເຂົາຖືສິນອົດອາຫານ"* (ມທ 6: 16). ຖ້າເວົ້າໃຫ້ແຈ້ງໄປກວ່ານັ້ນການຖືສິນອົດອາຫານນັ້ນໃຫ້ຖືເປັນຄວາມລັບໃນທຳນອງດຽວກັນໃນເຣື່ອງການໃຫ້ທານ *"ຢ່າໃຫ້ມືຊ້າຍຮູ້ການທີ່ມືຂວາກຳລັງເຮັດນັ້ນ ດ້ວຍພຣະບິດາຊົງເຫັນໃນທີ່ລັບລີ້ຈະຊົງໂຜດປະທານບຳເໜັດໃຫ້ທ່ານ"* (ມທ 6:3). ມີຄວາມໝາຍຢ່າສະແດງຕົນເປັນຄົນດີມີສິນທັມຫລາຍກວ່າຄົນອື່ນ. ຄຳອ້ອນວອນຂອງຟາຣີຊາຍມີສອງຢ່າງທີ່ຜິດຄື: ອ້າງວ່າຕົນເອງເປັນຄົນດີແລະຂົ່ມຜູ້ອື່ນດ້ວຍຄວາມຜິດຂອງເຂົາ, ດ້ວຍການນີ້ແຫລະພຣະອົງຈຶ່ງຊົງສອນເຮົາຢ່າເປັນຄົນແນວນັ້ນ. ອີກປະການນຶ່ງຄວາມເຊື່ອກໍດີ ການປະຕິບັດກໍດີ ບໍ່ມີໃຜເຊື່ອແລະປະຕິບັດແທນກັນໄດ້ ດັ່ງນັ້ນເຮົາບໍ່ສາມາດເອົາຕົວເຮົາໄປທຽບກັບຜູ້ອື່ນໄດ້.

ຣະວັງການອ້ອນວອນຂອງເຮົາບໍ່ສົມຄວນປຽບທຽບໃສ່ຜູ້ອື່ນ, ການປະຕິບັດສິນທັມຂອງຟາຣີຊາຍນັ້ນດີ ແຕ່ການປາກເວົ້າຂອງລາວບໍ່ຖືກຕ້ອງ ດ້ວຍເຫດນີ້ແຫລະເຮົາທັງຫລາຍສົມຄວນທີ່ຈະຣະວັງໃນການປາກເວົ້າເພາະເຮົາເຄີຽໄດ້ຍິນຄົນເວົ້າກັນວ່າຄົນນີ້ເວົ້າເປັນ ແລະຄົນນັ້ນເວົ້າບໍ່ເປັນ. ໃນໂບດພວກເຮົາກໍເຊັ່ນກັນທຸກຄົນພາກັນເຮັດດີໝົດ ແຕ່ລາງເທື່ອການປາກເວົ້າຂອງເຮົາແຕະຕ້ອງຈິດໃຈຜູ້ອື່ນ. ໜັງກາຕູນແບມບີ (Bambi) ສອນລູກວ່າ *"ຫາກບໍ່ມີຄຳເວົ້າດີໆຈະເວົ້າຢ່າເວົ້າ ຫຍັງເລີຍຍັງດີກວ່າ"*. ສຸພາສິດອັງກິດຄຳນຶ່ງກ່າວວ່າ " A close mouth cathches no flies".

ຫລັກການໆອ້ອນວອນທີ່ຖືກຕ້ອງນັ້ນພຣະເຢຊູຊົງສອນໄວ້ໃນພຣະທັມມັດທາຍບົດ 6 ມີສາມຫລືສີ່ຂັ້ນຕອນດັ່ງນີ້;

1. ເລີ້ມຕົ້ນດ້ວຍການຍົກຍໍສັຣເສີນພຣະນາມ. (Adoration) (ມທ 6:9-11)
2. ສາຣະພາບຄວາມຜິດບາບ. (Confession) (ມທ 6:12)
3. ການທູນຂໍຕ່າງໆ. (Request or asking) (ມທ 6:13)
4. ລົງທ້າຍໂດຍພຣະນາມພຣະເຢຊູ (ຢຮ 14:13-14, 26. 15:16. 16:23-26. )

ສຳລັບຂັ້ນຕອນທີ4 ຍັງມີການຖົກຖຽງກັນໃນຣະວ່າງນັກສາສນາສາດຢູ່ເລື້ອຍມາ, ດ້ວຍວ່າມີບາງກຸ່ມມີຄຳເຫັນວ່າ ຈາກ 1 ເຖິງ 3 ແມ່ນຖືກຕ້ອງຕາມທີ່ພຣະເຢຊູຊົງສອນແທ້ ສ່ວນຂັ້ນຕອນທີ 4 ນັ້ນບໍ່ໄດ້ຫມາຍຄວາມວ່າໃຫ້ລົງທ້າຍດ້ວຍພຣະນາມພຣະເຢຊູ ແຕ່ມີຄວາມໝາຍວ່າໃຫ້ອ້ອນວອນຈາກ 1 ເຖິງສາມໃນນາມພຣະເຢຊູ. ນີ້ຄືຄຳເຫັນບາງກຸ່ມ ດ້ວຍເຫດນີ້ເຮົາຈຶ່ງໄດ້ຍິນຫລາຍຄົນລົງທ້າຍຄຳອ້ອນວອນວ່າ ອາເມນ ເທົ່ານັ້ນ.

ສຳລັບຂ້າພະເຈົ້າມີຄຳເຫັນຮ່ວມກັບກຸ່ມທີ່ເອີ້ນອອກພຣະນາມຊື່ພຣະເຢຊູຄຣິດໃນການລົງທ້າຍຄຳອ້ອນວອນ ດ້ວຍວ່າຂໍ້ພຣະຄັມພີທີ່ໄດ້ອ້າງອີງໃນຂັ້ນຕອນທີ 4 ນັ້ນໄດ້ບົ່ງບອກໃຫ້ອອກນາມຊື່ພຣະເຢຊູຄຣິດ, ແມ່ນແຕ່ Billy Graham ນັກເທດອັນດັບໂລກຍັງອອກພຣະນາມແຫ່ງພຣະເຢຊູຄຣິດ. ອີກປະການນຶ່ງໃນຖານະທີ່ພວກເຮົາເປັນຄົນລາວຈຳເປັນຈະຕ້ອງລົງທ້າຍຄຳອ້ອນວອນໃນພຣະນາມແຫ່ງພຣະເຢຊູຄຣິດ ເພາະວ່າຄົນລາວເຮົາເກືອບທຸກຄົນໄດ້ພາກັນອ້ອນວອນກ່ອນໜ້າເປັນຄຣິສຕຽນ ໂດຍຮ້ອງວ່າ ຈົ່ມສົບຈົ່ມປາກ ໂດຍບໍ່ອອກນາມຊື່ຜູ້ໃດ.

## <u>2. ຄົນເກັບພາສີ</u>

ຄົນເກັບພາສີຜູ້ນັ້ນໄດ້ອ້ອນວອນວ່າ *"ຂ້າແດ່ພຣະເຈົ້າ, ຂໍຊົງໂຜດພຣະເມດຕາແກ່ຂ້າພຣະອົງ ຜູ້ເປັນຄົນບາບແດ່ທ້ອນ"* (ຂໍ້ 13). ຄຳອ້ອນວອນເຊັ່ນນີ້ແມ່ນແຕ່ມະນຸດຟັງກໍຍັງເປັນໜ້າອີຕົນຢູ່ແລ້ວ (ຂ້າພະເຈົ້າກຳລັງເວົ້າເຖິງຜູ້ເຊື່ອທັງຫຼາຍ ທີ່ໄດ້ຍິນແລະໄດ້ຟັງ) ດ້ວຍວ່າເປັນຄຳອ້ອນວອນທີ່ສພາບອ່ອນນ້ອມຂອງລາວ, ຟັງເບິ່ງແລ້ວເຫັນວ່າລາວມີຄວາມຣະທົມຂົມຂື່ນກັບຄວາມຜິດຂອງລາວໆມີຄວາມໂສກເສົ້າເສັຽໃຈທີ່ລາວເອງໄດ້ເຮັດຜິດບາບ. ພຣະເຢຊູຊົງກ່າວໃນພຣະທັມມັດທາຍວ່າ *"ຜູ້ໃດໂສກເສົ້າກໍເປັນສຸກ"* (ມທ 5:4) ການໂສກເສົ້າທີ່ພຣະເຢຊູຊົງກ່າວມີຄວາມໝາຍວ່າ ການໂສກເສົ້າເສັຽໃຈວ່າຕົນເອງເຮັດຜິດແລ້ວກັບໃຈສາຣະພາບເໝືອນຄົນເກັບພາສີຜູ້ນີ້ ລາວກ່າວວ່າ *"ຂໍຊົງໂຜດພຣະເມດຕາແກ່ຂ້າພຣະອົງ ຜູ້ເປັນຄົນບາບແດ່ທ້ອນ"* ຄຳວ່າຂໍຊົງເມດຕາແດ່ ແປວ່າອີຕົນແດ່, ຍົກໂທດຄວາມຜິດແດ່.

ການສາຣະພາບຄວາມຜິດບາບເປັນຂໍກຸນແຈໄຂປະຕູເມືອງສວັນຂອງພຣະເຈົ້າ ແມ່ນການສາຣະພາບດ້ວຍປາກ, ຊຶ່ງຄຳສາຣະພາບນັ້ນອອກມາຈາກໃຈ ພ້ອມທັງນຳໄປເຖິງການປະຕິບັດຕາມຄຳເວົ້າກໍຈະໄດ້ຮັບຄວາມລອດພົ້ນແນ່ນອນ. ຈົ່ງສັງເກດເບິ່ງທ່າທີຂອງຄົນເກັບພາສີ *"ຄົນເກັບພາສີຜູ້ນັ້ນຢືນຢູ່ໄກ ບໍ່ຫານເງີຍໜ້າເບິ່ງຟ້າ ຕີອົກຂອງຕົນກ່າວວ່າ ຂ້າແດ່ພຣະເຈົ້າ, ຂໍຊົງໂຜດພຣະເມດຕາແກ່ຂ້າພຣະອົງ ຜູ້ເປັນຄົນບາບແດ່ທ້ອນ"* ຊຶ່ງເປັນການສແດງອອກວ່າລາວເປັນຄົນບໍ່ມີປໂຍດແລະຈຳຕ້ອງເພິ່ງພຣະເຈົ້າທຸກປະການ. ດ້ວຍຄຳສາຣະພາບທີ່ມີລັກສະນະຢ່າງນີ້ ໄດ້ນຳຄວາມລອດພົ້ນມາເຖິງຜູ້ອ້ອນວອນ ເພາະວ່າພຣະເຈົ້າຊົງພໍພຣະທັຍໃນຄຳອ້ອນວອນເຊັ່ນນັ້ນ.

ຈຸດປະສົງອັນສຳຄັນຂອງພຣະເຢຊູລົງມາບັງເກີດເປັນມະນຸດກໍເພື່ອຊອກຫາຜູ້ຫລົງຫາຍຈາກພຣະເຈົ້າໃຫ້ກັບຄືນຫາພຣະເຈົ້າ *"ດ້ວຍວ່າບຸດມະນຸດໄດ້ມາເພື່ອຈະຊອກຫາແລະໂຜດເອົາຜູ້ຫລົງເສັຽໄປແລ້ວໃຫ້ລອດພົ້ນ"* (ລູກາ 19:10). ດ້ວຍເຫດນີ້ໃຜກໍຕາມທີ່ສາຣະພາບຄວາມຜິດແລະຄວາມບາບພຣະອົງຊົງໂຜດຍົກໂທດໃຫ້. ໃນພຣະທັມສອງຊາມູເອນເຣື່ອງຂອງກະສັດດາວິດແລະນາງບັດເຊບາເຮັດຜິດນັ້ນ ດາວິດສາຣະພາບບາບເພິ່ນຈຶ່ງໄດ້ຮັບການອະພັຍ (໒ ຊາມູເອນ 1໒).

ຣະວັງຢ່າໃຫ້ເຮົາທັງຫລາຍເປັນເໝືອນຟາຣິຊາຍ, ດ້ວຍວ່າບາງເທື່ອເຮົາຄຶດໃນໃຈເຮົາວ່າເຮົາດີກວ່າຄົນທັງຫລາຍທີ່ບໍ່ມາໂບດ ທີ່ເຮົາຮ້ອງເຂົາເຈົ້າວ່າຊາວໂລກ. ອີງຕາມບົດຮຽນບົດນີ້ ຟາຣິຊາຍເປັນຄົນດີ ມີສິນທັມ, ລາວຖວາຍ, ລາວຖືສິນອົດອາຫານ, ລາວຖວາຍນຶ່ງສ່ວນສິບຖືກຕ້ອງຕາມພຣະບັນຍັດທຸກປະການ ເປັນຫຍັງພຣະເຢຊູຈຶ່ງບໍ່ຍົກຍ້ອງລາວ? ສຳລັບເຮົາເດ? ຫາກປຽບທຽບໃສ່ຟາຣິຊາຍເຮົາປະຕິບັດຫລາຍຊ່ຳໃດ? ດ້ວຍເຫດນີ້ແຫລະເຮົາຄວນຣະວັງເຣື່ອງການປາກເວົ້າແລະການອ້ອນວອນຂອງພວກເຮົາ.

**<u>ຄຳຖາມ:</u>**

1. ຄຳອຸປະມານີ້ສອນທ່ານແນວໃດໃນເວລາເຮົາຢູ່ຕໍ່ໜ້າຄົນ, ແລະຕໍ່ພຣະພັກພຣະເຈົ້າ?

໒. ຟາຣິຊາຍເຮັດຖືກ ແຕ່ເວົ້າຜິດຢ່າງໃດ?

3. ຄົນເກັບພາສີເຮັດຜິດແຕ່ເວົ້າຖືກຢ່າງໃດ?

4. ໃນສອງຄົນນີ້ພຣະເຈົ້າພໍພຣະທັຍນຳຄົນໃດ?

5. ທ່ານຈະເປັນຄົນໃດໃນຈຳນວນສອງຄົນນີ້?

## ບົດຮຽນສຳລັບວັນອິສເຕີ
## ຮູ້ຈັກພຣະເຢຊູຜູ້ຊົງຄືນພຣະຊົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 24:13-35
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ລູກາ 24:1-53
**ຈຸດສຳຄັນຂອງບົດຮຽນນີ້:** ການຮູ້ຈັກກັບພຣະເຢຊູຜູ້ຊົງຄືນພຣະຊົນໜູນໃຈພວກເຮົາໃຫ້ບອກເຣື່ອງຂອງພຣະອົງໃຫ້ຄົນອື່ນໄດ້ຮູ້.

**ຄຳຖາມເພື່ອການສຳຣວດ:** ເຮັດວິທີໃດພວກເຮົາຈະມີປະສົບການຫລາຍຂຶ້ນ ເພື່ອຈະແບ່ງປັນຂ່າວປະເສີດເຣື່ອງຂອງພຣະເຢຊູ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຫາວິທີທີ່ຈະໄດ້ປະສົບການ ແລະແບ່ງປັນຂ່າວປະເສີດເຣື່ອງພຣະເຢຊູຜູ້ຊົງຄືນພຣະຊົນ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສ້າງຄົນໃຫ້ເປັນຜູ້ນຳທີ່ມີນ້ຳໃຈຂອງຜູ້ຮັບໃຊ້.

### ຄຳນຳ

ຄວາມແນ່ໃຈວ່າພຣະເຢຊູໄດ້ຊົງຄືນພຣະຊົນມາຈາກຄວາມຕາຍບໍ່ໄດ້ເກີດມາຈາກການໄດ້ຍິນຈາກຄົນອື່ນ, ການສຶກສາຊີວິດຂອງພຣະເຢຊູ, ຫລືການເຂົ້າໃຈຄວາມເລິກລັບຂອງເຫດການ. ຄວາມແນ່ໃຈນັ້ນເກີດມາຈາກປະສົບການສ່ວນຕົວກ່ຽວກັບເຣື່ອງການຊົງເປັນຢູ່ຂອງພຣະເຢຊູໃນຊີວິດຂອງພວກເຮົາ; ສິ່ງເຫລົ່ານີ້ພາໃຫ້ມີຄວາມເຊື່ອແລະໝັ້ນໃຈ.

**ການສົນທະນາ (24:13-32)**

ກະໂລປາ ແລະເພື່ອນຂອງລາວມີຄວາມໂສກເສົ້າຫລາຍ; ເພາະການສິ້ນພຣະຊົນຂອງພຣະເຢຊູເຮັດໃຫ້ຄົນທັງຫລາຍໃນອິສຣາເອັນຜິດຫວັງ (ຂໍ້ 21; ແລະ 1:68; 2:30-32, 38; 21:28, 31). ບ້ານເອມາອູດຕັ້ງຢູ່ປະມານ 80 ໄມທາງທິດຕະເວັນຕົກສ່ຽງເໜືອຂອງກຸງເຢຣູຊາເລັມ. ຊາຍທັງສອງກຳລັງເດີນທາງກັບບ້ານເພື່ອຈະວາງແຜນວ່າພວກເຂົາຈະເຮັດຫຍັງຕໍ່ໄປ. ໃນຂະນະທີ່ພວກເຂົາກຳລັງເດີນທາງນັ້ນ, ພວກເຂົາກໍສົນທະນາກັນເຖິງເຣື່ອງທີ່ເກີດຂຶ້ນ ແລະພາກັນຄິດພິຈາຣະນາວ່າສິ່ງຕ່າງໆເຫລົ່ານັ້ນມີຄວາມໝາຍແນວໃດ. ພວກເຂົາພຍາຍາມທີ່ຈະເຂົ້າໃຈຕາມຄວາມສາມາດອັນມີຂອບເຂດຂອງພວກຕົນ; ແຕ່ພວກເຂົາບໍ່ອາດຈະເຂົ້າໃຈເຖິງເຣື່ອງທີ່ຜູ້ປະກາດພຣະທັມໄດ້ທຳນວາຍໄວ້ວ່າ: ພຣະ

ຄຣິດຈະຕ້ອງທົນທຸກທໍຣະມານແລະຕາຍ ກ່ອນທີ່ຈະໄດ້ເຂົ້າໄປໃນຣັສມີຂອງພຣະອົງ. ທ້າຍສຸດ ພວກເຂົາໄດ້ຮັບຄຳຕອບໃນເຣື່ອງນີ້ ເມື່ອພຣະເຢຊູຊົງປາກົດຕົວ ແລະຊົງສົນທະນາກັບພວກເຂົາໃນຂະນະທີ່ເດີນທາງ.

ຄວາມຈິງແລ້ວ ສາວົກສອງຄົນນີ້ກໍເປັນ "ຜູ້ມີໃຈເສີຍຊ້າໃນການເຊື່ອຖ້ອຍຄຳຊຶ່ງພວກຜູ້ປະກາດພຣະທັມໄດ້ກ່າວໄວ້" (ຂໍ້ 25). ພວກເຂົາອາດຈະເຊື່ອເຣື່ອງຣັສມີຂອງພຣະຄຣິດນັ້ນໄດ້ງ່າຍ, ແຕ່ເຣື່ອງການທົນທຸກທໍຣະມານຂອງພຣະອົງເຫັນວ່າເປັນການຍາກທີ່ຈະເຊື່ອໄດ້ (1 ປຕ 1:8-12). ພຣະເຢຊູໄດ້ເປີດຕາ ແລະເປີດໃຈຂອງພວກເຂົາໃຫ້ເຂົ້າໃຈພຣະທັມ; "ໃຈຂອງພວກເຂົາຮ້ອນຮົນເໝືອນມີໄຟຢູ່ພາຍໃນ" (ຂໍ້ 32). ພວກເຂົາໄດ້ເຫັນພຣະຄຣິດຢູ່ໃນພຣະທັມ, ແຕ່ພວກເຂົາບໍ່ໄດ້ຮູ້ຕົວເລີຍວ່າພຣະອົງກຳລັງຊົງສະເດັດຮ່ວມທາງຢູ່ກັບພວກຕົນ. ແຕ່ເມື່ອພຣະເຢຊູຊົງນັ່ງຮ່ວມໂຕະກັບເຂົາຊົງຈັບເອົາເຂົ້າຈີ່ມາໂມທະນາພຣະຄຸນ ແລ້ວຊົງຍື່ນໃຫ້ເຂົາ, ຕາຂອງພວກເຂົາກໍຖືກເປີດອອກ. ການຊົງເປີດເຜີຍຕົວເອງຂອງພຣະຄຣິດໃນຄັ້ງນີ້ໄດ້ປ່ຽນແປງສາວົກທັງສອງຢ່າງອັສຈັນ. ພວກເຂົາໄດ້ປ່ຽນແປງຈາກຄົນເດີນທາງຜູ້ອິດເມື່ອຍມາເປັນຜູ້ໃຫ້ຄຳພຍານຢ່າງຕື່ນເຕັ້ນ.

## ການຮັບຮອງ (24:33-45)

ດ້ວຍຄວາມຕື່ນເຕັ້ນທີ່ໄດ້ເຫັນພຣະຄຣິດ ສາວົກທັງສອງພາກັນຮີບເດີນທາງກັບໄປເຢຣູຊາເລັມ. ພໍໄປເຖິງພວກເຂົາກໍຮູ້ວ່າພຣະເຢຊູໄດ້ຊົງປາກົດຕົວໃຫ້ເປໂຕເຫັນເຊັ່ນກັນ (1 ກຣທ 15:5; ມຣກ 16:7). ພວກເຮົາບໍ່ຮູ້ລາຍຣະອຽດຂອງການພົບກັນໃນວັນອີສເຕີວັນແລກນີ້ ຣະຫວ່າງພຣະເຢຊູຄຣິດແລະເປໂຕ ແຕ່ພວກເຮົາຮູ້ວ່າໃນມື້ນັ້ນເປໂຕໄດ້ກັບຄືນມາຫາພຣະຜູ້ເປັນເຈົ້າຂອງເຂົາ. ພາຍຫລັງນັ້ນມາ ພຣະເຢຊູກໍໄດ້ຊົງສະຖາປະນາເປໂຕໃຫ້ມາເປັນອັຄສາວົກຂອງພຣະອົງຢ່າງບໍຣິບູນອີກເທື່ອນຶ່ງ (ຢຮ 21).

ຫລັງຈາກນັ້ນພຣະເຢຊູໄດ້ຊົງປາກົດຕົວແກ່ພວກສາວົກອີກໃນວັນຕົ້ນສັປດາໃນຂະນະທີ່ພວກເຂົາກຳລັງຢູ່ໃນຫ້ອງຊັ້ນເທິງຊຶ່ງປະຕູກໍອັດຢູ່ (ຢຮ 20:19-25). ແຕ່ແທນທີ່ພວກສາວົກຈະຕື່ນເຕັ້ນຍິນດີ ພວກເຂົາພາກັນເກີດຄວາມຢ້ານສະດຸ້ງຕົກໃຈ. ພຣະເຢຊູຊົງປອບໃຈພວກເຂົາແລະຊົງໃຫ້ຄວາມໝັ້ນໃຈກັບທຸກຄົນວ່າພຣະອົງຍັງຊົງພຣະຊົນຢູ່. ພຣະອົງໄດ້ຊົງສະແດງບາດແຜທີ່ຢູ່ໃນມືແລະຕີນ (ພສສ 22:16) ແລະທີ່ຂ້າງ (ຢຮ 20:20) ຂອງພຣະອົງໃຫ້ພວກເຂົາເບິ່ງເພື່ອເປັນຫລັກຖານ. ພຣະຄຣິດໄດ້ຊົງສະແດງໃຫ້ສາວົກເຫັນວ່າພຣະອົງບໍ່ແມ່ນຜີ ເມື່ອພຣະອົງຊົງສເວີຍປາແລະນ້ຳເຜິ້ງຢູ່ຕໍ່ໜ້າພວກເຂົາ. ຮ່າງກາຍທີ່ຄືນພຣະຊົນຂອງພຣະອົງປະກອບດ້ວຍເນື້ອແລະກະດູກ (ຂໍ້ 39) ຊຶ່ງສາມາດປາກົດໃຫ້ເຫັນ ແລະຫາຍໄປເມື່ອພຣະອົງສະເດັດຜ່ານປະຕູທີ່ປິດຢູ່.

ໃນຂະນະທີ່ພຣະເຢຊູກຳລັງປາກົດຕົວແກ່ພວກສາວົກນັ້ນພຣະອົງໄດ້ມອບສັນຕິສຸກຂອງພຣະອົງໃຫ້ກັບພວກເຂົາ (ຂໍ້ 36), ສິ່ງນີ້ຄືເຄື່ອງຄ້ຳປະກັນວ່າພຣະອົງໄດ້ຊົງປາກົດຕົວຢ່າງແທ້ຈິງ, ແລະເພື່ອໃຫ້ພວກເຂົາໄດ້ເຂົ້າໃຈພຣະຄັມພີ (ຂໍ້ 45). ຣະຫວ່າງທີ່ພຣະເຢຊູໄດ້ຢູ່ກັບພວກສາວົກເປັນເວລາເຖິງສາມປີນັ້ນ, ພຣະອົງໄດ້ສັ່ງສອນພວກເຂົາຫລາຍໆຢ່າງ; ແຕ່ໃນຕອນນີ້ພຣະອົງຊົງຊ່ວຍໃຫ້ພວກເຂົາໄດ້ເຂົ້າໃຈຢ່າງແຈ່ມແຈ້ງເຖິງເຣື່ອງທຸກຢ່າງທີ່ກ່າວເຖິງພຣະອົງໃນ ພຣະສັນຍາເດີມ ແລະເຖິງເຣື່ອງການຊົງລົງມາໄຖ່ມະນຸສໂລກຂອງພຣະອົງ.

## ຄຳສອນສຳລັບຊີວິດ

ທ່ານເຄີຍໄດ້ຄິດບໍ່ວ່າເຫດການທີ່ເກີດຂຶ້ນໃນວັນນຶ່ງໆຈະມີຄວາມສຳຄັນຫລາຍເທົ່າໃດໃນຊີວິດຂອງມະນຸດ? ທ່ານມີວັນໃດແດ່ຊຶ່ງເປັນຈຸດຂອງການປ່ຽນແປງໃນຊີວິດຂອງທ່ານ? ສຳລັບບາງຄົນອາດຈະເປັນວັນຈົບການຮຽນ, ວັນແຕ່ງງານ, ວັນລູກຄົນທຳອິດເກີດ. ສຳລັບອີກບາງຄົນອາດຈະເປັນວັນເລີ່ມງານໃໝ່, ວັນປົດກະສຽນ, ຫລືເປັນວັນທັມມະດາເມື່ອທ່ານມີຄົນສຳຄັນຜູ້ນຶ່ງແວະມາຢ້ຽມຢາມ. ຕາມປົກກະຕິແລ້ວ ພວກເຮົາແຕ່ລະຄົນຕ່າງກໍມີວັນນຶ່ງທີ່ພວກເຮົາເຫັນວ່າມີຄວາມໝາຍຫລາຍ ເພາະວັນນັ້ນເປັນວັນທີ່ປ່ຽນແປງຊີວິດຂອງພວກເຮົາຕລອດໄປ.

ແຕ່ພວກເຮົາບໍ່ສາມາດທີ່ຈະປຽບທຽບວັນສຳຄັນເຫລົ່ານັ້ນ ກັບວັນທີ່ພຣະຄຣິດໄດ້ຊົງຄືນມາຈາກຄວາມຕາຍ; ພຣະອົງຊົງກັບມີຊີວິດ ແລະຊົງຢູ່ໃນໂລກ; ພຣະອົງຊົງພຣະປະສົງທີ່ຈະສຳພັດກັບຊີວິດຂອງພວກເຮົາ. ພວກສາວົກທັງຫລາຍໄດ້ພົບກັບອຸປສັກນາໆປະການເຊັ່ນການຖືກຂົ່ມເຫັງແລະການຖືກຕໍ່ຕ້ານຂັດຂວາງ. ສິ່ງນຶ່ງທີ່ຊ່ວຍໃຫ້ພວກເຂົາສູ້ທົນຕໍ່ຄວາມຍາກລຳບາກໄດ້ບໍ່ແມ່ນຄຳສອນຂອງອົງພຣະເຢຊູຄຣິດ ຫລືເຣື່ອງການຊົງປິ່ນປົວຄົນປ່ວຍ ຫລືການຊົງລ້ຽງຄົນຫລາຍພັນຄົນ; ແຕ່ແມ່ນຄວາມໝັ້ນໃຈວ່າພຣະເຢຊູຍັງຊົງພຣະຊົນຢູ່ ແລະພຣະອົງຊົງຢູ່ກັບພວກເຂົາ. ພວກເຂົາໄດ້ຮູ້ກັບພຣະອົງຜູ້ຊົງຄືນມາຈາກຄວາມຕາຍ.

ພຣະເຈົ້າຊົງຄືນພຣະຊົນ! ພຣະອົງຊົງຄືນພຣະຊົນແນ່ແທ້!

<u>ຄຳຖາມ:</u>

1. ທ່ານຄິດວ່າແມ່ນຫຍັງຄືຄວາມໝາຍ ຫລືຜົນສະທ້ອນສິ່ງທຳອິດຈາກເຣື່ອງການຊົງຄືນພຣະຊົງຂອງພຣະເຢຊູ?

2. ທ່ານມີຄຳອະທິບາຍແນວໃດແດ່ ກ່ຽວກັບການທີ່ພວກສາວົກທັງສອງບໍ່ຈື່ໜ້າພຣະເຢຊູ?

3. ທ່ານຄິດວ່າຫລາຍໆຄົນໃນສມັຍນີ້ອາດຈະມີບັນຫາແບບດຽວກັບພວກສາວົກສອງຄົນທີ່ເບິ່ງບໍ່ເຫັນພຣະເຢຊູທັ້ງໆທີ່ພຣະອົງຊົງຢູ່ກັບພວກເຂົາ ແລະຊົງສົນທະນາກັບພວກເຂົາ? ກະຣຸນາອະທິບາຍຄວາມຮູ້ສຶກຂອງທ່ານ.

4. ທ່ານຄິດວ່າແມ່ນຫຍັງຄືສິ່ງສຳຄັນທີ່ສຸດທີ່ຈະຊ່ວຍຄົນທີ່ມັກສົງສັຍໃນສມັຍນີ້ ໃຫ້ໄດ້ເຫັນແລະໄດ້ຮັບພຣະເຢຊູ ມາເປັນພຣະເຈົ້າຂອງພວກເຂົາ?

5. ແມ່ນຫຍັງຄືສິ່ງທີ່ຊ່ວຍຕົວທ່ານເອງໃຫ້ໄດ້ມີປະສົບການກັບຄວາມຈິງວ່າພຣະເຢຊູຍັງຊົງພຣະຊົນຢູ່?